ກໍ່ສ້າງພັກ

ວາລະສານເຜີຍແຜ່, ແນະນຳວຽກງານຈັດຕັ້ງ, ກໍ່ສ້າງພັກ-ພະນັກງານ
ຂອງຄະນະຈັດຕັ້ງສູນກາງພັກ

ຜັນຂະຫຍາຍມະຕິກອງປະຊຸມໃຫຍ່ ຜູ້ແທນທົ່ວປະເທດ ຄັ້ງທີ XI ຂອງພັກໃຫ້ປະກົດຜົນເປັນຈິງ

ທິວທັດເມືອງວຽງໄຊ ແຂວງຫົວພັນ

ສະບັບ: 265 ປະຈຳປີ 2024/3

korsangphakmagazine@gmail.com

ວັນທີ 6 ພຶດສະພາ 2024 ທ່ານ ນ. ສີໃສ ລືເດດມູນສອນ ກຳມະການກົມການເມືອງສູນກາງພັກ, ເລຂາທິການສູນກາງພັກ, ຫົວໜ້າຄະນະຈັດຕັ້ງສູນກາງພັກ ພ້ອມດ້ວຍຄະນະ ໄດ້ຕ້ອນຮັບການເຂົ້າຢ້ຽມຂໍ່ານັບອຳລາຂອງທ່ານ ໂຄບາຢາຊິ ເຄັນອິຈິ ເອກອັກຄະຣາຊະທູດຍີ່ປຸ່ນປະຈຳ ສປປ ລາວ ພ້ອມດ້ວຍຄະນະ, ພາຍຫຼັງສຳເລັດການປະຕິບັດໜ້າທີ່ການທູດ ຢູ່ ສປປ ລາວ.

ໃນວັນທີ 21 ພຶດສະພາ 2024 ຄະນະຈັດຕັ້ງສູນກາງພັກ ໄດ້ຈັດກອງປະຊຸມປະກອບຄຳເຫັນໃສ່ຮ່າງບົດລາຍງານການຈັດຕັ້ງປະຕິບັດກົດລະບຽບພັກປະຊາຊົນປະຕິວັດລາວ ສະໄໝທີ XI ໂດຍການເປັນປະທານຂອງສະຫາຍ ນ. ສີໃສ ລືເດດມູນສອນ ກຳມະການກົມການເມືອງສູນກາງພັກ, ເລຂາທິການສູນກາງພັກ, ເລຂາຄະນະພັກ, ຫົວໜ້າຄະນະຈັດຕັ້ງສູນກາງພັກ, ມີຄະນະພັກ ຄຈສພ, ຄະນະກົມ ແລະ ຄະນະພະແນກທີ່ກ່ຽວຂ້ອງເຂົ້າຮ່ວມ.

ໃນວັນທີ 20 ພຶດສະພາ 2024 ຄະນະຈັດຕັ້ງສູນກາງພັກ ໄດ້ຈັດພິທີປິດໂຄງການ "ສ້າງຄວາມເຂັ້ມແຂງໃຫ້ແກ່ພະນັກງານນຳພາ-ຄຸ້ມຄອງຂະແໜງຈັດຕັ້ງຂອງ ສປປ ລາວ" ຢູ່ທີ່ໂຮງແຮມເສດຖາປາຣາຊ໌ ໂດຍໃຫ້ກຽດເຂົ້າຮ່ວມເປັນປະທານຂອງສະຫາຍ ນ. ບຸດສະດີ ທະນະເມືອງ ກຳມະການສູນກາງພັກ, ຮອງເລຂາຄະນະພັກ, ຮອງຫົວໜ້າຄະນະຈັດຕັ້ງສູນກາງພັກ, ມີຄະນະພັກ ຄຈສພ, ຄະນະຮັບຜິດຊອບໂຄງການ, ມີຕາງໜ້າສະຖານທູດ ສປ ຈີນ ປະຈຳລາວ, ບັນດາສະຫາຍຮອງເລຂາພັກແຂວງ, ຫົວໜ້າກົມກະຊວງ-ອົງການ, ຫົວໜ້າຄະນະຈັດຕັ້ງແຂວງເຂົ້າຮ່ວມຢ່າງພ້ອມພຽງ.

ໃນວັນທີ 16 ພຶດສະພາ 2024 ຄະນະຈັດຕັ້ງສູນກາງພັກ (ຄຈສພ) ໄດ້ຈັດກອງປະຊຸມສະຫຼຸບວຽກງານກວດກາພາຍໃນ ຄຈສພ ແລະ ເຜີຍແຜ່ເນື້ອໃນກອງປະຊຸມວຽກງານກວດກາທົ່ວປະເທດ ປະຈຳປີ 2023 ພ້ອມກັບວາງທິດທາງແຜນການ ປະຈຳປີ 2024 ພາຍໃຕ້ການເປັນປະທານຂອງສະຫາຍ ທອງຈັນ ໄຊພູມຄຳ ກຳມະການປະຈຳພັກ, ຮອງຫົວໜ້າຄະນະຈັດຕັ້ງສູນກາງພັກ, ປະທານກວດກາ ຄຈສພ, ມີພະນັກງານຂັ້ນກົມ ແລະ ຂັ້ນພະແນກເຂົ້າຮ່ວມ.

ໃນວັນທີ 17 ພຶດສະພາ 2024 ຄະນະຈັດຕັ້ງສູນກາງພັກ ໄດ້ຈັດພິທີເຜີຍແຜ່-ປາຖະກະຖາວັນສຳຄັນ ຂອງພັກ, ຂອງຊາດ ແລະ ສາກົນ ໃຫ້ແກ່ສະມາຊິກພັກ, ພະນັກງານພາຍໃນ ຄຈສພ ໂດຍການເຜີຍແຜ່ ຂອງສະຫາຍ ທອງຈັນ ໂຊງພູມຄຳ ຮອງຫົວໜ້າຄະນະຈັດຕັ້ງສູນກາງພັກ, ທ່ານ ປອ. ວິສຸກ ພົມພິທັກ ຮອງຫົວໜ້າຄະນະ ຈັດຕັ້ງສູນກາງພັກ ແລະ ທ່ານ ພອນສານ ວິໄລເມົ້ງ ຮອງປະທານຄະນະບໍລິຫານງານສູນກາງກຳມະບານລາວ.

ໃນວັນທີ 27 ພຶດສະພາ 2024 ສຳນັກພິມ ແລະ ຈຳໜ່າຍປຶ້ມແຫ່ງລັດ ນຳພາໂດຍທ່ານ ໄຊຍະພອນ ອານຸລາດ ອຳນວຍການສຳນັກພິມ ແລະ ຈຳໜ່າຍປຶ້ມແຫ່ງລັດ ພ້ອມດ້ວຍຄະນະ ໄດ້ມອບປຶ້ມເນື້ອໃນກ່ຽວກັບຂົງເຂດເສດຖະກິດ, ວັດທະນະທຳ-ສັງຄົມ, ຂົງເຂດການເມືອງ-ແນວຄິດ ແລະ ຂົງເຂດອື່ນໆ ຈຳນວນ 150 ຫົວ ໃຫ້ແກ່ ຄຈສພ ເພື່ອເປັນຂໍ້ມູນໃນການຄົ້ນຄວ້າ, ຮໍ່າຮຽນ ແລະ ນຳໃຊ້ເຂົ້າໃນວຽກງານຕ່າງໆ, ຕາງໜ້າ ຄຈສພ ຮັບໂດຍ ທ່ານ ວຽນທອງ ສິງຄຳພັນ ກຳມະການພັກ ຫົວໜ້າຫ້ອງການ ພ້ອມດ້ວຍຄະນະ.

ບາງເນື້ອໃນ ມະຕິກອງປະຊຸມຄົບຄະນະກາງສະໄໝ ຂອງຄະນະບໍລິຫານງານສູນກາງພັກ ຄັ້ງທີ 7 ສະໄໝທີ XI ກ່ຽວກັບການກະກຽມ ແລະ ດຳເນີນກອງປະຊຸມໃຫຍ່ 3 ຂັ້ນຂອງພັກ

ໂດຍ: ສູນທອນ ທອງຊະນະ

ເພື່ອສະຫຼຸບຕີລາຄາສະພາບການຮອບດ້ານໃນໄລຍະຜ່ານມາ ກໍ່ຄືການຈັດຕັ້ງຜັນຂະຫຍາຍມະຕິກອງປະຊຸມໃຫຍ່ ຄັ້ງທີ XI ຂອງພັກ ພ້ອມທັງປຶກສາຫາລື ແລະ ໃຫ້ທິດສຳລັບວຽກງານໃນປີຕໍ່ໜ້າໂດຍລົງເລິກກ່ຽວກັບແຜນພັດທະນາເສດຖະກິດ-ສັງຄົມ, ແຜນງົບປະມານເງິນຕາ ປະຈຳປີ 2023 ແລະ ທິດທາງແຜນການປະຈຳປີ 2024 ຕິດພັນກັບການຈັດຕັ້ງປະຕິບັດ 2 ວາລະແຫ່ງຊາດ ວ່າດ້ວຍການແກ້ໄຂຄວາມຫຍຸ້ງຍາກດ້ານເສດຖະກິດ-ການເງິນ ແລະ ການແກ້ໄຂຢາເສບຕິດ. ກອງປະຊຸມຄົບຄະນະຄັ້ງນີ້ ກໍ່ໄດ້ອອກມະຕິສະແດງຄວາມເປັນເອກະພາບຕໍ່ບັນດາບັນຫາສຳຄັນຈຳນວນໜຶ່ງທີ່ພົວພັນກັບທັດສະນະ ແລະ ທິດຊີ້ນຳຂອງພັກຕໍ່ວຽກງານກະກຽມ ແລະ ດຳເນີນກອງປະຊຸມໃຫຍ່ 3 ຂັ້ນຂອງພັກ. ຊ່ວຍໃຫ້ຄະນະພັກແຕ່ລະຂັ້ນ, ສະມາຊິກພັກແຕ່ລະສະຫາຍກຳໄດ້ ເພື່ອນຳໄປຈັດຕັ້ງປະຕິບັດໃຫ້ບັນລຸຜົນ. ຜູ້ຂຽນໄດ້ຄັດຈ້ອນມະຕິສະບັບນີ້ພຽງແຕ່ເນື້ອໃນທີ່ເວົ້າເຖິງການກະກຽມ ແລະ ດຳເນີນກອງປະຊຸມໃຫຍ່ 3 ຂັ້ນຂອງພັກ ມາສະເໜີຕໍ່ບັນດາເພື່ອນຜູ້ອ່ານ; ກ່ຽວກັບເນື້ອໃນມະຕິກອງປະຊຸມຄົບຄະນະຂອງຄະນະບໍລິຫານງານພັກ ຄັ້ງທີ 7 ສະໄໝທີ XI ໄດ້ເປັນເອກະພາບສູງດ້ານທັດສະນະຕໍ່ການກະກຽມ ແລະ ດຳເນີນກອງປະຊຸມໃຫຍ່ 3 ຂັ້ນຂອງພັກເພື່ອແນໃສ່ປັບປຸງພາຍໃນພັກໃຫ້ມີຄວາມປອດໃສ, ເຂັ້ມແຂງ, ໜັກແໜ້ນ ແລະ ຮັບປະກັນການກໍ່ສ້າງພັກຖືກຕ້ອງ ຕາມກົດລະບຽບພັກ ເປັນຕົ້ນແມ່ນ: ການຍູ້ແຮງການປະຕິບັດມະຕິກອງປະຊຸມໃຫຍ່ ຄັ້ງທີ XI ຂອງພັກ, ແຜນພັດທະນາເສດຖະກິດ-ສັງຄົມ ແຫ່ງລັດ 5 ປີ ຄັ້ງທີ IX ແລະ ມະຕິກອງປະຊຸມໃຫຍ່ຂອງອົງຄະນະພັກແຕ່ລະຂັ້ນ ໃຫ້ດຳເນີນໄປຢ່າງຖືກທິດ ແລະ ມີຜົນສຳເລັດ; ການກະກຽມກອງປະຊຸມໃຫຍ່ 3 ຂັ້ນຂອງພັກ ຕ້ອງສ່ອງແສງໃຫ້ເຫັນການເສີມຂະຫຍາຍປະຊາທິປະໄຕ, ເຊີດຊູສະຕິປັນຍາ, ຄວາມເປັນເຈົ້າການ ຂອງຄະນະພັກແຕ່ລະຂັ້ນ; ການສະຫຼຸບຕີລາຄາ ແລະ ການກຳນົດທິດຍຸດທະສາດ ບົນພື້ນຖານຫຼັກວິທະຍາສາດ, ຄວາມເປັນຈິງ, ພາວະວິໄສ, ຖືກກັບຈຸດພິເສດທ່າແຮງຂອງຂະແໜງການ ແລະ ທ້ອງຖິ່ນ; ບົນຈິດໃຈນັ້ນ ສະຫາຍເລຂາຄະນະພັກ, ຄະນະປະຈຳພັກແຕ່ລະຂັ້ນ ຕ້ອງນຳພາຢ່າງໃກ້ຊິດ, ແທດເຖິງ, ເປັນເຈົ້າການ ແລະ ຍົກສູງຄວາມຮັບຜິດຊອບໂດຍກົງຕໍ່ກັບການກະກຽມກອງປະຊຸມໃຫຍ່ 3 ຂັ້ນ ຢ່າງຮອບດ້ານ, ຖືກຕ້ອງ, ສອດຄ່ອງກັບທິດຊີ້ນຳຂອງສູນກາງພັກ ແລະ ບັນດານິຕິກຳທີ່ກ່ຽວຂ້ອງຕ່າງໆ.

ເພື່ອໃຫ້ບັນລຸຕາມເນື້ອໃນຈິດໃຈດັ່ງກ່າວນັ້ນ ກ່ອນອື່ນໝົດຕ້ອງກຳແໜ້ນ, ເອົາໃຈໃສ່ຈັດຕັ້ງປະຕິບັດຄຳສັ່ງ, ຄຳແນະນຳ, ລະບຽບຫຼັກການ ຫັນສູ່ການ

ຈັດຕັ້ງປະຕິບັດຕົວຈິງ ເປັນຕົ້ນໃນດ້ານຂະບວນການ, ເນື້ອໃນ ແລະ ດ້ານບຸກຄະລາກອນ ເວົ້າລວມ, ເວົ້າສະເພາະ ການກະກຽມທາງດ້ານບຸກຄະລາກອນ ເປັນບັນຫາໜຶ່ງສຳຄັນທີ່ຕ້ອງໄດ້ເອົາໃຈໃສ່ເປັນພິເສດ ເພາະແມ່ນບັນຫາທີ່ລະອຽດອ່ອນທີ່ມີບົດບາດຕັດສິນໃນການນຳພາຂອງພັກແຕ່ລະຂັ້ນ; ສະນັ້ນຄະນະຮັບຜິດຊອບ ກໍ່ຄືຄະນະພັກແຕ່ລະຂັ້ນຕ້ອງໄດ້ເອົາໃຈໃສ່ບາງເນື້ອໃນລະອຽດດັ່ງນີ້:

1. ທັດສະນະໃນການເລືອກເຟັ້ນບຸກຄະລາກອນຂອງຄະນະພັກແຕ່ລະຂັ້ນ.

- ການເລືອກເຟັ້ນບຸກຄະລາກອນ ອອກສະໝັກຮັບເລືອກຕັ້ງເຂົ້າໃນໂຄງປະກອບບຸກຄະລາກອນຄະນະບໍລິຫານງານພັກແຕ່ລະຂັ້ນ ຕ້ອງຮັບປະກັນໃຫ້ຖືກຕ້ອງຕາມກົດລະບຽບພັກ, ມາດຕະຖານ, ເງື່ອນໄຂຕາມນິຕິກຳ ຂອງພັກກຳນົດໄວ້, ຄັດເລືອກຈາກເປົ້າໝາຍຢູ່ໃນແຜນກຳນົດພະນັກງານນຳພາ-ຄຸ້ມຄອງ, ພະນັກງານ, ສະມາຊິກພັກ ທີ່ມີຜົນສຳເລັດໃນການຈັດຕັ້ງປະຕິບັດໜ້າທີ່ວຽກງານ ທີ່ໄດ້ຮັບການມອບໝາຍໃນແຕ່ລະໄລຍະ, ທັງແມ່ນຜູ້ທີ່ໄດ້ຮັບຄວາມເຊື່ອໝັ້ນໄວ້ວາງໃຈຈາກພະນັກງານ, ສະມາຊິກພັກ ແລະ ປະຊາຊົນບັນດາເຜົ່າ;

- ການເລືອກເຟັ້ນບຸກຄະລາກອນ ອອກສະໝັກຮັບເລືອກຕັ້ງເຂົ້າໃນໂຄງປະກອບບຸກຄະລາກອນຄະນະບໍລິຫານງານພັກແຕ່ລະຂັ້ນ ຕ້ອງຮັບປະກັນໂຄງປະກອບເພດ, ເຜົ່າ, ຮຸ່ນ (ອາວຸໂສ, ກາງ, ໜຸ່ມ), ມີທັງຜູ້ເກົ່າ, ຜູ້ໃໝ່ ໃນອັດຕາສ່ວນທີ່ເໝາະສົມ; ສູ້ຊົນໃຫ້ໂຄງປະກອບເພດຍິງ, ຊົນເຜົ່າ ມີຈຳນວນເພີ່ມຂຶ້ນ ຕາມຈຸດພິເສດສະເພາະຂອງຄະນະພັກ ແຕ່ລະຂັ້ນ; ໃນນັ້ນ, ຮຸ່ນກາງ ແລະ ຮຸ່ນໜຸ່ມ ໃຫ້ກວມອັດຕາສ່ວນຫຼາຍ, ແນໃສ່ຮັບປະກັນ ລັກສະນະສືບທອດປ່ຽນແທນ, ຕໍ່ເນື່ອງ ໃນສະເພາະໜ້າ, ຍາວນານ ຕາມທິດທັນເປັນໜຸ່ມ; ພ້ອມກັນນີ້ ໃຫ້ເອົາໃຈໃສ່ເລືອກເຟັ້ນເອົາຄະນະພັກຮາກຖານ ແລະ ຄະນະໜ່ວຍພັກບ້ານທີ່ມີມາດຕະຖານ, ເງື່ອນໄຂ ຄົບຖ້ວນປະກອບເຂົ້າໃນໂຄງປະກອບຂອງຄະນະບໍລິຫານງານພັກເມືອງ-ນະຄອນຊຸດໃໝ່;

- ຕ້ອງປະຕິບັດຖືກຕ້ອງຕາມຫຼັກການ, ຂັ້ນຕອນຢ່າງເຂັ້ມງວດ, ພາວະວິໄສ, ເສີມຂະຫຍາຍປະຊາທິປະໄຕ, ສະຕິປັນຍາຂອງລວມໝູ່ຄະນະພັກ ແລະ ພະນັກງານ, ສະມາຊິກພັກ ໃນການຈັດຕັ້ງພັກ;

- ສຳລັບອົງຄະນະພັກ ທີ່ດຳເນີນກອງປະຊຸມໃຫຍ່ຜູ້ແທນ ຜູ້ຈະສະໝັກຮັບເລືອກຕັ້ງເຂົ້າໃນຄະນະບໍລິຫານງານພັກຊຸດໃໝ່ ຕ້ອງໄດ້ຜ່ານການທາບທາມຄຳເຫັນຂອງສະມາຊິກພັກ ແລະ ພະນັກງານຫຼັກແຫຼ່ງ 3 ຮອບ; ສຳລັບອົງຄະນະພັກ ແລະ ຮາກຖານພັກ ທີ່ດຳເນີນກອງປະຊຸມໃຫຍ່ສະມາຊິກພັກ ຕ້ອງໄດ້ຜ່ານການທາບທາມ 2 ຮອບ.

2. ໂຄງປະກອບຄະນະບໍລິຫານງານພັກ ຊຸດໃໝ່. ຮັບປະກັນ 3 ຮຸ່ນຄື: ຮຸ່ນອາວຸໂສ, ຮຸ່ນກາງ, ຮຸ່ນໜຸ່ມ; ໃນນັ້ນ ຮຸ່ນກາງ ແລະ ຮຸ່ນໜຸ່ມ ໃຫ້ກວມອັດຕາສ່ວນຫຼາຍ; ໃຫ້ມີທັງຜູ້ເກົ່າ, ຜູ້ໃໝ່, ຊົນເຜົ່າ ແລະ ເພດຍິງ ອັດຕາສ່ວນທີ່ເໝາະສົມ ເຂົ້າໃນໂຄງປະກອບຄະນະບໍລິຫານງານພັກ; ສຳລັບອົງຄະນະພັກເມືອງ-ນະຄອນ ເອົາໃຈໃສ່ເລືອກເຟັ້ນເອົາເລຂາຄະນະພັກຮາກຖານບ້ານ ແລະ ເລຂາໜ່ວຍພັກບ້ານ ໃຫ້ມີຈຳນວນເພີ່ມຂຶ້ນ ໃນອັດຕາສ່ວນທີ່ເໝາະສົມ.

3. ການກຳນົດຈຳນວນຄະນະບໍລິຫານງານພັກ ແລະ ຄະນະປະຈຳພັກແຕ່ລະຂັ້ນ.

- ການກຳນົດຈຳນວນຄະນະບໍລິຫານງານພັກຂັ້ນໃດ ແມ່ນກອງປະຊຸມຄົບຄະນະບໍລິຫານງານພັກ

ຂັ້ນນັ້ນ ເປັນຜູ້ຄົ້ນຄວ້າ ບົນພື້ນຖານໂຄງປະກອບກົງຈັກການຈັດຕັ້ງ, ຈໍານວນສະມາຊິກພັກ, ຄວາມຮຽກຮ້ອງຕ້ອງການຂອງໜ້າທີ່ການເມືອງ ແລະ ອີງຕາມສະພາບຄວາມເປັນຈິງຂອງຖັນແຖວພະນັກງານ, ສະມາຊິກພັກທີ່ຈະປະກອບ ເຂົ້າໃນຄະນະບໍລິຫານງານພັກຂັ້ນຕົນ ເພື່ອນໍາສະເໜີຄະນະພັກຂັ້ນເທິງ ຖັດຕົນພິຈາລະນາຕົກລົງ;

- ຈໍານວນຄະນະປະຈໍາພັກ ແຕ່ລະຂັ້ນ: ອີງຄະນະພັກໃດ ມີຈໍານວນກໍາມະການຄະນະພັກ 09 ສະຫາຍຂຶ້ນໄປ ຈຶ່ງກໍານົດໃຫ້ມີຄະນະປະຈໍາພັກ, ແຕ່ຈໍານວນກໍາມະການຄະນະປະຈໍາພັກ ສູງສຸດບໍ່ໃຫ້ເກີນ 1/3 ຂອງຈໍານວນ ຄະນະບໍລິຫານງານພັກ ຂັ້ນນັ້ນ.

4. ເປົ້າໝາຍຄັດເລືອກປະກອບເຂົ້າໃນຄະນະບໍລິຫານງານພັກ ແຕ່ລະຂັ້ນ.

- ຂັ້ນກະຊວງ-ອົງການ: ຄະນະບໍລິຫານງານພັກ ຊຸດເກົ່າ, ຮອງເລຂາຄະນະພັກຮາກຖານ, ຮອງເລຂາໜ່ວຍພັກ; ສະມາຊິກພັກສົມບູນ ທີ່ມີຕໍາແໜ່ງບໍລິຫານຮອງຫົວໜ້າກົມ ແລະ ຕໍາແໜ່ງທຽບເທົ່າ ຂຶ້ນໄປ;

- ຂັ້ນແຂວງ-ນະຄອນຫຼວງ: ຄະນະບໍລິຫານງານພັກ ຊຸດເກົ່າ, ຮອງເລຂາຄະນະພັກຮາກຖານ, ຮອງເລຂາໜ່ວຍພັກບັນດາພະແນການອ້ອມຂ້າງແຂວງ-ນະຄອນຫຼວງ; ສະມາຊິກພັກສົມບູນ ທີ່ມີຕໍາແໜ່ງບໍລິຫານຮອງຫົວໜ້າພະແນກ; ຫົວໜ້າ, ຮອງຫົວໜ້າກອງບັນຊາການທະຫານ, ຫົວໜ້າ, ຮອງຫົວໜ້າກອງບັນຊາການປ້ອງກັນຄວາມສະຫງົບ; ຄະນະປະຈໍາສະພາປະຊາຊົນຂັ້ນແຂວງ-ນະຄອນຫຼວງ, ຮອງເລຂາພັກເມືອງ-ນະຄອນ, ຮອງເຈົ້າເມືອງ-ນະຄອນ ແລະ ທຽບເທົ່າຂຶ້ນໄປ;

- ຂັ້ນເມືອງ-ນະຄອນ: ຄະນະບໍລິຫານງານພັກ ຊຸດເກົ່າ, ເລຂາ, ຮອງເລຂາ ຄະນະພັກຮາກຖານ, ເລຂາ, ຮອງເລຂາໜ່ວຍພັກ ບັນດາຫ້ອງການອ້ອມຂ້າງເມືອງ-ນະຄອນ; ສະມາຊິກພັກສົມບູນ ທີ່ມີຕໍາແໜ່ງບໍລິຫານຮອງຫົວໜ້າຫ້ອງການ ແລະ ທຽບເທົ່າປະຈໍາເມືອງ-ນະຄອນ; ຫົວໜ້າ, ຮອງຫົວໜ້າກອງບັນຊາການທະຫານ ແລະ ຫົວໜ້າ, ຮອງຫົວໜ້າກອງບັນຊາການປ້ອງກັນຄວາມສະຫງົບເມືອງ-ນະຄອນ; ເລຂາຄະນະພັກຮາກຖານບ້ານ ແລະ ເລຂາໜ່ວຍພັກບ້ານ;

- ຂັ້ນຮາກຖານ.

+ ຮາກຖານພັກອ້ອມຂ້າງກະຊວງ-ອົງການ:

ຄະນະພັກຮາກຖານ: ຄະນະພັກຮາກຖານ ຊຸດເກົ່າ, ເລຂາ, ຮອງເລຂາໜ່ວຍພັກ ທີ່ຂຶ້ນກັບຄະນະພັກຮາກຖານ ແລະ ສະມາຊິກພັກສົມບູນ ທີ່ມີຕໍາແໜ່ງບໍລິຫານຫົວໜ້າພະແນກ ແລະ ທຽບເທົ່າ ຂຶ້ນໄປ; ໜ່ວຍພັກ: ຄະນະໜ່ວຍພັກ ຊຸດເກົ່າ ແລະ ສະມາຊິກພັກສົມບູນ ທີ່ມີຕໍາແໜ່ງບໍລິຫານຮອງຫົວໜ້າພະແນກ ແລະ ທຽບເທົ່າ ຂຶ້ນໄປ.

+ ຮາກຖານພັກອ້ອມຂ້າງແຂວງ-ນະຄອນຫຼວງ:

ຄະນະພັກຮາກຖານ: ຄະນະພັກຮາກຖານ ຊຸດເກົ່າ, ເລຂາ, ຮອງເລຂາໜ່ວຍພັກ ທີ່ຂຶ້ນກັບຄະນະພັກຮາກຖານ ແລະ ສະມາຊິກພັກສົມບູນ ທີ່ມີຕໍາແໜ່ງບໍລິຫານຫົວໜ້າຂະແໜງ ແລະ ທຽບເທົ່າ ຂຶ້ນໄປ;

ໜ່ວຍພັກ: ຄະນະໜ່ວຍພັກ ຊຸດເກົ່າ ແລະ ສະມາຊິກພັກສົມບູນ ທີ່ມີຕໍາແໜ່ງບໍລິຫານຮອງຫົວໜ້າຂະແໜງ ແລະ ທຽບເທົ່າ ຂຶ້ນໄປ.

+ ຮາກຖານພັກອ້ອມຂ້າງເມືອງ-ນະຄອນ:

ຄະນະພັກຮາກຖານ: ຄະນະພັກຮາກຖານ ຊຸດເກົ່າ, ເລຂາ, ຮອງເລຂາໜ່ວຍພັກ ທີ່ຂຶ້ນກັບຄະນະພັກຮາກຖານ ແລະ ສະມາຊິກພັກສົມບູນ ທີ່ມີຕໍາແໜ່ງບໍລິຫານຫົວໜ້າໜ່ວຍງານ ແລະ ທຽບເທົ່າ ຂຶ້ນໄປ;

ໜ່ວຍພັກ: ຄະນະໜ່ວຍພັກ ຊຸດເກົ່າ ແລະ ສະມາຊິກພັກສົມບູນ ທີ່ມີຕໍາແໜ່ງບໍລິຫານຮອງຫົວໜ້າ

ໜ່ວຍງານ ແລະ ທຽບເທົ່າ ຂຶ້ນໄປ.

+ ຮາກຖານພັກບ້ານ:

ຄະນະພັກຮາກຖານ: ຄະນະພັກຮາກຖານ ຊຸດເກົ່າ ແລະ ເລຂາ, ຮອງເລຂາໜ່ວຍພັກ ທີ່ຂຶ້ນກັບຄະນະພັກຮາກຖານ, ນາຍບ້ານ, ຮອງນາຍບ້ານ ແລະ ຫົວໜ້າໜ່ວຍງານຂອງບ້ານ ທີ່ເປັນສະມາຊິກພັກສົມບູນ;

ໜ່ວຍພັກບ້ານ: ຄະນະໜ່ວຍພັກ ຊຸດເກົ່າ ແລະ ນາຍບ້ານ, ຮອງນາຍບ້ານ, ຫົວໜ້າ ແລະ ຮອງຫົວໜ້າໜ່ວຍງານ ຂອງບ້ານ ທີ່ເປັນສະມາຊິກພັກສົມບູນ.

5. ການທາບທາມບຸກຄະລາກອນຄະນະບໍລິຫານງານພັກແຕ່ລະຂັ້ນ.

- ກະຊວງ-ອົງການ ທີ່ຈະດໍາເນີນກອງປະຊຸມໃຫຍ່ສະມາຊິກພັກ ໃຫ້ດໍາເນີນການທາບທາມ 2 ຮອບຄື:

ຮອບທີ 1: ເປົ້າໝາຍເຂົ້າຮ່ວມທາບທາມປະກອບດ້ວຍຄະນະບໍລິຫານງານພັກ ຊຸດເກົ່າ ແລະ ສະມາຊິກພັກສົມບູນທັງໝົດ; ເປົ້າໝາຍອອກທາບທາມ: ມີຄະນະພັກຊຸດເກົ່າ ແລະ ສະເໜີເປົ້າໝາຍໃໝ່ ແຕ່ 1-3 ສະຫາຍ;

ການຈັດຕັ້ງທາບທາມຄະນະປະຈໍາພັກ; ເລຂາ, ຮອງເລຂາຄະນະພັກ; ປະທານ ແລະ ຮອງປະທານຄະນະກວດກາພັກ: ເປົ້າໝາຍອອກທາບທາມປະກອບດ້ວຍຄະນະປະຈໍາພັກ; ເລຂາ, ຮອງເລຂາຄະນະພັກ; ປະທານ ແລະ ຮອງປະທານຄະນະກວດກາພັກ ຊຸດເກົ່າ ແລະ ສະເໜີເປົ້າໝາຍໃໝ່ແຕ່ 1-3 ສະຫາຍ.

ຮອບທີ 2: ເປົ້າໝາຍເຂົ້າຮ່ວມທາບທາມປະກອບດ້ວຍຄະນະບໍລິຫານງານພັກ ຊຸດເກົ່າ ແລະ ສະມາຊິກພັກສົມບູນທີ່ຈະເຂົ້າຮ່ວມກອງປະຊຸມໃຫຍ່ທັງໝົດ;

ເປົ້າໝາຍອອກທາບທາມ ແມ່ນຄັດຈ້ອນຈາກຜົນການທາບທາມຮອບທີ 1, ລາຍຊື່ ແລະ ຈໍານວນຈະອອກທາບທາມ ແມ່ນຄະນະປະຈໍາພັກ ຫຼື ຄະນະບໍລິຫານງານພັກ (ບ່ອນບໍ່ມີຄະນະປະຈໍາ) ເປັນຜູ້ພິຈາລະນາຕົກລົງ;

ເປົ້າໝາຍເຂົ້າຮ່ວມການທາບທາມຄະນະປະຈໍາພັກ, ເລຂາ, ຮອງເລຂາຄະນະພັກ, ປະທານ ແລະ ຮອງປະທານຄະນະກວດກາພັກ ປະກອບດ້ວຍຄະນະບໍລິຫານງານພັກ ຊຸດເກົ່າ ແລະ ພະນັກງານຫຼັກແຫຼ່ງຈໍານວນໜຶ່ງ;

ເປົ້າໝາຍອອກທາບທາມ ແມ່ນຄັດຈ້ອນຈາກຜົນການທາບທາມຮອບທີ 1 ແລະ ການຂີດບັດທາບທາມແມ່ນກໍານົດຈໍານວນທີ່ຈະຂີດອອກ. ການຈັດຕັ້ງການທາບທາມຮອບທີ 2 ໃຫ້ດໍາເນີນພາຍຫຼັງສໍາເລັດຊີວິດການເມືອງທ້າຍສະໄໝ ຂອງຄະນະບໍລິຫານງານພັກກະຊວງ-ອົງການ.

- ກະຊວງ-ອົງການ ທີ່ຈະດໍາເນີນກອງປະຊຸມໃຫຍ່ຜູ້ແທນ ໃຫ້ດໍາເນີນການທາບທາມ 3 ຮອບຄື:

ຮອບທີ 1: ເປົ້າໝາຍເຂົ້າຮ່ວມທາບທາມປະກອບດ້ວຍ ຄະນະບໍລິຫານງານພັກ ຊຸດເກົ່າ; ເລຂາ, ຮອງເລຂາຄະນະພັກຮາກຖານ, ເລຂາ, ຮອງເລຂາໜ່ວຍພັກອ້ອມຂ້າງກະຊວງ-ອົງການ; ສະມາຊິກພັກສົມບູນທັງໝົດ ທີ່ຍັງປະຈໍາການທີ່ຂຶ້ນກັບອົງຄະນະພັກກະຊວງ-ອົງການຕົນ ແລະ ພະນັກງານບໍານານອະດີດຄະນະບໍລິຫານງານພັກ ທີ່ຍັງຮ່ວມຊີວິດພັກຢູ່ກະຊວງ-ອົງການ;

ເປົ້າໝາຍອອກທາບທາມ ໃຫ້ເອົາຄະນະພັກຊຸດເກົ່າ ແລະ ສະເໜີເປົ້າໝາຍໃໝ່ແຕ່ 1-3 ສະຫາຍ.

ຮອບທີ 2: ເປົ້າໝາຍເຂົ້າຮ່ວມທາບທາມປະກອບດ້ວຍຄະນະບໍລິຫານງານພັກ ຊຸດເກົ່າ, ເລຂາ, ຮອງເລຂາຄະນະພັກຮາກຖານ, ເລຂາ, ຮອງເລຂາໜ່ວຍພັກ ແລະ ສະມາຊິກພັກສົມບູນ ທີ່ມີຕໍາແໜ່ງບໍລິ

ຫານຂັ້ນຮອງຫົວໜ້າພະແນກ ແລະ ທຽບເທົ່າ ຂຶ້ນໄປ;

ເປົ້າໝາຍອອກທາບທາມ ແມ່ນຄັດຈ້ອນຈາກຜົນການທາບທາມຮອບທີ 1, ລາຍຊື່ ແລະ ຈຳນວນຈະອອກທາບທາມ ແມ່ນຄະນະປະຈຳພັກ ຫຼື ຄະນະບໍລິຫານງານພັກ (ບ່ອນບໍ່ມີຄະນະປະຈຳ) ພິຈາລະນາຕົກລົງ; ການຂີດບັດທາບທາມ ແມ່ນບໍ່ກຳນົດຈຳນວນທີ່ຈະຂີດອອກ;

ການຈັດຕັ້ງທາບທາມຄະນະປະຈຳພັກ, ເລຂາ, ຮອງເລຂາຄະນະພັກ, ປະທານ ແລະ ຮອງປະທານຄະນະກວດກາພັກ: ເປົ້າໝາຍອອກທາບທາມປະກອບດ້ວຍຄະນະປະຈຳພັກ, ເລຂາ, ຮອງເລຂາຄະນະພັກ, ປະທານ ແລະ ຮອງປະທານຄະນະກວດກາພັກຊຸດເກົ່າ ແລະ ສະເໜີເປົ້າໝາຍໃໝ່ ແຕ່ 1-3 ສະຫາຍ.

ຮອບທີ 3: ເປົ້າໝາຍເຂົ້າຮ່ວມທາບທາມປະກອບດ້ວຍຄະນະບໍລິຫານງານພັກຊຸດເກົ່າ ແລະ ຜູ້ແທນສົມບູນທີ່ຈະເຂົ້າຮ່ວມກອງປະຊຸມໃຫຍ່ທັງໝົດ;

ເປົ້າໝາຍອອກທາບທາມ ແມ່ນຄັດຈ້ອນຈາກຜົນການທາບທາມຮອບທີ 2, ລາຍຊື່ ແລະ ຈຳນວນຈະອອກທາບທາມ ແມ່ນຄະນະປະຈຳພັກ ຫຼື ຄະນະ**ບໍລິຫານງານພັກ** (ບ່ອນບໍ່ມີຄະນະປະຈຳ) ພິຈາລະນາຕົກລົງ; ການຂີດບັດທາບທາມ ແມ່ນກຳນົດຈຳນວນທີ່ຈະຂີດອອກ. ການທາບທາມຮອບທີ 3 ໃຫ້ດຳເນີນພາຍຫຼັງສຳເລັດຊີວິດການເມືອງທ້າຍສະໄໝ ຂອງຄະນະບໍລິຫານງານພັກ ກະຊວງ-ອົງການ.

- ອົງຄະນະພັກແຂວງ-ນະຄອນຫຼວງ ໃຫ້ດຳເນີນການທາບທາມບຸກຄະລາກອນ 3 ຮອບຄື:

ຮອບທີ 1: ເປົ້າໝາຍເຂົ້າຮ່ວມທາບທາມປະກອບດ້ວຍຄະນະບໍລິຫານງານພັກແຂວງ-ນະຄອນຫຼວງຊຸດເກົ່າ; ເລຂາ, ຮອງເລຂາຄະນະພັກຮາກຖານ, ເລຂາ, ຮອງເລຂາໜ່ວຍພັກອ້ອມແຂວງ-ນະຄອນຫຼວງ; ສະມາຊິກພັກສົມບູນ ທີ່ມີຕຳແໜ່ງບໍລິຫານຂັ້ນຫົວໜ້າຂະແໜງ ແລະ ທຽບເທົ່າ; ຄະນະບໍລິຫານງານພັກເມືອງ ແລະ ສະມາຊິກພັກສົມບູນ ທີ່ມີຕຳແໜ່ງບໍລິຫານຂັ້ນຫົວໜ້າໜ່ວຍງານ ແລະ ທຽບເທົ່າ ຂຶ້ນໄປ; ຄະນະພັກກອງບັນຊາການທະຫານ, ຄະນະພັກ ກອງບັນຊາການປ້ອງກັນຄວາມສະຫງົບ, ນາຍທະຫານ, ນາຍຕຳຫຼວດທີ່ເປັນສະມາຊິກພັກສົມບູນ ທີ່ມີຕຳແໜ່ງບໍລິຫານຂັ້ນຮອງຫົວໜ້າກອງບັນຊາການຂັ້ນເມືອງ-ນະຄອນ ແລະ ທຽບເທົ່າ ຂຶ້ນໄປ; ພະນັກງານບຳນານອະດີດຄະນະບໍລິຫານງານພັກແຂວງ-ນະຄອນຫຼວງ;

ເປົ້າໝາຍອອກທາບທາມ ໃຫ້ເອົາຄະນະພັກຊຸດເກົ່າ ແລະ ສະເໜີເປົ້າໝາຍໃໝ່ ແຕ່ 1-3 ສະຫາຍ.

ຮອບທີ 2: ເປົ້າໝາຍເຂົ້າຮ່ວມທາບທາມປະກອບດ້ວຍຄະນະບໍລິຫານງານພັກແຂວງ-ນະຄອນຫຼວງຊຸດເກົ່າ; ເລຂາ, ຮອງເລຂາຄະນະພັກຮາກຖານ, ເລຂາ, ຮອງເລຂາໜ່ວຍພັກອ້ອມຂ້າງແຂວງ-ນະຄອນຫຼວງ ແລະ ສະມາຊິກພັກສົມບູນ ທີ່ມີຕຳແໜ່ງບໍລິຫານ ຂັ້ນຮອງຫົວໜ້າພະແນກ ແລະ ທຽບເທົ່າຂຶ້ນໄປ; ຄະນະບໍລິຫານງານພັກເມືອງ, ຄະນະພັກກອງບັນຊາການທະຫານ ແລະ ຄະນະພັກກອງບັນຊາການປ້ອງກັນຄວາມສະຫງົບຂັ້ນແຂວງ-ນະຄອນຫຼວງ;

ເປົ້າໝາຍອອກທາບທາມຄະນະບໍລິຫານງານພັກ ແມ່ນຄັດຈ້ອນຈາກຜົນການທາບທາມຮອບທີ 1, ລາຍຊື່ ແລະ ຈຳນວນຈະອອກທາບທາມ ແມ່ນຄະນະປະຈຳພັກ ພິຈາລະນາຕົກລົງ; ການຂີດບັດທາບທາມແມ່ນບໍ່ກຳນົດ ຈຳນວນທີ່ຈະຂີດອອກ;

ເປົ້າໝາຍອອກທາບທາມຄະນະປະຈຳພັກ, ເລຂາ, ຮອງເລຂາຄະນະພັກ, ປະທານ ແລະ ຮອງປະທານຄະນະກວດກາພັກ ປະກອບດ້ວຍຄະນະປະຈຳພັກ, ເລຂາ, ຮອງເລຂາຄະນະພັກ, ປະທານ ແລະ ຮອງປະທານ

ຄະນະກວດກາພັກຊຸດເກົ່າ ແລະ ສະເໜີເປົ້າໝາຍໃໝ່ແຕ່ 1-3 ສະຫາຍ.

ຮອບທີ 3: ເປົ້າໝາຍເຂົ້າຮ່ວມທາບທາມປະກອບດ້ວຍຄະນະບໍລິຫານງານພັກຊຸດເກົ່າ ແລະ ຜູ້ແທນສົມບູນ ທີ່ຈະເຂົ້າຮ່ວມກອງປະຊຸມໃຫຍ່ທັງໝົດ;

ເປົ້າໝາຍອອກທາບທາມ ແມ່ນຄັດຈ້ອນຈາກຜົນການທາບທາມຮອບທີ 2, ລາຍຊື່ ແລະ ຈໍານວນຈະອອກທາບທາມ ແມ່ນຄະນະປະຈໍາພັກ ພິຈາລະນາຕົກລົງ; ການຂີດບັດທາບທາມ ແມ່ນກໍານົດຈໍານວນທີ່ຈະຂີດອອກ. ການທາບທາມຮອບທີ 3 ໃຫ້ດໍາເນີນພາຍຫຼັງສໍາເລັດຊີວິດການເມືອງທ້າຍສະໄໝ ຂອງຄະນະບໍລິຫານງານພັກ ແຂວງ-ນະຄອນຫຼວງ.

- ອີງຄະນະພັກເມືອງ-ນະຄອນ ໃຫ້ດໍາເນີນການທາບທາມບຸກຄະລາກອນ 3 ຮອບຄື:

ຮອບທີ 1: ເປົ້າໝາຍເຂົ້າຮ່ວມທາບທາມປະກອບດ້ວຍຄະນະບໍລິຫານງານພັກ ຊຸດເກົ່າ, ເລຂາ, ຮອງເລຂາຄະນະພັກຮາກຖານ, ເລຂາ, ຮອງເລຂາໜ່ວຍພັກອ້ອມຂ້າງເມືອງ-ນະຄອນ; ສະມາຊິກພັກສົມບູນ ທີ່ມີຕໍາແໜ່ງບໍລິຫານຂັ້ນຮອງຫົວໜ້າຫ້ອງການ ແລະ ທຽບເທົ່າປະຈໍາເມືອງ-ນະຄອນ, ຄະນະພັກກອງບັນຊາການທະຫານ, ຄະນະພັກ ກອງບັນຊາການປ້ອງກັນຄວາມສະຫງົບເມືອງ-ນະຄອນ, ນາຍທະຫານ, ນາຍຕໍາຫຼວດທີ່ເປັນສະມາຊິກພັກສົມບູນ ທີ່ມີຕໍາແໜ່ງບໍລິຫານ ຂັ້ນຮອງຫົວໜ້າພະແນກ ທີ່ຂຶ້ນກັບສອງກອງບັນຊາການເມືອງ ແລະ ທຽບເທົ່າຂຶ້ນໄປ; ເລຂາ, ຮອງເລຂາຄະນະພັກຮາກຖານ, ເລຂາ, ຮອງເລຂາໜ່ວຍພັກບ້ານ ແລະ ພະນັກງານບໍານານອະດີດຄະນະບໍລິຫານງານພັກເມືອງ-ນະຄອນ ຂຶ້ນໄປ;

ເປົ້າໝາຍອອກທາບທາມ ໃຫ້ເອົາຄະນະພັກຊຸດເກົ່າ ແລະ ສະເໜີເປົ້າໝາຍໃໝ່ແຕ່ 1-3 ສະຫາຍ.

ຮອບທີ 2: ເປົ້າໝາຍເຂົ້າຮ່ວມທາບທາມປະກອບດ້ວຍຄະນະບໍລິຫານງານພັກ ຊຸດເກົ່າ, ເລຂາ, ຮອງເລຂາຄະນະພັກ ຮາກຖານ, ເລຂາ, ຮອງເລຂາໜ່ວຍພັກອ້ອມຂ້າງເມືອງ-ນະຄອນ; ບັນດາສະມາຊິກພັກສົມບູນ ທີ່ມີຕໍາແໜ່ງບໍລິຫານ ຂັ້ນຫົວໜ້າ, ຮອງຫົວໜ້າຫ້ອງການປະຈໍາເມືອງ ແລະ ທຽບເທົ່າ; ຄະນະພັກກອງບັນຊາການທະຫານ, ຄະນະພັກ ກອງບັນຊາການປ້ອງກັນຄວາມສະຫງົບເມືອງ-ນະຄອນ, ນາຍທະຫານ, ນາຍຕໍາຫຼວດ ທີ່ເປັນສະມາຊິກພັກສົມບູນ ທີ່ມີຕໍາແໜ່ງບໍລິຫານຂັ້ນຫົວໜ້າພະແນກ ທີ່ຂຶ້ນກັບສອງກອງບັນຊາການຂັ້ນເມືອງ ແລະ ທຽບເທົ່າ, ຮອງເລຂາຄະນະພັກຮາກຖານ ແລະ ຮອງເລຂາໜ່ວຍພັກບ້ານ ຂຶ້ນໄປ;

ເປົ້າໝາຍອອກທາບທາມ ແມ່ນຄັດຈ້ອນຈາກຜົນການທາບທາມຮອບທີ 1, ລາຍຊື່ ແລະ ຈໍານວນຈະອອກທາບທາມ ແມ່ນຄະນະປະຈໍາພັກ ພິຈາລະນາຕົກລົງ; ການຂີດບັດທາບທາມ ແມ່ນບໍ່ກໍານົດຈໍານວນທີ່ຈະຂີດອອກ;

ການຈັດຕັ້ງທາບທາມຄະນະປະຈໍາພັກ, ເລຂາ, ຮອງເລຂາຄະນະພັກ, ປະທານ ແລະ ຮອງປະທານຄະນະກວດກາພັກ: ເປົ້າໝາຍອອກທາບທາມໃຫ້ເອົາຄະນະປະຈໍາພັກ, ເລຂາ, ຮອງເລຂາຄະນະພັກ, ປະທານ ແລະ ຮອງປະທານຄະນະກວດກາພັກຊຸດເກົ່າ ແລະ ສະເໜີເປົ້າໝາຍໃໝ່ແຕ່ 1-3 ສະຫາຍ.

ຮອບທີ 3: ເປົ້າໝາຍເຂົ້າຮ່ວມທາບທາມປະກອບດ້ວຍຄະນະບໍລິຫານງານພັກ ຊຸດເກົ່າ ແລະ ຜູ້ແທນສົມບູນ ທີ່ຈະເຂົ້າຮ່ວມກອງປະຊຸມໃຫຍ່ທັງໝົດ;

ເປົ້າໝາຍອອກທາບທາມ ແມ່ນຄັດຈ້ອນຈາກຜົນການທາບທາມຮອບທີ 2, ລາຍຊື່ ແລະ ຈໍານວນຈະອອກທາບທາມ ແມ່ນຄະນະປະຈໍາພັກ ພິຈາລະນາຕົກລົງ; ການຂີດບັດທາບທາມ ແມ່ນກໍານົດຈໍານວນ

ຂີດອອກ;

ການຫາບທາມຮອບທີ 3 ໃຫ້ດຳເນີນພາຍຫຼັງສຳເລັດຊີວິດການເມືອງທ້າຍສະໄໝຂອງຄະນະບໍລິຫານງານພັກເມືອງ-ນະຄອນ.

6. ການກະກຽມຜູ້ແທນສົມບູນ ແລະ ສຳຮອງເຂົ້າຮ່ວມກອງປະຊຸມໃຫຍ່ ແຕ່ລະຂັ້ນ.

- ຈຳນວນຜູ້ແທນສົມບູນ ແລະ ສຳຮອງ ທີ່ຈະເຂົ້າຮ່ວມກອງປະຊຸມໃຫຍ່ຂັ້ນໃດ ໃຫ້ຄະນະບໍລິຫານງານພັກຂັ້ນນັ້ນ ເປັນຜູ້ຕົກລົງ, ກໍລະນີຈຳເປັນຄະນະບໍລິຫານງານພັກ ຂັ້ນນັ້ນຮຽກໂຮມກອງປະຊຸມ ກໍ່ສາມາດບົ່ງຕົວແຕ່ງຕັ້ງຜູ້ແທນສົມບູນຈຳນວນໜຶ່ງໄດ້ ແຕ່ຕ້ອງລາຍງານ ແລະ ໄດ້ຮັບຄຳເຫັນດີຈາກຄະນະພັກຂັ້ນເທິງຖັດຕົນ;

- ການກຳນົດຈຳນວນຜູ້ແທນສົມບູນແລະສຳຮອງແມ່ນບໍ່ໃຫ້ເກີນ 20 % ຂອງຄັ້ງຜ່ານມາ, ແຕ່ຈຳນວນລວມຂອງຜູ້ແທນສົມບູນ ແມ່ນໃຫ້ເປັນຈຳນວນຄີກ;

- ຄະນະປະຈຳພັກ ເປັນຜູ້ແບ່ງປັນຈຳນວນຜູ້ແທນສົມບູນ ແລະ ສຳຮອງ ໃຫ້ບັນດາການຈັດຕັ້ງພັກທີ່ຂຶ້ນກັບຕົນຕາມຄວາມເໝາະສົມ, ແຕ່ຕ້ອງຮັບປະກັນໃຫ້ທຸກໆການຈັດຕັ້ງພັກ ທີ່ຂຶ້ນກັບອົງຄະນະພັກຕົນມີຕົວແທນເຂົ້າຮ່ວມ.

7. ການລາຍງານຄວາມພ້ອມການກະກຽມ ແລະ ດຳເນີນກອງປະຊຸມໃຫຍ່ ຕໍ່ຄະນະພັກຂັ້ນເທິງ.

ພາຍຫຼັງກອງປະຊຸມຄົບຄະນະບໍລິຫານງານພັກທ້າຍສະໄໝ ໄດ້ພິຈາລະນາຮັບຮອງເອົາຮ່າງລາຍງານການເມືອງ, ແຜນພັດທະນາເສດຖະກິດ-ສັງຄົມຂອງທ້ອງຖິ່ນ ຫຼື ແຜນພັດທະນາຂະແໜງການຕົນ, ເອົາບຸກຄະລາກອນ ແລະ ຄວາມພ້ອມດ້ານຕ່າງໆ; ຄະນະພັກແຕ່ລະຂັ້ນ ຕ້ອງລາຍງານສະພາບຮອບດ້ານ ແລະ ຂໍອະນຸມັດຈາກຄະນະພັກຂັ້ນເທິງ ໂດຍປະກອບມີເອກະສານຄື: ❶ ບົດລາຍງານຫຍໍ້ຄວາມພ້ອມ ໃນການກະກຽມ ແລະ ດຳເນີນກອງປະຊຸມໃຫຍ່ຂັ້ນຕົນ; ❷ ຮ່າງລາຍງານການເມືອງ, ແຜນພັດທະນາເສດຖະກິດ-ສັງຄົມຂອງທ້ອງຖິ່ນ, ແຜນພັດທະນາຂອງຂະແໜງການ, ບົດສຳຫຼວດການນຳພາລວມຂອງຄະນະບໍລິຫານງານພັກ, ວາລະ ແລະ ຄາດຄະເນເວລາດຳເນີນກອງປະຊຸມໃຫຍ່; ❸ ຊີວະປະຫວັດຫຍໍ້ການເຄື່ອນໄຫວ ແລະ ຄະແນນການຫາບທາມແຕ່ລະຮອບ ຂອງບັນດາເປົ້າໝາຍທີ່ຈະອອກສະໝັກຮັບເລືອກຕັ້ງ ແລະ ກະກຽມເປົ້າໝາຍສຳຮອງໄວ້ ຈຳນວນໜຶ່ງ; ❹ ແຜນຄາດຄະເນການສັບຊ້ອນຈັດວາງ ຄະນະບໍລິຫານງານພັກ ຊຸດໃໝ່, ແຜນຄາດຄະເນຜູ້ຈະເປັນຄະນະປະຈຳພັກ, ເລຂາ, ຮອງເລຂາຄະນະພັກ, ປະທານ ແລະ ຮອງປະທານຄະນະກວດກາພັກ ແລະ ❺ ໜັງສືສະເໜີຂໍອະນຸມັດດຳເນີນກອງປະຊຸມໃຫຍ່.

ສະນັ້ນ, ເພື່ອເຮັດໃຫ້ການກະກຽມ ແລະ ດຳເນີນກອງປະຊຸມໃຫຍ່ 3 ຂັ້ນຂອງພັກ ດຳເນີນໄປຢ່າງມີປະສິດທິຜົນ ເຫັນວ່າຍັງແມ່ນຄວາມຮັບຜິດຊອບໂດຍກົງ ແລະ ຕົ້ນຕໍຂອງຄະນະພັກແຕ່ລະຂັ້ນ ຕ້ອງໄດ້ຍົກສູງຄວາມຮັບຜິດຊອບ ໂດຍສະເພາະສະຫາຍເລຂາ, ຮອງເລຂາ ແລະ ຄະນະປະຈຳພັກ ຕ້ອງໄດ້ໃກ້ຊິດຊີ້ນຳອະນຸກຳມະການຕ່າງໆ ເພື່ອປະຕິບັດພາລະບົດບາດຂອງຕົນໃນການກະກຽມ ແລະ ດຳເນີນກອງປະຊຸມໃຫຍ່ໃຫ້ບັນລຸຜົນສຳເລັດຕາມຄາດໝາຍທີ່ກຳນົດໄວ້ຢ່າງຮອບດ້ານ ຫຼີກເວັ້ນຄວາມຜິດພາດໃນລະດັບສູງ...ຯ

ຍຶດໝັ້ນທິດສະດີມາກ-ເລນິນ ແນວຄິດໄກສອນ ພົມວິຫານ ເປັນພື້ນຖານທາງດ້ານແນວຄິດທິດສະດີຂອງພັກ ໃນໄລຍະໃໝ່

(ລາງວັນທີ 3 ແຂ່ງຂັນບົດຂຽນ ເນື່ອງໃນໂອກາດສະເຫຼີມສະຫຼອງວັນສ້າງຕັ້ງ ວາລະສານກໍ່ສ້າງພັກ ຄົບຮອບ 30 ປີ)

ໂດຍ: ບົວວັນ ວິລະສັກ

ພັກປະຊາຊົນປະຕິວັດລາວ ຍາມໃດກໍ່ກຳນົດແນວຄິດ, ທິດສະດີແມ່ນໜຶ່ງໃນບັນດາການເຄື່ອນໄຫວທີ່ມີຄວາມສຳຄັນອັນດັບແຖວໜ້າຂອງພັກ, ແມ່ນໜຶ່ງໃນບັນດາວຽກງານນຳພາ ແລະ ແມ່ນວິທີການນຳພາອັນຕົ້ນຕໍຂອງພັກ ໃນການປະຕິບັດໜ້າທີ່ການເມືອງແຕ່ລະໄລຍະ ຂອງການປະຕິວັດລາວ.

ຕະຫຼອດໄລຍະເວລາ 69 ປີ ແຕ່ການສ້າງພັກເປັນຕົ້ນມາ, ພັກເຮົາກໍ່ໄດ້ເປີດກອງປະຊຸມວຽກງານແນວຄິດທົ່ວປະເທດມາໄດ້ 5 ຄັ້ງ, ຄັ້ງຫຼ້າສຸດແມ່ນຕົ້ນປີ 2023. ຕະຫຼອດໄລຍະດັ່ງກ່າວ ພັກໄດ້ໝູນໃຊ້ຢ່າງປະດິດສ້າງແນວຄິດລັດທິມາກ-ເລນິນ, ແນວຄິດ ໄກສອນ ພົມວິຫານ ເຂົ້າໃນເງື່ອນໄຂຕົວຈິງຂອງປະເທດລາວເຮົາ ເພື່ອແກ້ໄຂວຽກງານຕ່າງໆ ທາງດ້ານການເມືອງເສດຖະກິດ-ການເງິນ, ວັດທະນະທຳ-ສັງຄົມ ຂອງບ້ານເຮົາເຜີຍແຜ່ຖ່າຍທອດແນວຄິດທິດສະດີ, ທັດສະນະ, ແນວທາງຂອງພັກຕໍ່ພະນັກງານ, ສະມາຊິກພັກ ແລະ ປະຊາຊົນ, ປຸກລະດົມກຳລັງໃຈ, ລະດົມປະຊາຊົນຊັ້ນຄົນຕ່າງໆ ເຂົ້າຮ່ວມພາລະກິດປ່ຽນແປງໃໝ່, ພາລະກິດສ້າງສາພັດທະນາ ແລະ ປົກປັກຮັກສາປະເທດຊາດໃຕ້ການນຳພາຂອງພັກ.

ວຽກງານແນວຄິດການເມືອງ-ທິດສະດີ ເປັນວຽກງານທີ່ສຳຄັນປະກອບສ່ວນເຂົ້າໃນການຍົກສູງຄວາມສາມາດໃນການນຳພາ ແລະ ສູ້ຮົບຂອງພັກ, ກໍ່ສ້າງຖັນແຖວພະນັກງານ, ສະມາຊິກພັກ, ສ້າງພັກໃຫ້ປອດໃສ, ເຂັ້ມແຂງ, ໜັກແໜ້ນ ປະກອບສ່ວນເຂົ້າໃນການສະກັດກັ້ນຕ້ານທຸກປະກົດການ, ຕ້ານການປະຕິວັດຂອງປະຊາຊົນ, ຕີຖອຍການສໍ້ລາດບັງຫຼວງ, ຟຸມເຟືອຍ, ເສື່ອມຖອຍທາງດ້ານແນວຄິດການເມືອງ, ຄຸນສົມບັດແບບແຜນການດຳລົງຊີວິດ ແລະ ບັນດາປະກົດການຜັນແປເອງ, ຫັນປ່ຽນເອງ ພາຍໃນພັກ.

ໃນສະໄໝຕໍ່ສູ້ກູ້ຊາດເມື່ອກ່ອນ, ວຽກງານແນວຄິດ, ທິດສະດີກໍ່ໄດ້ປະກອບສ່ວນຢ່າງຕັ້ງໜ້າເຂົ້າໃນການປົກປັກຮັກສາພື້ນຖານດ້ານແນວຄິດຂອງພັກ, ຕຳນິບັນດາທັດສະນະຜິດພາດ, ຖ້ອຍທຳນອງບິດເບືອນ, ທັບມ້າງທຸກກົນອຸບາຍ, ເລ່ຫຼ່ຽມມ້າງເພ, ເປັນແຜນກົນອຸບາຍ ຫັນປ່ຽນໂດຍສັນຕິ ຂອງບັນດາອິດທິກຳລັງສັດຕູ, ປັບປຸງ ແລະ ເສີມຂະຫຍາຍຄວາມສາມັກຄີ, ຄວາມເປັນເອກະພາບພາຍໃນພັກ, ຄວາມເປັນຈິດໜຶ່ງໃຈດຽວໃນສັງຄົມ; ປະກອບສ່ວນເຂົ້າໃນການຮັກສາຄວາມໝັ້ນຄົງດ້ານການເມືອງ ຂອງກຳລັງປະຕິວັດສາມາດຕີເອົາຊະນະສັດຕູໄດ້ຢ່າງອົງອາດກ້າຫານ.

ໃນພາລະກິດແຫ່ງການປ່ຽນແປງໃໝ່ຢ່າງຮອບດ້ານ, ວຽກງານແນວຄິດ, ທິດສະດີ ໄດ້ຮັບຄວາມເອົາໃຈໃສ່ ແລະ ປັບປຸງ, ປະກອບສ່ວນສ້າງຄວາມເປັນເອກະ

ພາບພາຍໃນພັກ, ຄວາມຮັບຮູ້ໃນສັງຄົມ. ພາຍຫຼັງ 30 ກວ່າປີ ແຫ່ງການປ່ຽນແປງໃໝ່, ຄວາມຮັບຮູ້ຕໍ່ເນື້ອໃນ, ເສັ້ນທາງກ້າວຂຶ້ນສູ່ສັງຄົມນິຍົມຢູ່ ສປປ ລາວ ນັບມື້ນັບຈະແຈ້ງຂຶ້ນກວ່າເກົ່າ, ປະກອບສ່ວນສຳຄັນຕໍ່ການຮັກສາຄວາມໝັ້ນຄົງດ້ານການເມືອງສັງຄົມໜັກແໜ້ນ, ພັດທະນາເສດຖະກິດ, ປັບປຸງຊີວິດການເປັນຢູ່ຂອງປະຊາຊົນ, ຍົກສູງອິດທິພົນ ແລະ ຖານະບົດບາດ ຂອງປະເທດໃນເວທີສາກົນ.

ຜ່ານພຶດຕິກຳຕົວຈິງ, ພັກປະຊາຊົນປະຕິວັດລາວ ຖອດຖອນໄດ້ບາງບົດຮຽນໃນວຽກງານແນວຄິດ, ທິດສະດີອັນໄດ້ກາຍເປັນທຶນຮອນອັນມະຫາສານ ເຂົ້າໃນການສືບຕໍ່ພາລະກິດປະຕິວັດຂອງພັກເຮົາສືບຕໍ່ໄປ ເຊິ່ງສາມາດສະຫຼຸບເປັນບົດຮຽນໄດ້ຄື:

ໜຶ່ງ, ຍາມໃດກໍ່ຕ້ອງຢຶດໝັ້ນ, ໝູນໃຊ້ຢ່າງປະດິດສ້າງ ແລະ ເສີມຂະຫຍາຍລັດທິມາກ-ເລນິນ, ແນວຄິດ ໄກສອນ ພົມວິຫານ ເຂົ້າໃນການວາງແນວທາງ, ແຜນນະໂຍບາຍ, ນະໂຍບາຍອັນຖືກຕ້ອງເໝາະສົມກັບເງື່ອນໄຂຕົວຈິງຂອງປະເທດ, ພາກພື້ນ ແລະ ໃນໂລກ ໃນແຕ່ລະໄລຍະປະຫວັດສາດຕົວຈິງ.

ສອງ, ພັກຕ້ອງມີການກຳນົດທິດດ້ານແນວຄິດຢ່າງຖືກຕ້ອງ, ທັນການ, ເດັດດ່ຽວສະກັດກັ້ນ, ປະກອບສ່ວນເຂົ້າໃນການສະກັດກັ້ນ, ແກ້ໄຂບັນດາປະກົດການທີ່ສະແດງເຖິງຄວາມເສື່ອມຖອຍ ດ້ານແນວຄິດການເມືອງ, ຄຸນສົມບັດ, ແບບແຜນການດຳລົງຊີວິດ, "ຜັນແປເອງ", "ຫັນປ່ຽນເອງ"; ເດັດດ່ຽວ, ຢຶດໝັ້ນຕໍ່ສູ້ປົກປ້ອງພື້ນຖານດ້ານແນວຄິດຂອງພັກ, ຕອບໂຕ້ຕໍ່ບັນດາທັດສະນະຜິດພາດ, ສັດຕູ; ເດັດດ່ຽວຕ້ານແບບຄຳພີ, ສວຍໂອກາດ, ລັດທິແກ້.

ສາມ, ວຽກງານແນວຄິດ, ທິດສະດີ ຕ້ອງຕິດແທດຢ່າງແໜ້ນແຟ້ນກັບວຽກງານການຈັດຕັ້ງ, ພະນັກງານ ແລະ ຂະບວນການປະຕິວັດຂອງມະຫາຊົນ; ຕ້ອງປະຕິບັດໄປພ້ອມໆກັບການປະຕິບັດບັນດາແຜນນະໂຍບາຍ, ນະໂຍບາຍຂອງພັກຢ່າງມີປະສິດທິຜົນ; ເວົ້າໄປຄຽງຄູ່ກັບການເຮັດ.

ສີ່, ຕ້ອງຖືສຳຄັນພິເສດຕໍ່ການສະຫຼຸບພຶດຕິກຳຕົວຈິງ, ຄົ້ນຄວ້າ ເພື່ອເພີ່ມເຕີມ ແລະ ເສີມຂະຫຍາຍທິດສະດີ, ປະກອບສ່ວນເຂົ້າໃນການກໍ່ສ້າງ, ບູລະນະໃຫ້ສົມບູນແນວທາງ, ນະໂຍບາຍ, ປ່ຽນແປງໃໝ່ດ້ານເນື້ອໃນ, ວິທີການດຳເນີນປະຕິບັດວຽກງານແນວຄິດ, ທິດສະດີຢ່າງເປັນປະຈຳ ເພື່ອຕອບສະໜອງຄວາມຮຽກຮ້ອງຂອງພາລະກິດປົກປັກຮັກສາ ແລະ ສ້າງສາປະເທດຊາດ.

ຫ້າ, ຕ້ອງຖືວຽກງານແນວຄິດ, ທິດສະດີ ແມ່ນໜ້າທີ່ຂອງທົ່ວພັກ, ຂອງສະມາຊິກພັກທຸກຄົນ, ກ່ອນອື່ນໝົດແມ່ນຄະນະພັກຂັ້ນຕ່າງໆ, ເລຂາຄະນະພັກຂັ້ນຕ່າງໆ; ຂອງທົ່ວລະບົບການເມືອງ ໂດຍມີການເຂົ້າຮ່ວມຢ່າງຕັ້ງໜ້າຂອງປະຊາຊົນ, ໃນນັ້ນ ກຳລັງຫຼັກແຫຼ່ງແມ່ນຖັນແຖວເຮັດວຽກງານແນວຄິດ, ທິດສະດີຂອງພັກສະເພາະ; ເສີມຂະຫຍາຍປະຊາທິປະໄຕ, ຂຸດຄົ້ນທຸກກຳລັງບົ່ມຊ້ອນຢ່າງປະດິດສ້າງຂອງທົ່ວພັກ ແລະ ທົ່ວສັງຄົມ.

ຫົກ, ຕ້ອງຖືວຽກງານແນວຄິດ, ທິດສະດີຂອງພັກແມ່ນວຽກງານສຳລັບຄົນ, ຮຽກຮ້ອງຕ້ອງກຳແໜ້ນບັນດາກົດເກນສະເພາະຂອງແນວຄິດ, ມີທ່າທີ, ວິທີວິທະຍາ, ເໝາະສົມ, ສົມທົບຢ່າງແໜ້ນແຟ້ນລະຫວ່າງຄວາມຮຽກຮ້ອງກຳນົດທິດດ້ານແນວຄິດກັບຄວາມສະໝັກໃຈ, ລະຫວ່າງເຫດຜົນ ແລະ ຄວາມຮູ້ສຶກ, ລະຫວ່າງວາຈາກັບການກະທຳ, ລະຫວ່າງ "ການສ້າງ" ກັບ "ການຕ້ານ", ຖື "ການສ້າງ" ເປັນຕົ້ນຕໍ, ຖືດ້ານຕັ້ງໜ້າເພື່ອຕີຖອຍດ້ານຫຍໍ້ທໍ້.

ໃນຕໍ່ໜ້ານີ້, ໂດຍເຫັນໄດ້ສະພາບການສາກົນພວມມີການປ່ຽນແປງຢ່າງໄວວາດ້ວຍຫຼາຍການຜັນແປ

ທີ່ສັບສົນ, ຄາດຄະເນລ່ວງໜ້າໄດ້ຍາກ. ລັດທິຜູກຂາດອຳນາດ, ລັດທິຊົນຊາດຂວາຈັດ, ລັດທິສວຍໃຊ້ ແລະ ລັດທິປະຊານິຍົມ ດ້ອຍຫຼາຍລະດັບຕ່າງກັນພວມຄອບງຳບັນຊາພື້ນຖານດ້ານແນວຄິດຂອງຫຼາຍປະເທດ, ໃນນັ້ນ ມີບັນດາປະເທດໃຫຍ່, ກະທົບຢ່າງແຂງແຮງຕໍ່ສາຍພົວພັນສາກົນ. ການກໍ່ການຮ້າຍ, ຄວາມສະຫງົບດ້ານເຄືອຂ່າຍ, ສົງຄາມການຄ້າ, ລັດທິປົກປ້ອງການຄ້າ, ບັນດາການປະທະວັດທະນະທຳ, ສິ່ງແວດລ້ອມ ແລະ ບັນຫາຄວາມສະຫງົບແບບບໍ່ເຄີຍມີມາກ່ອນພວມປະກົດຂຶ້ນ, ມີບາງບ່ອນໄດ້ກາຍເປັນຈຸດຮ້ອນ, ຂະບວນການປະຕິວັດອຸດສາຫະກຳຄັ້ງທີ 4, ການຂະຫຍາຍຕົວຢ່າງແຂງແຮງ ຂອງເຕັກໂນໂລຊີຂໍ້ມູນຂ່າວສານ ເຮັດໃຫ້ຂະບວນການຫັນເປັນໂລກາພິວັດຢ່າງໄວວາ ແລະ ເລິກເຊິ່ງກວ່າເກົ່າ, ເຮັດໃຫ້ເກີດແບບແຜນດຳລົງຊີວິດມີການປ່ຽນແປງຢ່າງວ່ອງໄວ ແລະ ຮອບດ້ານ, ເຮັດໃຫ້ບັນດາການພົວພັນທາງສັງຄົມຂອງແຕ່ລະຊົນຊາດ, ແຕ່ລະທ້ອງຖິ່ນ, ບໍ່ຂຶ້ນກັບຂອບເຂດພູມິປະເທດ ຫຼື ບັນດາພົມແດນປະເພນີຂອງປະເທດ. ຄຽງຄູ່ກັບການສືບຕໍ່ເສີມຂະຫຍາຍຢ່າງຟົດຟື້ນ ແລະ ເພີ່ມທະວີບົດບາດໃນເວທີສາກົນກໍ່ພວມປະເຊີນໜ້າຕໍ່ບັນດາສິ່ງທ້າທາຍໃໝ່, ຄວາມຮຽກຮ້ອງໃໝ່ບົນເສັ້ນທາງສ້າງວົງຄະນາຍາດສັນຕິພາບ, ຄວາມມີສະຖຽນລະພາບ, ພັດທະນາ, ວັດທະນະຖາວອນ ກໍ່ພວມເພີ່ມທະວີຢ່າງແຂງແຮງ ແລະ ມີລັກສະນະຊີ້ງດີຊີ້ງເດັ່ນກັນຢ່າງໜັກແໜ້ນ.

ສຳລັບ ສປປ ລາວ, ພາຍໃນ 30 ກວ່າປີແຫ່ງການປະຕິບັດແນວທາງປ່ຽນແປງໃໝ່ ພາຍໃຕ້ການນຳພາຂອງພັກປະຊາຊົນປະຕິວັດລາວ ກໍ່ໄດ້ສ້າງທ່າ ແລະ ກຳລັງແຮງສັງລວມຂອງປະເທດໄດ້ເພີ່ມຂຶ້ນຢ່າງຈະແຈ້ງ; ຖານະ, ອິດທິພົນສາກົນໄດ້ຍົກສູງຂຶ້ນ. ໂຄງລ່າງພື້ນຖານເສດຖະກິດ-ເຕັກນິກ ຂອງປະເທດໄດ້ຮັບການພັດທະນາ, ຊີວິດການເປັນຢູ່ຂອງປະຊາຊົນຊັ້ນຄົນຕ່າງໆໃນທົ່ວປະເທດໄດ້ຮັບການປັບປຸງໂດຍພື້ນຖານ. ຂະບວນການຕໍ່ສູ້ຕ້ານ, ສະກັດກັ້ນການສໍ້ລາດບັງຫຼວງ, ຫຍໍ້ທໍ້ໄດ້ບັນລຸຜົນສຳເລັດສຳຄັນ, ສະກັດກັ້ນການເສື່ອມຖອຍດ້ານແນວຄິດການເມືອງ, ຄຸນສົມບັດ, ແບບແຜນການດຳລົງຊີວິດພາຍໃນພັກ ແລະ ສັງຄົມເປັນເທື່ອລະກ້າວ ສ້າງຄວາມໄວ້ເນື້ອເຊື່ອໃຈຂອງປະຊາຊົນຕໍ່ພັກ, ຕໍ່ລະບອບໃໝ່ສູງຂຶ້ນ.

ແຕ່ຄຽງຄູ່ກັນນັ້ນ, ກໍ່ປະເຊີນໜ້າກັບບັນດາຂໍ້ຫຍຸ້ງຍາກ, ສິ່ງທ້າທາຍອັນໃໝ່, ກະທົບໂດຍກົງຕໍ່ວຽກງານແນວຄິດ, ທິດສະດີຂອງພັກ ບາງຄັ້ງກໍ່ເກີດແນວຄິດຜິດເຂວອອກຈາກທິດສັງຄົມນິຍົມ, ເກີດມີໄພສໍ້ລາດບັງຫຼວງ, ຟຸມເຟືອຍ ເສື່ອມຖອຍດ້ານແນວຄິດການເມືອງ, ຄຸນສົມບັດ, ແບບແຜນການດຳລົງຊີວິດຂອງພະນັກງານ, ສະມາຊິກພັກ, ຄວາມແຕກໂຕນກັນລະຫວ່າງຄວາມຮັ່ງມີ-ຄວາມທຸກຍາກ-ມົນລະພິດສິ່ງແວດລ້ອມນິເວດ ແລະ ການແຊກແຊງດ້ານວັດທະນະທຳ... ອັນສະແດງອອກຈະແຈ້ງເຖິງຄຸນນະພາບ, ປະສິດທິຜົນວຽກງານແນວຄິດ, ທິດສະດີຂອງພັກ ຕໍ່ຄວາມໄວ້ເນື້ອເຊື່ອໃຈຂອງປະຊາຊົນຕໍ່ການນຳພາຂອງພັກ, ຕໍ່ອຸດົມການສັງຄົມນິຍົມ. ບັນດາອິດທິກຳລັງສັດຕູພາຍໃນ ແລະ ຕ່າງປະເທດເພີ່ມທະວີການມ້າງເພ, ຕໍ່ລັດ ຖືກປ່ຽນແປງ.

ໃນສະພາບການນັ້ນ, ພັກປະຊາຊົນປະຕິວັດລາວຢືນຢັນວ່າຕ້ອງສືບຕໍ່ເພີ່ມທະວີ ແລະ ປະຕິບັດຢ່າງມີປະສິດທິຜົນວຽກງານແນວຄິດ, ທິດສະດີ, ໃນນັ້ນສຸມໃສ່ບາງດ້ານດັ່ງນີ້:

ໜຶ່ງ, ສືບຕໍ່ເພີ່ມທະວີການນຳພາຂອງພັກ, ຍົກສູງຄວາມຮັບຜິດຊອບທົ່ວພັກ ແລະ ທົ່ວລະບົບການເມືອງ ຂອງຄະນະພັກແຕ່ລະຂັ້ນ, ອົງການຈັດຕັ້ງພັກຂັ້ນຕ່າງໆ, ກ່ອນອື່ນໝົດແມ່ນຜູ້ເປັນຫົວໜ້າຕໍ່ວຽກງານ

ແນວຄິດ, ທິດສະດີ; ປ່ຽນແປງໃໝ່ດ້ານເນື້ອໃນຮູບການ, ວິທີການວຽກງານແນວຄິດ, ທິດສະດີ, ສຶກສາທິດສະດີການເມືອງພາຍໃນພັກ ແລະ ສັງຄົມ.

ຄະນະພັກຂັ້ນຕ່າງໆ, ອົງການຈັດຕັ້ງພັກ, ອົງການປົກຄອງແຕ່ສູນກາງຕະຫຼອດຮອດຮາກຖານ ແລະ ພະນັກງານ, ສະມາຊິກພັກ, ເປັນຕົ້ນແມ່ນຜູ້ເປັນຫົວໜ້າຕ້ອງສຸມໃສ່ເຮັດວຽກງານແນວຄິດ. ເລຂາຄະນະພັກແຕ່ລະຂັ້ນ, ຫົວໜ້າບັນດາອົງການ, ຫົວໜ້າຕ້ອງມີແຜນການນຳພາ, ຊີ້ນຳຢ່າງເປັນປົກກະຕິ ການໂຄສະນາ, ສຶກສາລັດທິມາກ-ເລນິນ, ແນວຄິດໄກສອນ ພົມວິຫານ, ທັດສະນະ, ແນວທາງຂອງພັກ. ປ່ຽນແປງໃໝ່ດ້ານເນື້ອໃນ, ວິທີການສຶກສາທິດສະດີການເມືອງຕາມທິດທັນສະໄໝ, ຕິດພັນກັບພຶດຕິກຳຕົວຈິງ, ເໝາະສົມກັບແຕ່ລະເປົ້າໝາຍ, ສຸມໃສ່ຍົກສູງລະດັບ, ຝຶກຝົນບຸກຄະລິກກະພາບ, ທັດສະນະເພີ່ມເຕີມຫຼັກໝັ້ນການເມືອງ ຂອງຖັນແຖວຄູ-ອາຈານສອນທິດສະດີການເມືອງ, ສືບຕໍ່ປ່ຽນແປງໃໝ່ວຽກງານໂຄສະນາ, ສຶກສາທິດສະດີການເມືອງ, ວຽກງານຄົ້ນຄວ້າ, ເຊື່ອມຊຶມບັນດາມະຕິ, ຄຳສັ່ງ, ຂໍ້ສະຫຼຸບ, ສັງລວມຂອງພັກຕາມທິດແທດຕົວຈິງຢ່າງມີປະສິດທິຜົນ.

ສອງ, ສືບຕໍ່ຄົ້ນຄວ້າ, ໝູນໃຊ້ຢ່າງປະດິດສ້າງ, ເສີມຂະຫຍາຍລັດທິມາກ-ເລນິນ, ແນວຄິດໄກສອນ ໃນສະພາບການໃໝ່, ເໝາະສົມກັບພຶດຕິກຳຕົວຈິງຂອງລາວ, ຕິດພັນການຄົ້ນຄວ້າພຶດຕິກຳຕົວຈິງຢູ່ລາວ ກັບການທາບທາມບົດຮຽນ, ຮັບເອົາຢ່າງເລືອກເຟັ້ນຜົນສຳເລັດ, ຄຸນຄ່າກ້າວໜ້າຂອງມະນຸດ; ຖືສຳຄັນ ແລະ ເພີ່ມທະວີການສະຫຼຸບພຶດຕິກຳຕົວຈິງ, ຄົ້ນຄວ້າ, ເສີມຂະຫຍາຍທິດສະດີ, ສືບຕໍ່ເຮັດໃຫ້ທິດສະດີກ່ຽວກັບລັດທິສັງຄົມນິຍົມ, ຮູບແບບ ແລະ ເສັ້ນທາງກ້າວຂຶ້ນສູ່ລັດທິສັງຄົມຢູ່ລາວຈະແຈ້ງ; ບັນດາສາຍພົວພັນທີ່ໄດ້ຍົກຂຶ້ນໃນໂຄງການ ການເມືອງສ້າງສາປະເທດຊາດໃນໄລຍະຂ້າມຜ່ານກ້າວຂຶ້ນສູ່ລັດທິສັງຄົມນິຍົມ (ປັບປຸງ, ເພີ່ມເຕີມເນື້ອໃນການປັບປຸງປົວແປງພັກໃນປີ 2017), ເຊື່ອມຊຶມ, ຜັນຂະຫຍາຍບັນດາຂໍ້ກຳນົດ, ກົດລະບຽບ, ຂໍ້ແນະນຳຂອງພັກໃນການເຄື່ອນໄຫວສະຫຼຸບພຶດຕິກຳຕົວຈິງ, ຄົ້ນຄວ້າທິດສະດີຢ່າງເຂັ້ມງວດ, ເສີມຂະຫຍາຍປະຊາທິປະໄຕ, ຊຸດຄົ້ນກຳລັງບົ່ມຊ້ອນປະດິດສ້າງໃນການຄົ້ນຄວ້າວິທະຍາສາດເສດຖະກິດ-ສັງຄົມ, ຄົ້ນຄວ້າທິດສະດີ.

ສາມ, ວຽກງານແນວຄິດ, ທິດສະດີຕ້ອງແມ່ນພາກສ່ວນໜຶ່ງທີ່ມີຄວາມສຳຄັນທີ່ສຸດ ຂອງວຽກງານກໍ່ສ້າງ, ປັບປຸງພັກ; ເພີ່ມທະວີການສຶກສາທິດສະດີການເມືອງໃນທົ່ວພັກ, ປະຕິບັດຢ່າງມີປະສິດທິຜົນການກໍ່ສ້າງພັກປອດໃສ, ເຂັ້ມແຂງ, ໜັກແໜ້ນດ້ານການເມືອງ, ແນວຄິດ, ການຈັດຕັ້ງ ແລະ ຄຸນສົມບັດ, ຍູ້ແຮງການຮ່ຳຮຽນ ແລະ ປະຕິບັດຕາມແນວຄິດ, ຄຸນສົມບັດ, ແບບແຜນການດຳລົງຊີວິດຂອງປະທານ ໄກສອນ ພົມວິຫານ. ວຽກງານແນວຄິດ, ທິດສະດີຕ້ອງປະກອບສ່ວນສຳຄັນຕໍ່ການສຶກສາສະຕິຄວາມຮັບຜິດຊອບພົນລະເມືອງ, ອຸດົມການປະຕິວັດ, ປະກອບສ່ວນໂດຍກົງ, ມີປະສິດທິຜົນເຂົ້າໃນການສະກັດກັ້ນ, ຕີຖອຍການເຊື່ອມຖອຍດ້ານແນວຄິດການເມືອງ, ຄຸນສົມບັດ, ແບບແຜນການດຳລົງຊີວິດ, "ຜັນແປເອງ", "ຫັນປ່ຽນດ້ວຍຕົນເອງ" .

ສີ່, ວຽກງານແນວຄິດ, ທິດສະດີ ຕ້ອງຕິດພັນ ແລະ ຮັບໃຊ້ໜ້າທີ່ພັດທະນາເສດຖະກິດ-ສັງຄົມ, ປ້ອງກັນຊາດ, ປ້ອງກັນຄວາມສະຫງົບ, ພົວພັນການຕ່າງປະເທດ; ປະກອບສ່ວນເຂົ້າໃນການແກ້ໄຂບັນດາຂໍ້ຫຍຸ້ງຍາກ, ສິ່ງຄ້າງຄາ, ແກ້ໄຂບັນດາບັນຫາຮີບດ່ວນໃນຊີວິດເສດຖະກິດ-ສັງຄົມ, ສ້າງຄວາມເປັນເອກະພາບພາຍໃນພັກ ແລະ ຄວາມເປັນຈິດໜຶ່ງໃຈດຽວ ຂອງປະຊາຊົນ. ວຽກງານແນວຄິດ, ທິດສະດີ ຕ້ອງຖືສຳຄັນ ແລະ ຫັນໄປ

ສູ່ຮາກຖານຢ່າງແທ້ຈິງ; ຍົກສູງບົດບາດນຳໜ້າ, ເປັນແບບຢ່າງຂອງພະນັກງານ, ສະມາຊິກພັກໃນວຽກງານແນວຄິດ, ທິດສະດີ, ເພີ່ມທະວີການຄາດຄະເນສະພາບການ, ເປັນເຈົ້າການໃນການພົບເຫັນ, ກຳສະພາບບັນດາບັນຫາຮີບດ່ວນໃນຊີວິດການເປັນຢູ່ ເພື່ອກຳນົດທິດດ້ານແນວຄິດການເມືອງ, ທາງສຽງສັງຄົມ.

ຫ້າ, ຕັ້ງໜ້າຕໍ່ສູ້ປົກປ້ອງພື້ນຖານແນວຄິດຂອງພັກ; ຕຳໜິ, ຕອບໂຕ້ຄືນຢ່າງມີປະສິດທິຜົນຕໍ່ບັນດາຖ້ອຍ ທຳນອງຜິດເຂວ, ບິດເບືອນຂອງບັນດາອິດທິກຳລັງສັດຕູ, ເປົ້າໝາຍປະຕິການ, ສວຍໂອກາດດ້ານການເມືອງ. ຫັນເປັນຫຼາຍຮູບແບບບັນດາຮູບການຕໍ່ສູ້ບົນພື້ນຖານຮັກສາແໜ້ນທັດສະນະ ແລະ ຫຼັກການ; ອ່ອນໂຍນ, ພົກໄຫວໃນວິທີການ; ເປີດເຜີຍ, ຈະແຈ້ງ, ປະຊາທິປະໄຕ, ປະກອບສ່ວນເຂົ້າໃນການສ້າງທາງສຽງທາງສັງຄົມປອດໃສ, ເປັນເອກະພາບ. ສົນທະນາ, ແລກປ່ຽນກັບບັນດາຜູ້ທີ່ມີຄວາມຄິດເຫັນຕ່າງກັນບົນພື້ນຖານຈິດໃຈວິທະຍາສາດ, ປະຊາທິປະໄຕ, ສ້າງສັນ ແລະ ຈູງໃຈ. ເສີມຂະຫຍາຍບົດບາດ ແລະ ຄວາມຮັບຜິດຊອບຂອງບັນດາພາຫະນະສື່ມວນຊົນ, ບັນດາເວທີວິທະຍາສາດ ເພື່ອການຂະຫຍາຍຕົວໝັ້ນຄົງ, ຍືນຍົງຂອງປະເທດຊາດ, ເພື່ອຜົນປະໂຫຍດຂອງປະຊາຊົນ ແລະ ຄວາມໜັກແໜ້ນຂອງລະບອບ.

ຫົກ, ເສີມຂະຫຍາຍບົດບາດ ແລະ ເພີ່ມທະວີຄຸ້ມຄອງບັນດາການເຄື່ອນໄຫວ ຂອງໜັງສືພິມ, ການພິມຈຳໜ່າຍ; ຂໍ້ມູນຜ່ານອິນເຕີເນັດ ແລະ ເຄືອຂ່າຍທາງສັງຄົມ. ຍົກສູງຄວາມຮັບຜິດຊອບຂອງຄະນະພັກຂັ້ນຕ່າງໆ, ອົງການຈັດຕັ້ງພັກ, ການນຳອົງການສຳນັກຂ່າວໃນວຽກງານແນວຄິດ, ທິດສະດີ, ເຂົ້າຮ່ວມຕໍ່ສູ້ຕ້ານ, ສະກັດກັ້ນການສໍ້ລາດບັງຫຼວງ, ຫຍໍ້ທໍ້ພາຍໃນພັກ ແລະ ສັງຄົມ, ເປັນເຈົ້າການໃນການກຳນົດທິດ, ສະໜອງຂໍ້ມູນປະຈຳ, ກະທັນຫັນໃຫ້ແກ່ສຳນັກຂ່າວສານ, ຍ້ອງຍໍທັນການຕໍ່ບັນດາໝູ່ຄະນະ, ບຸກຄົນທີ່ມີຜົນງານ, ແກ້ໄຂຜູ້ທີ່ລະເມີດຂໍ້ກຳນົດວ່າດ້ວຍຂໍ້ມູນ, ໜັງສືພິມ, ໂຄສະນາ... ຜ່ານທາງອິນເຕີເນັດ ແລະ ເຄືອຂ່າຍທາງສັງຄົມ.

ເຈັດ, ແມ່ນສຸມໃສ່ລົງທຶນໃຫ້ແກ່ວຽກງານແນວຄິດ, ທິດສະດີໃນສະພາບການໃໝ່; ເສີມຂະຫຍາຍຖັນແຖວພະນັກງານເຮັດວຽກງານແນວຄິດ, ທິດສະດີ ໂດຍສະເພາະ ເພື່ອຕອບສະໜອງກັບຄວາມຮຽກຮ້ອງດ້ານໜ້າທີ່ໃນສະພາບການໃໝ່. ເພີ່ມທະວີລົງທຶນດ້ານພື້ນຖານວັດຖຸ, ເຕັກນິກ, ພາຫະນະ, ໝູນໃຊ້ເຕັກໂນໂລຊີຕາມທິດທັນສະໄໝ, ຕອບສະໜອງກັບຄວາມຮຽກຮ້ອງຂອງການເຄື່ອນໄຫວດ້ານແນວຄິດຕໍ່ບັນດາຄວາມຮຽກຮ້ອງຂອງສະພາບການໃໝ່. ເອົາໃຈໃສ່ຕໍ່ວຽກງານສ້າງ, ບຳລຸງ, ຂຶ້ນແຜນກຳນົດຖັນແຖວພະນັກງານເຮັດວຽກງານແນວຄິດ, ທິດສະດີໂດຍສະເພາະແຕ່ສູນກາງຕະຫຼອດຮອດທ້ອງຖິ່ນ, ພະນັກງານຂັ້ນຍຸດທະສາດ, ບັນດານັກຊ່ຽວຊານ, ຖັນແຖວພະນັກງານສືບທອດ ແລະ ພະນັກງານໜຸ່ມ; ຍົກສູງຄຸນນະພາບການສ້າງ, ບຳລຸງ, ມີລະບອບ, ນະໂຍບາຍຕໍ່ຖັນແຖວພະນັກງານເຮັດວຽກງານແນວຄິດທິດສະດີຂອງພັກແຕ່ລະຂັ້ນຢ່າງເໝາະສົມ.

ສະຫຼຸບໄດ້ວ່າ ວຽກງານແນວຄິດທິດສະດີ ແມ່ນວຽກງານຫຼັກຂອງພັກໃນເງື່ອນໄຂພັກປະຊາຊົນປະຕິວັດລາວກຳອຳນາດປົກປ້ອງແນວທາງແຜນນະໂຍບາຍລະບອບການເມືອງຂອງພັກເຮົາໄວ້ໃຫ້ໝັ້ນຄົງຍືນນານຕະຫຼອດໄປ...ໆ

ບົນເສັ້ນທາງປະຕິວັດຂອງປະທານ ຄຳໄຕ ສີພັນດອນ ຈາກການເຄື່ອນໄຫວຮັກຊາດກ້າວສູ່ການເປັນຜູ້ນຳສູງສຸດຂອງພັກ

ໂດຍ: ພິດສະໄໝ

ປະທານ ຄຳໄຕ ສີພັນດອນ ກຳເນີດໃນຄອບຄົວຊາວນາທີ່ທຸກຍາກ ໂດຍໄດ້ຮັບຜົນສະທ້ອນຈາກມູນເຊື້ອຮັກຊາດຂອງຄອບຄົວ ກໍ່ຄືມູນເຊື້ອຕໍ່ສູ້ເດັດດ່ຽວເດັດຂາດບໍ່ຍອມຈຳນົນຂອງປະຊາຊົນບັນດາເຜົ່າຕ້ານພວກສັກດີນາ, ລ່າເມືອງຂຶ້ນຜູ້ຮຸກຮານ. ໂດຍສະເພາະຢ່າງຍິ່ງເມື່ອເຕີບໃຫຍ່ຂຶ້ນ ປະທານ ໄດ້ສຳພັດກັບຄວາມທຸກລະທົມຂົມຂື່ນຂອງຊາດລາວ, ຂອງປະຊາຊົນລາວບັນດາເຜົ່າທີ່ສູນເສຍເອກະລາດ ແລະ ຕົກເປັນຂ້ອຍຂ້າຂອງພວກຈັກກະພັດລ່າເມືອງຂຶ້ນ. ດ້ວຍຄວາມມຸ່ງຫວັງຢາກກອບກູ້ເອກະລາດ ແລະ ອິດສະຫຼະພາບມາໃຫ້ປະເທດຊາດ ແລະ ປະຊາຊົນລາວ, ປະທານ ໄດ້ຕັດສິນໃຈເດີນເຂົ້າສູ່ເສັ້ນທາງແຫ່ງການຕໍ່ສູ້ຂອງປະຊາຊົນລາວບັນດາເຜົ່າ ຕ້ານພວກລ່າເມືອງຂຶ້ນຜູ້ຮຸກຮານ ແລະ ພວກສັກດີນາປະຕິການຂາຍຊາດ.

ປະທານ ຄຳໄຕ ສີພັນດອນ ກ່າວລາຍງານຕໍ່ກອງປະຊຸມສະພາແຫ່ງຊາດ ຊຸດທີ 5 ໃນໂອກາດໄດ້ຮັບການເລືອກຕັ້ງເປັນປະທານປະເທດ ແຫ່ງ ສປປ ລາວ

ປະທານ ຄໍາໄຕ ສີພັນດອນ ເກີດເມື່ອວັນທີ 08 ກຸມພາ 1923 ຢູ່ບ້ານໂຂງພະໃຫຍ່, ເມືອງໂຂງ, ແຂວງຈໍາປາສັກ; ເປັນບຸດຂອງພໍ່ນີ ນິລະໄຊ ແລະ ແມ່ສາຍບົວ ນິລະໄຊ ມີອ້າຍເອື້ອຍນ້ອງຮ່ວມກັນ 06 ຄົນ. ໂດຍກໍາເນີດໃນຄອບຄົວທີ່ມີມູນເຊື້ອຮັກຊາດ, ໃນຄອບຄົວຊາວນາທີ່ດຸໝັ່ນຂະຫຍັນພຽນ. ໃນເວລາຍັງນ້ອຍ ເຖິງວ່າປະທານ ຄໍາໄຕ ສີພັນດອນ ບໍ່ໄດ້ເຂົ້າຮຽນໜັງສືຍ້ອນຢູ່ບ້ານບໍ່ມີໂຮງຮຽນ ແຕ່ເພິ່ນກໍ່ໄດ້ຮູ້ຈັກເລື່ອງເລົ່າຕ່າງໆກ່ຽວກັບການຕໍ່ສູ້. ຍ້ອນຟັງການເລົ່າເລື່ອງຕ່າງໆຂອງຜູ້ໃຫຍ່, ເປັນຕົ້ນການເລົ່າເລື່ອງຂອງພໍ່ເຖົ້າໄຊຍະກຸມມານ ທີ່ໄດ້ເຂົ້າຮ່ວມຂະບວນລຸກຮືຂຶ້ນຢູ່ເມືອງໂຂງ ທີ່ໄດ້ຈັດຕັ້ງນໍາພາປະຊາຊົນດອນໂຂງ ຕໍ່ຕ້ານ ກອງທະຫານພວກລ່າເມືອງຂຶ້ນຝຣັ່ງ ຢູ່ລະຫວ່າງດອນໂສມກັບດອນເດດ ໃນເວລາທີ່ພວກລ່າເມືອງຂຶ້ນຝຣັ່ງ ເລີ່ມປະຕິບັດການເຊື່ອມຢຶດເອົາດິນແດນລາວເປັນເມືອງຂຶ້ນຂອງພວກເຂົາ. ພໍ່ຂອງເພິ່ນເອງກໍ່ເປັນຜູ້ໜຶ່ງທີ່ມີຈິດໃຈຮັກຊາດ, ກຽດຊັງພວກລ່າເມືອງຂຶ້ນຝຣັ່ງ ແລະ ພວກເຈົ້າສັກດີນາອາດຍາສິດທ້ອງຖິ່ນ ເຊິ່ງເພິ່ນເຄີຍໄດ້ສະແດງທ່າທີຄັດຄ້ານ, ຕ້ານການເກັບສ່ວຍ, ເກັບເກນກຸລີ, ເພິ່ນເຄີຍເລົ່າເລື່ອງຕ່າງໆກ່ຽວກັບການກົດຂີ່ຂູດຮີດຂອງຝຣັ່ງ ແລະ ສັກດີນາທ້ອງຖິ່ນຕໍ່ປະຊາຊົນລາວກໍ່ຄືການຕໍ່ສູ້ຂອງປະຊາຊົນລາວບັນດາເຜົ່າຕ້ານພວກລ່າເມືອງຂຶ້ນຝຣັ່ງເຊັ່ນ: ຂະບວນການຕໍ່ສູ້ຂອງຜູ້ມີບຸນ, ຂະບວນການຕໍ່ສູ້ຂອງອົງແກ້ວ ອົງກົມມະດໍາ ຢູ່ເຂດພາກໃຕ້ສູ່ປະທານ ຄໍາໄຕ ສີພັນດອນຟັງແຕ່ຍັງເຍົາໄວ ເຊິ່ງໄດ້ເປັນການປູກຝັງຈິດໃຈຮັກຊາດຄຽດແຄ້ນສັດຕູ ຕັ້ງແຕ່ໄວເດັກ.

ພໍອາຍຸໄດ້ 7 ປີ (1931), ພໍ່ເຖົ້າມະຫາແກ້ວ ເຊິ່ງເປັນຂ້າລາຊະການຂະແໜງການສຶກສາສິງຢູ່ວຽງຈັນໄດ້ລົງເມືອຢາມບ້ານຢູ່ເມືອງໂຂງ ຈຶ່ງໄດ້ຂໍອກເອົາລູກເອົາຫຼານຂຶ້ນໄປສອບເສັງເຂົ້າຮຽນຕໍ່ທີ່ວຽງຈັນ, ປະທານ ຄໍາໄຕ ສີພັນດອນ ກໍ່ເປັນຜູ້ໜຶ່ງທີ່ຖືກເລືອກເອົາຂຶ້ນເມືອຮຽນຢູ່ວຽງຈັນ. ເມື່ອໄດ້ມາຢູ່ວຽງຈັນນໍາພໍ່ເຖົ້າມະຫາແກ້ວ ປະທານ ຄໍາໄຕ ໄດ້ເຂົ້າຮຽນຢູ່ຊັ້ນປະຖົມ ແລະ ຫຼັງຈາກນັ້ນ ກໍ່ສອບເສັງເຂົ້າໂຮງຮຽນ ມັດທະຍົມ ຫຼື College PAVIE ເຊິ່ງເປັນໂຮງຮຽນມັດທະຍົມແຫ່ງດຽວຢູ່ປະເທດລາວໃນເວລານັ້ນ.

ຜ່ານໄລຍະ 10 ປີ ທີ່ຮຽນໜັງສືຊັ້ນປະຖົມ ແລະ ມັດທະຍົມ College PAVIE ຢູ່ວຽງຈັນ, ນອກຈາກໄດ້ຕັ້ງໃຈຮຽນ ແລະ ອອກແຮງງານຊ່ວຍວຽກຄອບຄົວຂອງພໍ່ເຖົ້າມະຫາແກ້ວ, ປະທານ ຄໍາໄຕ ຍັງໄດ້ຮັບການອົບຮົມບົ່ມສອນ ແລະ ຮຽນຮູ້ຫຼາຍສິ່ງຫຼາຍຢ່າງທີ່ເປັນປະໂຫຍດຈາກພໍ່ເຖົ້າມະຫາແກ້ວ ເປັນຕົ້ນແມ່ນ: ການປູກຝັງແນວຄິດຮັກຊາດ ໂດຍເລີ່ມຈາກການຮັກພາສາ-ວັນນະຄະດີ ແລະ ວັດທະນະທໍາອັນດີງາມທີ່ເປັນເອກະລັກຂອງຊາດລາວກໍ່ຄືຂອງທ້ອງຖິ່ນ; ການສ້າງຈິດສໍານຶກກ່ຽວກັບການຮຽນຮູ້ກັບສະພາບຕົວຈິງຕະຫຼອດຮອດຄວາມເປັນລະບຽບຮຽບຮ້ອຍ, ຄວາມຖະໜອມຖ່ອມຕົວ, ການສໍາມາຄາລະວະ ແລະ ການປະພຶດປະຕິບັດໃຫ້ຖືກຕ້ອງຕາມຮີດຄອງປະເພນີ ແລະ ອື່ນໆອີກ.

ທ້າຍປີ 1941 ພໍ່ເຖົ້າມະຫາແກ້ວ ໄດ້ເສຍຊີວິດກະທັນຫັນ ເຊິ່ງເຮັດໃຫ້ຊີວິດໃນໄວຮຽນມີບັນຫາດ້ານການສະໜັບສະໜູນສິ່ງເສີມ ແລະ ເຮັດໃຫ້ປະທານ ຄໍາໄຕ ສີພັນດອນ ຕັດສິນໃຈອອກໂຮງຮຽນໄປເສັງເຂົ້າເຮັດວຽກຢູ່ຂະແໜງໄປສະນີ. ອັນນີ້ຖືເປັນຈຸດປ່ຽນ

ອັນສໍາຄັນຈາກການເປັນນັກຮຽນໄປສູ່ການເປັນຂ້າລາຊະການ ເຊິ່ງຕໍ່ມາໄລຍະໜຶ່ງ ກໍ່ໄດ້ຖືກເລືອກໄປຮຽນຕໍ່ວິຊາສະເພາະ 2 ປີ ຢູ່ໄຊ່ງ່ອນ ພາກໃຕ້ຫວຽດນາມ. ພາຍຫຼັງຮຽນຈົບວິຊາສະເພາະໃນປີ 1944, ປະທານ ຄໍາໄຕ ໄດ້ກັບຄືນປະເທດໂດຍໄດ້ຮັບການແຕ່ງຕັ້ງໃຫ້ເປັນ "ນາຍສາຍ" ແລະ ໄດ້ໄປປະຈໍາການຢູ່ແຂວງຜົ້ງສາລີ. ຕໍ່ມາພວກຂຸນເສິກຍີ່ປຸ່ນ ໄດ້ເຂົ້າມາຍຶດເອົາອິນດູຈີນ ພວກຝຣັ່ງໄດ້ຍອມຈໍານົນຕໍ່ຍີ່ປຸ່ນ, ປະທານ ຄໍາໄຕ ສີພັນດອນ ຖືກສົ່ງໄປຄຸນມິງ (ມົນທົນຢຸນນານ ສປ ຈີນ) ຈາກນັ້ນໄປການກຸດຕາ (ອິນເດຍ) ແລະ ໄປໄຊ ງ່ອນ. ໃນເວລາທີ່ເພິ່ນຜ່ານປະເທດຕ່າງໆນັ້ນລ້ວນແຕ່ໄດ້ຮູ້, ໄດ້ເຫັນ, ໄດ້ສໍາພັດໂດຍກົງກັບຂະບວນການຕໍ່ສູ້ຕ້ານຈັກກະພັດຜູ້ຮຸກຮານຂອງປະຊາຊົນປະເທດເຫຼົ່ານັ້ນ ເຊັ່ນ: ຂະບວນການລຸກຮືຂຶ້ນຕ້ານພວກຂຸນເສິກຍີ່ປຸ່ນຂອງປະຊາຊົນຈີນ, ຂະບວນການຕ້ານຈັກກະພັດອັງກິດ ຂອງປະຊາຊົນອິນເດຍ ແລະ ຂະບວນການຕໍ່ຕ້ານພວກລ່າເມືອງຂຶ້ນຝຣັ່ງຂອງປະຊາຊົນພາກໃຕ້ຫວຽດນາມ. ຮອດປີ 1946 ປະທານ ຄໍາໄຕ ສີພັນດອນ ໄດ້ກັບມາລາວ ແລະ ຮັບລາຊະການຢູ່ປາກເຊ. ເວລານັ້ນຢູ່ລາວ ໄດ້ມີຂະບວນການຕໍ່ສູ້ຂອງປະຊາຊົນຕ້ານລ່າເມືອງຂຶ້ນຝຣັ່ງ ທີ່ກັບມາຮຸກຮານລາວອີກເທື່ອໃໝ່ຢູ່ພາກໃຕ້ ແລະ ມີການຈັດຕັ້ງລັດຖະບານລາວອິດສະຫຼະຕໍ່ຕ້ານ, ເຖິງວ່າບໍ່ສາມາດເຂົ້າຮ່ວມຈັດຕັ້ງການລຸກຮືຂຶ້ນຍຶດອໍານາດກໍ່ຕາມ, ແຕ່ຜົນສະທ້ອນຂອງຂະບວນການຕໍ່ຕ້ານຂອງປະຊາຊົນທົ່ວປະເທດ ກໍ່ຄືຂອງປະຊາຊົນທ້ອງຖິ່ນ ແຂວງຈໍາປາສັກ, ປາກເຊກໍ່ໄດ້ຂະຫຍາຍຕົວອອກຢ່າງກວ້າງຂວາງ ແລະ ແຂງແຮງ. ສິ່ງດັ່ງກ່າວໄດ້ສົ່ງຜົນສະທ້ອນໂດຍກົງ ເຖິງແນວຄິດຈິດໃຈຂອງປະທານ ຄໍາໄຕ ສີພັນດອນ, ເຮັດໃຫ້ເພິ່ນເລີ່ມມີການເຄື່ອນໄຫວຕໍ່ຕ້ານດ້ວຍຮູບການຕ່າງໆເຊັ່ນ: ຈັດຕັ້ງສະມາຄົມກິລາບານເຕະ, ຊ່ວງເຮືອ... ເຊິ່ງເພິ່ນເອງໄດ້ຮັບເລືອກເປັນປະທານສະມາຄົມເຫຼົ່ານັ້ນ, ອັນເປັນເງື່ອນໄຂອໍານວຍໃຫ້ເພິ່ນມີທ່າຖືກກົດໝາຍ ເພື່ອດໍາເນີນການເຄື່ອນໄຫວປິດລັບ; ຜ່ານຮູບການເຄື່ອນໄຫວດັ່ງກ່າວເພິ່ນໄດ້ເຕົ້າໂຮມຂົນຂວາຍປະຊາຊົນຊັ້ນຄົນຕ່າງໆເປັນຕົ້ນ: ຊາວໜຸ່ມ, ນັກຮຽນ, ຂ້າລາຊະການໃຫ້ເຄື່ອນໄຫວຕໍ່ຕ້ານໂດຍທາງລັບ, ຈົນເຮັດໃຫ້ພວກຝຣັ່ງລະແວງ ແລະ ຮຽກຕົວ ເພິ່ນໄປສອບສວນຫຼາຍຄັ້ງ. ໃນເງື່ອນໄຂທີ່ບໍ່ສາມາດສືບຕໍ່ເຄື່ອນໄຫວຕໍ່ຕ້ານພາຍໃຕ້ຮູບການຕ່າງໆ, ປະທານ ຄໍາໄຕ ສີພັນດອນ ໄດ້ຕິດຕໍ່ກັບຂະບວນການລາວອິດສະຫຼະ ເຊິ່ງມີເຂດທີ່ໝັ້ນຢູ່ແຖບຊາຍແດນລາວ-ໄທ. ຮອດເດືອນມີນາ 1947 ເພິ່ນໄດ້ປິດລັບອອກຈາກປາກເຊເຂົ້າໄປສູ່ຊາຍແດນໄທ ເພື່ອເຂົ້າຮ່ວມໃນຖັນແຖວກໍາລັງຕໍ່ຕ້ານ.

ນັ້ນແມ່ນບາດລ້ຽວສໍາຄັນໃນຊີວິດ ທັງເປັນຈຸດເລີ່ມຕົ້ນບົນເສັ້ນທາງປະຕິວັດຂອງປະທານ ຄໍາໄຕ ເຊິ່ງໃນເວລານັ້ນ ເພິ່ນເອງກໍ່ບໍ່ທັນມີຄວາມຮັບຮູ້ອັນເລິກເຊິ່ງ ແລະ ບໍ່ທັນມີບົດຮຽນຫຍັງພໍທີ່ໃດກ່ຽວກັບການຕໍ່ສູ້ ແລະ ປະຕິວັດ. ແຕ່ເພິ່ນຮູ້ດີທີ່ສຸດວ່ານັ້ນແມ່ນເສັ້ນທາງໜຶ່ງດຽວທີ່ຖືກຕ້ອງທີ່ສຸດ ແລະ ເປັນຄວາມຫວັງອັນໃໝ່, ເຖິງວ່າມັນເຕັມໄປດ້ວຍສິ່ງທ້າທາຍທົດສອບອັນລະອຽດລະອ້ຽວຂ້ຽວຂາດ ແລະ ຕ້ອງເອົາຊີວິດ ເປັນເດີມພັນກໍ່ຕາມ, ນັ້ນແມ່ນຄວາມຫວັງຢາກໃຫ້ປະເທດຊາດອັນແສນຮັກມີເອກະລາດ ແລະ ປະຊາຊົນລາວບັນດາເຜົ່າ ມີອິດສະຫຼະພາບ, ເປັນເຈົ້າຂອງປະເທດຊາດຢ່າງແທ້ຈິງ.

ຕະຫຼອດເວລາກວ່າເຄິ່ງສະຕະວັດຜ່ານມາ, ໂດຍຄຽງບ່າຄຽງໄຫຼ່ກັບ ປະທານ ໄກສອນ ພົມວິຫານ ແລະ ຜູ້ນຳຄົນອື່ນໆ, ປະທານ ຄຳໄຕ ສີພັນດອນ ໄດ້ອຸທິດສະຕິປັນຍາ ແລະ ກຳລັງວັງຊາຢ່າງບໍ່ຮູ້ອິດຮູ້ເມື່ອຍ ເພື່ອຈັດຕັ້ງນຳພາຂະບວນການປະຕິວັດ ເຊິ່ງໄດ້ເຮັດໃຫ້ການປະຕິວັດລາວເຕີບໃຫຍ່ຂະຫຍາຍຕົວ ແລະ ຍາດ ໄດ້ໄຊຊະນະຢ່າງຕໍ່ເນື່ອງ ໂດຍສຳເລັດການປະຕິວັດປົດປ່ອຍຊາດຢ່າງມີໄຊ ແລ້ວພາປະເທດຊາດກ້າວຂຶ້ນສູ່ຈຸດໝາຍສັງຄົມນິຍົມເທື່ອລະກ້າວຢ່າງໜັກແໜ້ນ ດັ່ງທຸກວັນນີ້. ດ້ວຍຄວາມມານະອົດທົນ, ປະດິດສ້າງໃນການຈັດຕັ້ງນຳພາຂະບວນການປະຕິວັດ, ເວລາໃດ ປະທານກໍ່ໄດ້ຮັບຄວາມນັບຖືຮັກແພງ ແລະ ເຊື່ອໝັ້ນໄວ້ວາງໃຈຈາກໝູ່ຄະນະ ກໍ່ຄືພະນັກງານນັກຮົບ ແລະ ທົ່ວປວງຊົນລາວ ເຊິ່ງເພິ່ນໄດ້ຮັບມອບໝາຍໜ້າທີ່ທີ່ສຳຄັນເປັນລຳດັບມາ. ໃນປີ 1952-1954 ເປັນປະທານຄະນະກຳມະການຕໍ່ຕ້ານເຂດກາງ, ປີ 1975 ເປັນຮອງນາຍົກລັດຖະມົນຕີ, ລັດຖະມົນຕີກະຊວງປ້ອງກັນປະເທດ, ຜູ້ບັນຊາການສູງສຸດ ແລະ ເລຂາຄະນະພັກກະຊວງປ້ອງກັນປະເທດ, ປີ 1991 ເປັນປະທານພັກ ແລະ ນາຍົກລັດຖະມົນຕີ ແລະ ປີ 1996 ເປັນປະທານພັກ, ປະທານປະເທດ ແຫ່ງ ສປປ ລາວ.

ເປັນອັນວ່າ, ຜ່ານຊີວິດຮໍ່າຮຽນ, ການຮັບລາຊະການໃນລະບອບການປົກຄອງເກົ່າ ປະທານ ໄດ້ເຫັນແຈ້ງເຖິງຖານະອັນຕໍ່າຕ້ອຍຂອງຄົນລາວ, ເຫັນແຈ້ງເຖິງການສູນເສຍເອກະລາດຂອງປະເທດຊາດ ແລະ ປະຊາຊົນລາວບັນດາເຜົ່າທີ່ຕົກເປັນຂ້ອຍຂ້າຂອງພວກຈັກກະພັດລ່າເມືອງຂຶ້ນ ສົມທົບກັບການໄດ້ຮັບຜົນສະທ້ອນຈາກຂະບວນການຕໍ່ຕ້ານຂອງປະຊາຊົນລາວກໍ່ຄືຂະບວນການຕໍ່ສູ້ຂອງປະຊາຊົນອິນດູຈີນຕ້ານພວກລ່າເມືອງຂຶ້ນຜູ້ຮຸກຮານ ໄດ້ເຮັດໃຫ້ປະທານຈາກຊົນຊັ້ນຊາວນາທີ່ທຸກຍາກ ໄດ້ມີສະຕິຕື່ນຕົວຮັກຊາດ, ມີຄວາມຄຽດແຄ້ນສັດຕູຜູ້ຮຸກຮານ ແລະ ໄດ້ຕັດສິນໃຈເຂົ້າຮ່ວມໃນຖັນແຖວກຳລັງຕໍ່ຕ້ານ. ນັ້ນເປັນຈຸດເລີ່ມຕົ້ນໃນເສັ້ນທາງເຄື່ອນໄຫວປະຕິວັດຂອງປະທານ ຄຳໄຕ ສີພັນດອນ, ເປັນມູນເຊື້ອອັນດີງາມໄວ້ໃຫ້ລູກຫຼານຊາວລາວເຮົາໄດ້ສືບທອດໃນຂັ້ນຕໍ່ໄປ. ບັນດາຄຸນງາມຄວາມດີ, ການເສຍສະຫຼະໃນເສັ້ນທາງຕໍ່ສູ້ກູ້ຊາດ, ຕ້ານຈັກກະພັດລ່າຂຶ້ນແບບເກົ່າ ແລະ ໃໝ່. ໄດ້ກາຍເປັນແວ່ນແຍງອັນປະເສີດ, ເປັນຕົວແບບອັນໃສແຈ້ງ; ພວກເຮົາສະມາຊິກພັກ, ພະນັກງານ, ລັດຖະກອນ, ທະຫານ, ຕຳຫຼວດ ແລະ ປະຊາຊົນລາວບັນດາເຜົ່າ ຂໍສະແດງຄວາມຮູ້ບຸນຄຸນ ແລະ ຈະຈົດຈຳບຸນຄຸນຂອງປະທານ ຄຳໄຕ ສີພັນດອນ ໄວ້ຕະຫຼອດການະນານ...ჯ

ເອກະສານອ້າງອີງ:

1. ການເຄື່ອນໄຫວປະຕິວັດຂອງປະທານ ຄຳໄຕ ສີພັນດອນ (ໂດຍສັງເຂບ) ສະຖາບັນການເມືອງ ແລະ ການປົກຄອງແຫ່ງຊາດ (ຫ້ອງການຄົ້ນຄວ້າທິດສະດີ ແລະ ພຶດຕິກຳ), ພິມຄັ້ງທີ 2 ພິມທີ່ໂຮງພິມແຫ່ງລັດ ປີ2018.

2. ປື້ມປະມວນຮູບພາບກ່ຽວກັບຊີວິດ ແລະ ການເຄື່ອນໄຫວປະຕິວັດ ເພື່ອປະກອບສ່ວນສະຫຼອງວັນຄ້າຍວັນເກີດຂອງ ປະທານ ຄຳໄຕ ສີພັນດອນຄົບຮອບ 95 ປີ ພິມທີ່ໂຮງພິມປານຄຳຈຳປາ ປີ 2018

ປັບປຸງວຽກງານຈັດຕັ້ງພັກ-ພະນັກງານ ຢູ່ແຂວງຄໍາມ່ວນ

ໂດຍ: ຄໍາເຊັນ ໃນຍອດທັມ

ພັກເຮົາເວລາໃດກໍ່ຖືວ່າ: ວຽກງານຈັດຕັ້ງພັກ-ພະນັກງານ ແມ່ນວຽກງານສໍາຄັນ, ເປັນວຽກງານແຖວໜ້າທີ່ສອດຫ້ອຍໃນທຸກຂົງເຂດວຽກງານ, ທັງແມ່ນຄວາມຮັບຜິດຊອບໂດຍກົງຂອງຄະນະພັກແຕ່ລະຂັ້ນ ທີ່ຈະຕ້ອງເອົາໃສ່ໃຈຊີ້ນໍາ-ນໍາພາຢ່າງໃກ້ຊິດໃນການປັບປຸງວຽກງານດັ່ງກ່າວໃຫ້ມີຄວາມເຂັ້ມແຂງ, ຖືກຕ້ອງສອດຄ່ອງກັບທິດທີ່ພັກໄດ້ກໍານົດໄວ້ ດັ່ງກອງປະຊຸມໃຫຍ່ ຂອງພັກປະຊາຊົນປະຕິວັດລາວ ສະໄໝທີ XI ໄດ້ກໍານົດໄວ້ວ່າ: "ປັບປຸງການຈັດຕັ້ງຮາກຖານພັກແຕ່ລະຂັ້ນໃຫ້ມີຄວາມເຂັ້ມແຂງ, ເດັດດ່ຽວແກ້ໄຂບັນຫາທີ່ຄົງຄ້າງຢູ່ພາຍໃນພັກ ແລະ ເຮັດໃຫ້ການຈັດຕັ້ງຮາກຖານພັກ ມີຄວາມປອດໃສ, ເຂັ້ມແຂງ ແລະ ໜັກແໜ້ນ ເປັນແກນນໍາໃນລະບົບການເມືອງ" ພ້ອມກັນນັ້ນ, ປັບປຸງລະບົບການຈັດຕັ້ງ, ກົງຈັກ ແລະ ກົນໄກເຄື່ອນໄຫວ ຂອງບັນດາອົງການອໍານາດລັດ ໃຫ້ເຂັ້ມແຂງ ແລະ ມີປະສິດທິພາບ. ການປັບປຸງລະບົບການຈັດຕັ້ງ, ກົງຈັກ ແລະ ກົນໄກເຄື່ອນໄຫວ ຂອງບັນດາອົງການອໍານາດລັດ ໃນຊຸມປີຕໍ່ໜ້າ ຕ້ອງສຸມໃສ່ແກ້ໄຂສະພາບຊໍ້າຊ້ອນດ້ານພາລະບົດບາດ ແລະ ເຮັດໃຫ້ສາຍໃຍການຈັດຕັ້ງມີການກໍານົດພາລະບົດບາດທີ່ຈະແຈ້ງ ແລະ ຮັດກຸມ, ເຮັດໃຫ້ຂະໜາດຂອງກົງຈັກບໍ່ໃຫຍ່ໂຕ, ອົງປະກອບສາຍງານກະທັດຮັດ ແຕ່ເປັນລະບົບໂລ່ງລ່ຽນ ແລະ ກ້າວສູ່ການເຊື່ອມລະຫວ່າງຂອດຕ່າງໆ ດ້ວຍອຸປະກອນທັນສະໄໝ ຄຽງຄູ່ກັບການເຮັດໃຫ້ຖັນແຖວລັດຖະກອນມີຈໍານວນໜ້ອຍລົງ ແຕ່ຄຸນນະພາບເພີ່ມຂຶ້ນ; ປັບປຸງກົນໄກຄຸ້ມຄອງໃຫ້ມີຄວາມເປັນລະບົບເອກະພາບ ແລະ ເຂັ້ມແຂງ ສ້າງການຫັນປ່ຽນຢ່າງແຂງແຮງ ແລະ ເລິກເຊິ່ງ ໃນວຽກງານພະນັກງານ ສ້າງ ແລະ ຈັດຕັ້ງປະຕິບັດແຜນກໍານົດພະນັກງານຢ່າງເປັນລະບົບ, ເອົາໃຈໃສ່ບໍາລຸງສ້າງ, ເລືອກເຟັ້ນ ແລະ ຈັດວາງພະນັກງານແບບວິທະຍາສາດ ແລະ ມີຄວາມເປັນເຈົ້າການ.

ໂດຍປະຕິບັດຕາມແນວທາງນະໂຍບາຍ ຂອງພັກ ທີ່ວາງອອກນັ້ນ, ໄລຍະຜ່ານມາຄະນະບໍລິຫານງານພັກແຂວງຄໍາມ່ວນ ໄດ້ເອົາໃຈໃສ່ຕໍ່ການປັບປຸງວຽກງານຈັດຕັ້ງພັກ-ພະນັກງານ ໃຫ້ມີຄວາມເຂັ້ມແຂງ ແລະ ໜັກແໜ້ນ ສາມາດເປັນແກນນໍາໃນລະບົບກົງຈັກການຈັດຕັ້ງພັກແຕ່ລະຂັ້ນ, ດ້ວຍການຫັນເອົາແນວທາງນະໂຍບາຍ, ມະຕິ, ຄໍາສັ່ງ, ຂໍ້ກໍານົດຕ່າງໆ ຂອງພັກມາເປັນແຜນການ, ແຜນງານ ແລະ ໂຄງການອັນລະອຽດໃຫ້ຖືກຕ້ອງ, ສອດຄ່ອງກັບສະພາບເງື່ອນໄຂຕົວຈິງ ຂອງທ້ອງຖິ່ນຕົນ ໂດຍຖືເອົາການປັບປຸງວຽກງານຈັດຕັ້ງພັກ-ພະນັກງານ ຕິດພັນກັບຂະບວນການວຽກງານ 3 ສ້າງ ທັງເອົາໃຈໃສ່ນໍາພາ-ຊີ້ນໍາຈັດຕັ້ງປະຕິບັດວຽກພັກ-ພະນັກງານໃຫ້ໜັກແໜ້ນທາງດ້ານການເມືອງ-ແນວຄິດ, ການຈັດຕັ້ງ ແລະ ແບບແຜນນໍາພາ ເຮັດໃຫ້ການຈັດຕັ້ງຮາກຖານພັກ ມີຄວາມເຕີບໃຫຍ່ຂະຫຍາຍຕົວ ສາມາດເຄື່ອນໄຫວນໍາພາສອດຄ່ອງກັບການຂະຫຍາຍຕົວທາງດ້ານເສດຖະກິດ-ສັງຄົມ ແລະ ຮັບປະກັນໃຫ້ມີການຈັດຕັ້ງພັກນໍາພາທຸກຂົງເຂດວຽກງານ. ການຈັດຕັ້ງຮາກຖານພັກ ໄດ້ຮັບການປັບປຸງໃຫ້ມີຄວາມໜັກແໜ້ນ ເຂັ້ມແຂງທາງດ້ານຈໍານວນ ແລະ ຄຸນນະພາບດີຂຶ້ນເທື່ອລະກ້າວ ແຕ່ລະດ້ານດັ່ງນີ້:

ວຽກງານກໍ່ສ້າງພັກ ຄະນະພັກແຕ່ລະຂັ້ນ ໄດ້

ເປັນເຈົ້າການສືບຕໍ່ຈັດຕັ້ງເຜີຍແຜ່, ເຊື່ອມຊຶມ ບັນດາມະຕິ, ຄຳສັ່ງຕ່າງໆ ຂອງພັກ ແລະ ກົດໝາຍລະບຽບການຂອງລັດ, ມູນເຊື້ອວັນສຳຄັນຂອງຊາດ, ຂອງພັກໄດ້ທັງໝົດ 98 ຄັ້ງ, ມີສະມາຊິກພັກ-ພະນັກງານ ເຂົ້າຮ່ວມ 24.114 ສະຫາຍ, ຍິງ 10.956 ສະຫາຍ. ນອກນັ້ນ, ພວກເຮົາຍັງໄດ້ນຳເອົາບັນດານິຕິກຳ ກ່ຽວກັບວຽກງານກໍ່ສ້າງພັກ-ພະນັກງານ ແລະ ປັບປຸງກົງຈັກການຈັດຕັ້ງ ເຜີຍແຜ່, ເຊື່ອມຊຶມໃຫ້ຄະນະພັກ, ສະມາຊິກພັກ-ພະນັກງານໃນຂອບເຂດສິດຄຸ້ມຄອງຂອງຕົນຢ່າງເປັນປະຈຳ ເພື່ອເຮັດໃຫ້ພະນັກງານ-ສະມາຊິກພັກ ກໍໄດ້ພາລະບົດບາດ, ສິດ ແລະ ໜ້າທີ່ຄວາມຮັບຜິດຊອບການເມືອງ, ຮັບຮູ້ໄດ້ແນວທາງນະໂຍບາຍຂອງພັກ ປະກອບສ່ວນຢ່າງຕັ້ງໜ້າໃນການປະຕິບັດໜ້າທີ່ທີ່ພັກ ແລະ ລັດມອບໝາຍໃຫ້.

ດ້ານການຈັດຕັ້ງ ຄະນະພັກ, ຄະນະຈັດຕັ້ງແຕ່ລະຂັ້ນ ໄດ້ເອົາໃຈໃສ່ປັບປຸງການຈັດຕັ້ງຂອງພັກ ໂດຍຕິດພັນກັບການປັບປຸງກົງຈັກລັດ ໃຫ້ມີຄວາມສອດຄ່ອງ, ເຄື່ອນໄຫວມີປະສິດທິພາບ ແລະ ປະສິດທິຜົນ ໂດຍໄດ້ຈັດຕັ້ງປະຕິບັດຕາມຄຳສັ່ງ ເລກທີ 01/ກມສພ, ລົງວັນທີ 03 ມັງກອນ 2018, ຄຳແນະນຳ ເລກທີ 291/ຄຈສພ, ລົງວັນທີ 26 ເມສາ 2018, ຄຳສັ່ງ ຂອງຄະນະເລຂາທິການສູນກາງພັກ ເລກທີ 190/ ຄລສພ, ລົງວັນທີ 29 ກັນຍາ 2021 ວ່າດ້ວຍການປັບປຸງກົງຈັກການຈັດຕັ້ງຂອງບັນດາກະຊວງ-ອົງການ ແລະ ທ້ອງຖິ່ນ ແລະ ຄຳແນະນຳ ຂອງຄະນະປະຈຳພັກແຂວງຄຳມ່ວນ ເລກທີ 07/ຄປຈ.ຄມ, ລົງວັນທີ 21 ມິຖຸນາ 2021 ກ່ຽວກັບການເພີ່ມທະວີການກໍ່ສ້າງໜ່ວຍພັກປອດໃສ, ເຂັ້ມແຂງ, ໜັກແໜ້ນ; ຄະນະພັກແຕ່ລະຂັ້ນໄດ້ເອົາໃຈໃສ່ ຊຸກຍູ້, ຕິດຕາມບັນດາໜ່ວຍພັກ ປີ 2023 ສຳເລັດການປະເມີນໜ່ວຍພັກປອດໃສ, ເຂັ້ມແຂງ, ໜັກແໜ້ນ ມີ 1.115 ໜ່ວຍ, ກຳລັງກະກຽມປະເມີນ 85 ໜ່ວຍ. ພ້ອມກັນນັ້ນ, ກໍ່ໄດ້ເອົາໃຈໃສ່ໃນວຽກງານຂະຫຍາຍພັກ ປະຕິບັດຕາມກົດລະບຽບພັກສະໄໝທີ XI ແລະ ຄຳແນະນຳ ເລກທີ 102/ຄຈສພ, ລົງວັນທີ 24 ມິຖຸນາ 2021 ກ່ຽວກັບການຈັດຕັ້ງປະຕິບັດກົດລະບຽບພັກ ເອົາໃຈໃສ່ຄົ້ນຄວ້າ, ເລືອກເຟັ້ນ, ຕິດຕາມ, ກວດກາການເຄື່ອນໄຫວ, ຊີວະປະຫວັດ, ການປະຕິບັດໜ້າທີ່ວຽກງານທີ່ຖືກມອບໝາຍ ການຝຶກຝົນຫຼໍ່ຫຼອມຕົນເອງ ຂອງເປົ້າໝາຍ ແລະ ທົດສອບໃນຂະບວນການວຽກງານຕົວຈິງ ແລະ ໄດ້ແບ່ງຄວາມຮັບຜິດຊອບຈະແຈ້ງ ລະຫວ່າງ ຄະນະຈັດຕັ້ງ ແລະ ຄະນະໂຄສະນາອົບຮົມ ໃນການຈັດຕັ້ງຮຽນສະໜັບສະໜູນ, ຮຽນກົດລະບຽບພັກ ແລະ ສະເໜີຂໍອະນຸມັດຈາກຄະນະພັກຂັ້ນເທິງຕາມລະບຽບຂັ້ນຕອນການຂະຫຍາຍພັກ, ປີ 2023 ຄົ້ນຄວ້າມະຫາຊົນຜູ້ກ້າວໜ້າເຂົ້າຮຽນສະໜັບສະໜູນ 900 ສະຫາຍ, ຍິງ 329 ສະຫາຍ, ຄົ້ນຄວ້າມະຫາຊົນກ້າວໜ້າເຂົ້າຮຽນກົດລະບຽບພັກ 928 ສະຫາຍ, ຍິງ 332 ສະຫາຍ, ຂະຫຍາຍມະຫາຊົນຜູ້ກ້າວໜ້າເຂົ້າເປັນສະມາຊິກພັກສຳຮອງ 923 ສະຫາຍ, ຍິງ 331 ສະຫາຍ ແລະ ເລື່ອນສະມາຊິກພັກສຳຮອງຂຶ້ນເປັນສະມາຊິກພັກສົມບູນ 903 ສະຫາຍ, ຍິງ 321 ສະຫາຍ.

ວຽກງານປັບປຸງກົງຈັກ: ຄະນະພັກ, ອົງການປົກຄອງແຕ່ລະຂັ້ນ ໄດ້ປະຕິບັດຕາມຄຳສັ່ງຂອງຄະນະເລຂາທິການສູນກາງພັກ ເລກທີ 190/ຄລສພ ແລະ ຄຳແນະນຳ ຂອງນາຍົກລັດຖະມົນຕີ ເລກທີ 01/ນຍ ວ່າດ້ວຍການປັບປຸງກົງຈັກການຈັດຕັ້ງຕາມທິດກະທັດຮັດ, ສົມເຫດສົມຜົນ, ເຄື່ອນໄຫວມີປະສິດທິພາບ, ປະຕິບັດຕາມທິດ 3 ສ້າງ ແລະ ຄຳສັ່ງຂອງເຈົ້າແຂວງ ເລກທີ 01/ຈຂ, ລົງວັນທີ 18 ມັງກອນ 2022 ວ່າດ້ວຍການເພີ່ມທະວີ, ການຄົ້ນຄວ້າປັບປຸງກົງຈັກການຈັດຕັ້ງພາຍໃນເມືອງ, ພະແນກການ ແລະ ອົງການທຽບເທົ່າພາຍໃນແຂວງ; ມາຮອດປະຈຸບັນການປັບປຸງກົງຈັກວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງບັນດາພະແນກການ-ອົງການທຽບເທົ່າຂັ້ນແຂວງຄື: ພະແນກການສຳເລັດ 14 ພະແນກການ, ອົງການທຽບເທົ່າ ຂັ້ນແຂວງ 12 ອົງການ; ຂັ້ນເມືອງ 10 ຕົວເມືອງ. ສຳລັບປັບປຸງກົງຈັກການຈັດຕັ້ງ ແລະ ການເຄື່ອນໄຫວ, ຄົ້ນຄວ້າກຳນົດຕຳແໜ່ງງານ, ພາລະບົດບາດ ຂອງຄະນະຈັດຕັ້ງແຂວງຄຳມ່ວນ

ຈາກ 5 ຂະແໜງມາເປັນ 4 ຂະແໜງ, ຄະນະຈັດຕັ້ງເມືອງ ຈາກ 4 ໜ່ວຍງານມາເປັນ 3 ໜ່ວຍງານແມ່ນສໍາເລັດ.

ວຽກງານພະນັກງານ: ຄະນະພັກ, ຄະນະຈັດຕັ້ງແຕ່ລະຂັ້ນ ໄດ້ຍົກສູງຄວາມຮັບຜິດຊອບຂອງຕົນ ຖືເອົາວຽກງານດັ່ງກ່າວ ເປັນບູລິມະສິດ ໂດຍເລີ່ມຈາກການຄົ້ນຄວ້າ, ກໍາແໜ້ນ ແລະ ຜັນຂະຫຍາຍມະຕິ ຂອງຄະນະບໍລິຫານງານສູນກາງພັກ ເລກທີ 04/ຄບສພ ວ່າດ້ວຍເພີ່ມທະວີການນໍາພາຂອງພັກ ເພື່ອສ້າງການຫັນປ່ຽນຢ່າງແຂງແຮງ ແລະ ເລິກເຊິ່ງ ໃນວຽກງານພະນັກງານ ແລະ ຈັດຕັ້ງປະຕິບັດຕາມມະຕິ ເລກທີ 032/ກມສພ ແລະ ຄໍາແນະນໍາ ຂອງຄະນະຈັດຕັ້ງສູນກາງພັກ ເລກທີ 292/ຄຈສພ, ຄະນະພັກແຕ່ລະຂັ້ນ ໄດ້ເອົາໃຈໃສ່ຊີ້ນໍາການສ້າງແຜນກໍານົດພະນັກງານນໍາພາ-ຄຸ້ມຄອງ ທີ່ຂຶ້ນກັບສິດຄຸ້ມຄອງຂອງຕົນ ຕາມລະບຽບ, ຫຼັກການ ທີ່ກໍານົດໄວ້, ຮັບປະກັນດ້ານໂຄງປະກອບເພດ, ເຜົ່າ ແລະ ຕາມທິດຫັນເປັນໜຸ່ມ. ພ້ອມກັນນັ້ນ, ກໍ່ໄດ້ສືບຕໍ່ປະຕິບັດການປະເມີນແຜນກໍານົດພະນັກງານນໍາພາ-ຄຸ້ມຄອງຂັ້ນແຂວງ ແລະ ເມືອງຄຸ້ມຄອງ, ເອົາໃຈໃສ່ບໍາລຸງ-ກໍ່ສ້າງພະນັກງານ-ລັດຖະກອນ, ທະຫານ, ຕໍາຫຼວດທາງດ້ານທິດສະດີການເມືອງ-ການປົກຄອງ ແລະ ວຽກງານວິຊາສະເພາະຕາມແຜນບໍາລຸງ-ກໍ່ສ້າງ ຢູ່ສະຖາບັນການສຶກສາທັງພາຍໃນ ແລະ ຕ່າງປະເທດ ໄດ້ທັງໝົດ 318 ສະຫາຍ, ຍິງ 10 ສະຫາຍ, ສົ່ງໄປບໍາລຸງວຽກງານຕ່າງໆ ມີ 54 ສະຫາຍ, ຍິງ 10 ສະຫາຍ; ໄປຮຽນລະບົບກໍ່ສ້າງມີ 21 ສະຫາຍ, ຍິງ 06 ສະຫາຍ, ໃນນັ້ນ, ໄປຍົກລະດັບທິດສະດີຂັ້ນສູງຢູ່ ສສ ຫວຽດນາມ 5 ເດືອນ ມີ 01 ສະຫາຍ, ໄປບໍາລຸງຍົກລະດັບທິດສະດີຂັ້ນສູງ 9 ເດືອນ ມີ 03 ສະຫາຍ; ຂັ້ນກາງມີ 60 ສະຫາຍ, ຍິງ 12 ສະຫາຍ; ຂັ້ນຕົ້ນ ມີ 119 ສະຫາຍ, ຍິງ 42 ສະຫາຍ ແລະ ບໍາລຸງທິດສະດີ 45 ວັນ ມີ 60 ສະຫາຍ, ຍິງ 35 ສະຫາຍ. ຄຽງຄູ່ກັນນັ້ນ ຍັງໄດ້ເອົາໃຈໃສ່ຈັດຕັ້ງປະຕິບັດນິຕິກໍາກ່ຽວກັບ ການຄຸ້ມຄອງພະນັກງານ ເປັນຕົ້ນແມ່ນການຄຸ້ມຄອງຊີວະປະຫວັດ, ການເຄື່ອນໄຫວ, ສະຖິຕິ, ຄົ້ນຄວ້າສັບຊ້ອນ, ຈັດວາງພະນັກງານ ໂດຍອີງຕາມແຜນກໍານົດພະນັກງານ, ຕາມຄວາມຮູ້, ຄວາມສາມາດ, ຕາມຄວາມຮຽກຮ້ອງຕ້ອງການຂອງໜ້າທີ່ການເມືອງ, ມີການປະສານງານກັບພາກສ່ວນທີ່ກ່ຽວຂ້ອງ, ພືວພັນສາຍຕັ້ງ ແລະ ສາຍຂວາງກ່ອນຈະສະເໜີຕໍ່ຄະນະພັກຂັ້ນເທິງພິຈາລະນາຕົກລົງ.

ປະຈຸບັນທົ່ວແຂວງ ມີ 10 ອົງຄະນະພັກເມືອງ, ມີ 02 ຄະນະພັກ ປກຊ-ປກສ, ມີການຈັດຕັ້ງຮາກຖານພັກທັງໝົດ 1.302 ຮາກຖານ; ໃນນັ້ນມີຄະນະພັກຮາກຖານ 102 ຮາກຖານ, ໜ່ວຍພັກທັງໝົດ 1.200 ໜ່ວຍ, ໜ່ວຍພັກຮາກຖານ 713 ໜ່ວຍພັກ ແລະ ໜ່ວຍພັກຂຶ້ນກັບຄະນະພັກຮາກຖານ 487 ໜ່ວຍ; ທຽບໃສ່ ປີ 2022 ມີໜ່ວຍພັກເພີ່ມຂຶ້ນ 18 ໜ່ວຍ, ສະມາຊິກພັກທັງໝົດ 22.672 ສະຫາຍ, ຍິງ 6.246 ສະຫາຍ; ສະມາຊິກພັກສໍາຮອງ 1.513 ສະຫາຍ, ຍິງ 482 ສະຫາຍ; ປະຈຸບັນແຂວງຄໍາມ່ວນ ມີພະນັກງານ-ລັດຖະກອນ ທັງໝົດ 9.158 ຄົນ, ຍິງ 4.774 ຄົນ, ໃນນັ້ນຂັ້ນແຂວງ 2.258 ຄົນ, ຍິງ 1.128 ຄົນ; ຂັ້ນເມືອງ 6.900 ຄົນ, ຍິງ 3.646 ຄົນ.

ຄຽງຄູ່ກັບຜົນສໍາເລັດທີ່ກ່າວມາຂ້າງເທິງນັ້ນ, ເຖິງວ່າໄດ້ຈັດຕັ້ງປະຕິບັດຢ່າງເປັນລະບົບຕໍ່ເນື່ອງແລ້ວກໍ່ຕາມ ແຕ່ເຫັນວ່າຍັງມີຈຸດອ່ອນ, ຂໍ້ຄົງຄ້າງຈໍານວນໜຶ່ງ ທີ່ຄະນະພັກແຕ່ລະຂັ້ນ ຈະຕ້ອງສືບຕໍ່ປັບປຸງແກ້ໄຂໃນຕໍ່ໜ້າດັ່ງນີ້:

1. ຄະນະພັກ, ອົງການເສນາທິການທີ່ເຮັດວຽກງານຈັດຕັ້ງພັກ-ພະນັກງານແຕ່ລະຂັ້ນ ຄວາມຮັບຮູ້ເຂົ້າໃຈຕໍ່ບັນດານິຕິກໍາຕ່າງໆ ກ່ຽວກັບວຽກງານຈັດຕັ້ງພັກ-ພະນັກງານ ຍັງບໍ່ທັນໄດ້ດີເທົ່າທີ່ຄວນ, ຄະນະພັກບາງບ່ອນຄວາມເປັນເຈົ້າການໃນການຈັດຕັ້ງຜັນຂະຫຍາຍເນື້ອໃນຈິດໃຈດັ່ງກ່າວຍັງບໍ່ທັນສູງ, ບໍ່ທັນສາມາດລົງເລິກບັນຫາທີ່ຕິດພັນລະຫວ່າງນິຕິກໍາ ແລະ ພຶດຕິກໍາຕົວຈິງຍັງບໍ່ທັນໄດ້ດີ ສະແດງອອກຢູ່ບ່ອນວ່າ ບໍ່ທັນໄດ້ເອົາໃຈໃສ່ຊີ້ນໍາຢ່າງແທດເຖິງໃນການຫັນເອົາມະຕິກອງປະຊຸມໃຫຍ່ ຄັ້ງທີ X ຂອງອົງຄະນະພັກແຂວງກ່ຽວກັບວຽກງານພັກ-ພະນັກງານ ແລະ ປັບປຸງກົງ

ຈັກການຈັດຕັ້ງ ມາເປັນອັນລະອຽດ ແລະ ສ້າງເງື່ອນໄຂອຳນວຍຄວາມສະດວກ ໃຫ້ແກ່ການຈັດຕັ້ງປະຕິບັດວຽກງານດັ່ງກ່າວ.

2. ການສ້າງໜ່ວຍພັກປອດໃສ, ເຂັ້ມແຂງ, ໜັກແໜ້ນ ເຖິງແມ່ນວ່າຈະມີຄວາມເອົາໃຈໃສ່ ແຕ່ຄະນະພັກບາງບ່ອນຍັງຖືເບົາ ແລະ ມີຄວາມຊັກຊ້າບໍ່ທັນທັນເອົາແຜນການກໍ່ສ້າງໜ່ວຍພັກ ມາເປັນແຜນການເຄື່ອນໄຫວປະຈຳເດືອນຂອງຕົນ, ເວລາຕີລາຄາຈັດແບ່ງປະເພດ ຍັງມີລັກສະນະເຫັນອົກເຫັນໃຈກັນ, ບໍ່ອີງໃສ່ແຜນການ ແລະ ຜົນສຳເລັດຕົວຈິງເຮັດໃຫ້ການຕີລາຄາບໍ່ຊັດເຈນ ແລະ ຮາກຖານພັກຈຳນວນໜຶ່ງຖືເບົາບໍ່ປາກປະເມີນໜ່ວຍພັກປອດໃສ, ເຂັ້ມແຂງ, ໜັກແໜ້ນ ປະຈຳປີ; ການຂະຫຍາຍພັກທາງດ້ານຈຳນວນ ແມ່ນເພີ່ມຂຶ້ນ ແຕ່ຍັງບໍ່ທັນຮັບປະກັນຄຸນນະພາບ, ບໍ່ຕິດພັນກັບຂະບວນການວຽກງານຕົວຈິງ, ບາງບ່ອນຂະຫຍາຍບໍ່ຖືກຕ້ອງ ຕາມບາດກ້າວຂັ້ນຕອນ, ການຄົ້ນຄວ້າບາງເປົ້າໝາຍບໍ່ລະອຽດເລິກເຊິ່ງ, ບໍ່ຕິດພັນກັບການປ້ອງກັນພັກ-ພະນັກງານ; ສະມາຊິກພັກຈຳນວນໜຶ່ງຄວາມຮັບຮູ້-ເຂົ້າໃຈໃນການເຂົ້າພັກບໍ່ຖືກຕ້ອງ, ເຂົ້າພັກເພື່ອຫວັງຜົນປະໂຫຍດສ່ວນຕົວ, ບາງບ່ອນມີລັກສະນະຈຸ້ມເຈື້ອ, ກຸ່ມກ້ອນ, ເຂົ້າເປັນສະມາຊິກພັກແລ້ວ ຂາດຄວາມເປັນແບບຢ່າງນຳພາ, ບໍ່ເປັນການເພີ່ມກຳລັງແຮງໃຫ້ແກ່ການຈັດຕັ້ງພັກ; ການຂະຫຍາຍພັກຢູ່ຮາກຖານສຳນັກງານ-ອົງການມີຫຼາຍ, ແຕ່ຢູ່ຮາກຖານບ້ານແມ່ນມີໜ້ອຍ.

3. ຄະນະພັກ, ຄະນະຈັດຕັ້ງຈຳນວນໜຶ່ງຍັງບໍ່ທັນບຸກທະລຸຢ່າງແຂງແຮງ ດ້ານທັດສະນະໃນການປັບປຸງກົງຈັກການຈັດຕັ້ງຕາມທິດກະທັດຮັດ, ພະແນກການ-ອົງການ, ເມືອງຈຳນວນໜຶ່ງເຖິງໄດ້ສຳເລັດການປັບປຸງກົງຈັກ ແລະ ພາລະບົດບາດ, ແຕ່ການວິເຄາະ, ວິໄຈໜ້າວຽກກຳນົດຕຳແໜ່ງງານ ຍັງບໍ່ລະອຽດ, ຍັງບໍ່ສຳເລັດ ເຮັດໃຫ້ການສັບຊ້ອນ, ຈັດວາງບຸກຄະລາກອນຍັງພົບຄວາມຫຍຸ້ງຍາກ; ພະນັກງານທີ່ເຮັດວຽກງານຈັດຕັ້ງແຕ່ລະຂັ້ນ ຍັງບໍ່ທັນເປັນເຈົ້າການໃນການຄົ້ນຄວ້າ, ເຊື່ອມຊຶມ, ກຳແໜ້ນນິຕິກຳວຽກງານຈັດຕັ້ງ ຢ່າງເລິກເຊິ່ງ ເຮັດໃຫ້ການປະຕິບັດໜ້າທີ່ເປັນເສນາທິການໃຫ້ຄະນະພັກບໍ່ໄດ້ດີເທົ່າທີ່ຄວນ. ຍ້ອນຄວາມຮູ້, ຄວາມສາມາດ ຂອງພະນັກງານທີ່ເຮັດວຽກງານຈັດຕັ້ງຈຳນວນໜຶ່ງບໍ່ໄດ້ຜ່ານການຝຶກອົບຮົມ ວຽກງານຈັດຕັ້ງ ເປັນສາເຫດໜຶ່ງທີ່ເຮັດໃຫ້ການຈັດຕັ້ງປະຕິບັດວຽກງານກໍ່ສ້າງພັກ-ພະນັກງານ ແລະ ປັບປຸງກົງຈັກການຈັດຕັ້ງ ບໍ່ທັນໄດ້ດີເທົ່າທີ່ຄວນ.

ເພື່ອເຮັດໃຫ້ວຽກງານຈັດຕັ້ງພັກ-ພະນັກງານໄດ້ຮັບການປັບປຸງສູ່ຄຸນນະພາບໃໝ່ມີບົດບາດສຳຄັນໃນການປະກອບສ່ວນເຂົ້າໃນການຈັດຕັ້ງຜັນຂະຫຍາຍແນວທາງຂອງພັກ ແລະ ເຮັດໃຫ້ຄະນະພັກແຕ່ລະຂັ້ນຢູ່ແຂວງຄຳມ່ວນ ມີຄວາມເຂັ້ມແຂງ, ໜັກແໜ້ນນັ້ນຈະຕ້ອງສືບຕໍ່ເອົາໃຈໃສ່ບາງດ້ານດັ່ງລຸ່ມນີ້:

ໜຶ່ງ, ຄະນະພັກແຕ່ລະຂັ້ນ ຕ້ອງຍົກສູງຄວາມເປັນເຈົ້າການຈັດຕັ້ງເຊື່ອມຊຶມ, ກຳແໜ້ນ ແລະ ຜັນຂະຫຍາຍນິຕິກຳ ຂອງພັກ ແລະ ລັດ ໂດຍສະເພາະວຽກງານຈັດຕັ້ງພັກ-ພະນັກງານ ໃຫ້ກວ້າງຂວາງ ແລະ ເລິກເຊິ່ງ, ນຳພາ-ຊີ້ນຳຈັດຕັ້ງປະຕິບັດວຽກງານດັ່ງກ່າວຢ່າງແຂງແຮງ ຖືເປັນວຽກງານສຳຄັນແຖວໜ້າ ສອດຮ້ອຍໄປໃນທຸກຂົງເຂດວຽກງານ, ເອົາໃຈໃສ່ສຶກສາອົບຮົມໃຫ້ພະນັກງານ-ສະມາຊິກພັກໃຫ້ມີຄວາມຮັບຮູ້ເຂົ້າໃຈແຈ້ງ ແລະ ເປັນເອກະພາບຕໍ່ບັນດາແນວທາງ, ນະໂຍບາຍ, ມະຕິ, ຄຳສັ່ງ, ກົດລະບຽບພັກ ກົດໝາຍ ແລະ ລະບຽບການຕ່າງໆ ຂອງລັດ.

ສອງ, ຄະນະພັກແຕ່ລະຂັ້ນ ຕ້ອງສືບຕໍ່ປັບປຸງການຈັດຕັ້ງພັກທີ່ຢູ່ໃນຄວາມຮັບຜິດຊອບຂອງຕົນດ້ວຍການປັບປຸງພາລະບົດບາດ, ສິດ, ໜ້າທີ່, ແບບແຜນວິທີເຮັດວຽກໃຫ້ສອດຄ່ອງກັບໜ້າທີ່ການເມືອງ, ເອົາໃຈໃສ່ຊຸກຍູ້ການກໍ່ສ້າງໜ່ວຍພັກປອດໃສ, ເຂັ້ມແຂງ, ໜັກແໜ້ນ ຮັບປະກັນໄດ້ທາງດ້ານປະລິມານ ແລະ ຄຸນນະພາບ, ພ້ອມກັນນັ້ນ, ກໍ່ຕ້ອງເອົາໃຈໃສ່ຕິດຕາມ, ກວດກາ ແລະ ປະເມີນຜົນໃຫ້ສອດຄ່ອງກັບໜ້າທີ່ການເມືອງ ຂອງແຕ່ລະໜ່ວຍພັກ ຕີລາຄາໜ່ວຍພັກ, ສະມາຊິກພັກໃຫ້ຖືກຕ້ອງເໝາະສົມ ແລະ ແທດ

ຕົວຈິງ; ການຂະຫຍາຍພັກ ຕ້ອງຖືຄຸນນະພາບເປັນຫຼັກ, ສ້າງ ແລະ ເລືອກເຟັ້ນມະຫາຊົນທີ່ມີມາດຕະຖານ, ເງື່ອນໄຂຄົບຖ້ວນ, ປະຕິບັດຖືກຕ້ອງຕາມຂັ້ນຕອນ ທີ່ກຳນົດໄວ້ໃນກົດລະບຽບພັກ. ພ້ອມກັນນັ້ນ, ກໍ່ຕ້ອງ ໄດ້ຮັບການທົດສອບຜ່ານຂະບວນການວຽກງານ ຕົວຈິງ ເປັນມະຫາຊົນຜູ້ທີ່ດີເດັ່ນ, ຫ້າວຫັນ, ເປັນແບບ ຢ່າງນຳໜ້າ ເພື່ອສ້າງເປັນເປົ້າໝາຍຂະຫຍາຍເຂົ້າພັກ.

ສາມ, ຄະນະພັກແຕ່ລະຂັ້ນຕ້ອງສ້າງການຫັນປ່ຽນ ຢ່າງແຂງແຮງ ແລະ ເລິກເຊິ່ງ ໃນວຽກງານພະນັກງານ ຕ້ອງຍົກສູງຄວາມເປັນເຈົ້າການໃນການສ້າງຄວາມ ເປັນເອກະພາບ, ເຂັ້ມງວດໃນການຈັດຕັ້ງປະຕິບັດທິດ ນຳ, ຫຼັກການ, ລະບຽບການຂອງພັກ ກ່ຽວກັບການຈັດ ຕັ້ງປະຕິບັດວຽກງານພະນັກງານ, ເອົາໃຈໃສ່ແກ້ໄຂປະ ກົດການຫຍໍ້ທໍ້ຕ່າງໆ ໃນຖັນແຖວພະນັກງານຢ່າງເຂັ້ມ ງວດ, ພ້ອມກັນນັ້ນ, ກໍ່ຕ້ອງສ້າງໃຫ້ໄດ້ຖັນແຖວພະນັກ ງານນຳພາ-ຄຸ້ມຄອງ ແລະ ພະນັກງານວິຊາການທີ່ດີ, ເກັ່ງ, ມີຄວາມຮູ້-ຄວາມສາມາດ, ມີຄຸນທາດການເມືອງໜັກ ແໜ້ນ, ຄຸນສົມບັດສິນທຳປະຕິວັດ, ຈັນຍາບັນ, ຈັນຍາ ທຳ ເພື່ອສືບທອດປ່ຽນແທນໃນອະນາຄົດ.

ສີ່, ອົງການເສນາທິການ ທີ່ເຮັດວຽກງານຈັດຕັ້ງ ພັກ-ພະນັກງານ ຕ້ອງເປັນເຈົ້າການສ້າງລະບອບການ ພົວພັນແບບກົມກຽວ ແລະ ແໜ້ນແຟ້ນກັບຂັ້ນເທິງ, ບັນດາເມືອງ, ຂະແໜງການຂ້ອມຂ້າງແຂວງຢ່າງເປັນ ປົກກະຕິ ເພື່ອແລກປ່ຽນບົດຮຽນ ແລະ ຮ່ວມກັນແກ້ ໄຂວຽກງານທີ່ເກີດຂຶ້ນແຕ່ລະໄລຍະ ຄຽງຄູ່ກັນນັ້ນ, ກໍ່ເອົາໃຈໃສ່ເສີມຂະຫຍາຍສາຍພົວພັນ ແລກປ່ຽນບົດ ຮຽນວຽກງານຈັດຕັ້ງພັກ-ພະນັກງານ ທັງພາຍໃນ ແລະ ຕ່າງປະເທດ ກ່ຽວກັບການປັບປຸງວຽກງານຈັດຕັ້ງພັກ-ພະນັກງານ ຢູ່ບັນດາແຂວງ, ຢູ່ບັນດາປະເທດເພື່ອນມິດ ຍຸດທະສາດ ເພື່ອຖອດຖອນບົດຮຽນກ່ຽວກັບຄວາມ ແຕກຕ່າງກັນທາງດ້ານສະພາບແວດລ້ອມ, ມີຂໍ້ສະ ດວກ ແລະ ຂໍ້ຫຍຸ້ງຍາກທີ່ເປັນອຸປະສັກໃນການເຄື່ອນ ໄຫວຈັດຕັ້ງປະຕິບັດວຽກງານດັ່ງກ່າວ ເພື່ອເປັນບົດ ຮຽນ ແລະ ຂໍ້ມູນສຳລັບການວາງແຜນການ, ທິດທາງໃນ ຕໍ່ໜ້າ.

ຫ້າ, ຄະນະພັກແຕ່ລະຂັ້ນ ຕ້ອງເປັນເຈົ້າການໃນ ການຕິດຕາມ, ກວດກາ ແລະ ສະຫຼຸບຖອດຖອນບົນຮຽນ ຢ່າງເປັນປະຈຳ ເພື່ອສະຫຼຸບຖອດຖອນບົດຮຽນ ພ້ອມ ທັງຊອກໃຫ້ເຫັນດ້ານດີ, ດ້ານຕັ້ງໜ້າ, ຈຸດອ່ອນ, ຂໍ້ຄົງ ຄ້າງ ໃນການຈັດຕັ້ງປະຕິບັດວຽກງານດັ່ງກ່າວ ເພື່ອເປັນ ທິດໃນການແກ້ໄຂ, ປັບປຸງໃຫ້ຖືກຕ້ອງສອດຄ່ອງກັບ ແນວທາງຂອງພັກ.

ສັງລວມແລ້ວ, ວຽກງານຈັດຕັ້ງພັກ-ພະນັກງານ ແມ່ນວຽກງານສຳຄັນ, ເປັນວຽກຍຸດທະສາດຂອງພັກ ທີ່ຕ້ອງໄດ້ປະຕິບັດຢ່າງຕໍ່ເນື່ອງ ແລະ ເປັນປະຈຳ, ທັງ ແມ່ນຄວາມຮັບຜິດຊອບໂດຍກົງ ຂອງຄະນະພັກທຸກ ຂັ້ນ ທີ່ຕ້ອງໄດ້ເອົາໃຈໃສ່ຊີ້ນຳ-ນຳພາຢ່າງໃກ້ຊິດໃນ ການຈັດຕັ້ງ, ຜັນຂະຫຍາຍນິຕິກຳໃຫ້ຖືກຕ້ອງສອດ ຄ່ອງໄປຕາມທິດທີ່ພັກກຳນົດໄວ້ ເປັນຕົ້ນແມ່ນການກຳ ນົດກົງຈັກ, ທີ່ຕັ້ງ, ພາລະບົດບາດ, ລະບຽບການ, ກົນໄກ, ການຈັດວາງບຸກຄະລາກອນ ແລະ ກຳນົດການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງການຈັດຕັ້ງພັກ-ລັດ ໃຫ້ໜັກ ແໜ້ນ, ເຂັ້ມແຂງ. ສະນັ້ນ, ຈຶ່ງເວົ້າໄດ້ວ່າ: ການປັບປຸງ ວຽກງານຈັດຕັ້ງພັກ-ພະນັກງານ ຢູ່ແຂວງຄຳມ່ວນ ແມ່ນ ແນໃສ່ຍົກສູງຄຸນນະພາບ ທາງດ້ານການເມືອງ, ແນວ ຄິດ, ການຈັດຕັ້ງ, ແບບແຜນການນຳພາ, ແບບແຜນວິທີ ເຮັດວຽກ ຂອງການຈັດຕັ້ງແຕ່ລະຂັ້ນ, ຂອງພະນັກງານ-ສະມາຊິກພັກແຕ່ລະສະຫາຍ ເພື່ອຮັບປະກັນບົດບາດ ການນຳພາຮອບດ້ານ ຂອງພັກ ແລະ ຮັກສາໄດ້ສະຖຽນ ລະພາບທາງດ້ານການເມືອງ, ສັງຄົມມີຄວາມສະຫງົບ ປອດໄພ, ເສດຖະກິດໄດ້ຮັບການພັດທະນາຂະຫຍາຍ ຕົວຢ່າງຕໍ່ເນື່ອງ, ເດັດດ່ຽວຊີ້ນຳແກ້ໄຂປະກົດການຫຍໍ້ ທໍ້ໃນຂົງເຂດການຈັດຕັ້ງພັກ-ພະນັກງານ ຢູ່ແຂວງຄຳ ມ່ວນໃຫ້ຫຼຸດໜ້ອຍຖອຍລົງ...ຯ

ການພັດທະນາບຸກຄະລາກອນ ຢູ່ຄະນະຈັດຕັ້ງແຂວງຊຽງຂວາງ ໃນໄລຍະໃໝ່

ໂດຍ: ສົມໄຊ ຫຼ້າດວງມະນີ

ການພັດທະນາບຸກຄະລາກອນ ແມ່ນວຽກງານສຳຄັນໃນການສ້າງໃຫ້ພະນັກງານ ມີລະດັບຄວາມຮູ້, ຄວາມສາມາດ, ມີຄຸນສົມບັດສິນທຳປະຕິວັດ, ຍົກລະດັບວິຊາສະເພາະ, ລະດັບທິດສະດີ, ພາສາຕ່າງປະເທດ ແລະ ເຕັກໂນໂລຊີ ໂດຍຜ່ານລະບົບໂຮງຮຽນ, ສະຖາບັນການສຶກສາຕ່າງໆຢ່າງເປັນລະບົບ, ຕໍ່ເນື່ອງ; ນອກນີ້ຍັງໄດ້ຝຶກຝົນຮຽນຮູ້ໃນວຽກງານຕົວຈິງກັບທີ່ ແລະ ລົງກໍ່ສ້າງຢູ່ຮາກຖານ ແນໃສ່ສ້າງໃຫ້ໄດ້ບຸກຄະລາກອນທີ່ມີຄຸນນະພາບ ສາມາດຕອບສະໜອງຄວາມຮຽກຮ້ອງຕ້ອງການຂອງໜ້າທີ່ວຽກງານໃນໄລຍະໃໝ່.

ພັກເຮົາຍາມໃດກໍ່ຖືວ່າ ພະນັກງານມີບົດບາດຕັດສິນຜົນໄດ້ຜົນເສຍຂອງການຈັດຕັ້ງປະຕິບັດແນວທາງ, ແຜນນະໂຍບາຍ, ມະຕິ, ຄຳສັ່ງຂອງພັກ-ລັດ; ຖືເອົາການສ້າງພະນັກງານ ເປັນໜຶ່ງໃນບັນດາບົດບາດ ແລະ ວິທີນຳພາຂອງພັກ. ໃນກອງປະຊຸມໃຫຍ່ ຄັ້ງທີ XI ຂອງພັກກໍ່ໄດ້ຢືນຢັນວ່າ: ພະນັກງານ ແມ່ນປັດໄຈຕັດສິນຜົນໄດ້ຜົນເສຍຂອງການຈັດຕັ້ງປະຕິບັດແນວທາງແຜນນະໂຍບາຍຂອງພັກ, ວຽກງານພະນັກງານ ແມ່ນຂໍກຸນແຈສຳຄັນໃນຂະບວນວິວັດການຈັດຕັ້ງປະຕິບັດບົດບາດນຳພາຂອງພັກຕໍ່ພາລະກິດປະຕິວັດ[1] ໂດຍເຫັນໄດ້ບົດບາດຄວາມສຳຄັນຂອງວຽກງານພະນັກງານກໍ່ຄືການພັດທະນາບຸກຄະລາກອນ ພັກເຮົາໄດ້ຖືສຳຄັນ ແລະ ເອົາໃຈໃສ່ບຳລຸງ-ກໍ່ສ້າງຖັນແຖວພະນັກງານໃຫ້ມີຄຸນນະພາບ, ມີລະດັບຄວາມຮູ້, ຄວາມສາມາດທີ່ແນ່ນອນ, ມີຄຸນສົມບັດສິນທຳປະຕິວັດ, ມີທາດແທ້ຫຼັກໝັ້ນການເມືອງທີ່ໜັກແໜ້ນ ເພື່ອສາມາດຕອບສະໜອງຄວາມຮຽກຮ້ອງຕ້ອງການຂອງໜ້າທີ່ການເມືອງໃນແຕ່ລະໄລຍະ ແລະ ທັງຮັບປະກັນລັກສະນະສືບທອດປ່ຽນແທນຢ່າງເປັນລະບົບຕໍ່ເນື່ອງ, ສາມາດແບກຫາບໜ້າທີ່ການເມືອງ ທີ່ຕົນຮັບຜິດຊອບໄດ້ຢ່າງສຳເລັດຜົນ.

ຄະນະຈັດຕັ້ງແຂວງຊຽງຂວາງ ໃນຖານະປະຕິບັດພາລະບົດບາດເປັນເສນາທິການໂດຍກົງ ໃຫ້ແກ່ອົງຄະນະພັກແຂວງ ກ່ຽວກັບວຽກງານກໍ່ສ້າງພັກ, ກໍ່ສ້າງພະນັກງານ ແລະ ປັບປຸງກົງຈັກການຈັດຕັ້ງ, ເປັນໃຈກາງປະສານງານກັບບັນດາຂະແໜງການສາຍຕັ້ງ, ສາຍຂວາງກ່ຽວກັບວຽກງານກໍ່ສ້າງພັກ, ກໍ່ສ້າງພະນັກງານນັບທັງຂັ້ນສູນກາງ ແລະ ທ້ອງຖິ່ນ ເຮັດໜ້າທີ່ພົວພັນປະສານງານກັບຄະນະຈັດຕັ້ງສູນກາງພັກ ເພື່ອນຳເອົາແນວທາງນະໂຍບາຍຂອງພັກ, ມະຕິ, ຄຳສັ່ງ ແລະ ລະບຽບການຂອງພັກນຳໄປຈັດຕັ້ງປະ

[1] ເອກະສານກອງປະຊຸມໃຫຍ່ ຄັ້ງທີ XI ຂອງພັກປະຊາຊົນປະຕິວັດລາວ ປີ 2021 ໜ້າທີ 90.

ຕິບັດຢູ່ໃນຂອບເຂດທີ່ຕົນຮັບຜິດຊອບໃຫ້ມີຜົນສຳເລັດ; ສະນັ້ນ ເມື່ອທຽບໃສ່ຄວາມຮຽກຮ້ອງຕ້ອງການຂອງໜ້າທີ່ການເມືອງ ແລະ ພາລະບົດບາດດັ່ງກ່າວ ຄະນະໜ່ວຍພັກ, ຄະນະຈັດຕັ້ງແຂວງຊຽງຂວາງມີຄວາມຈຳເປັນຕ້ອງພັດທະນາບຸກຄະລາກອນ ໃຫ້ມີຄວາມຮູ້, ຄວາມສາມາດ, ຕອບສະໜອງຄວາມຮຽກຮ້ອງຕ້ອງການຂອງໜ້າທີ່ການເມືອງໃນໄລຍະໃໝ່.

ໃນໄລຍະຜ່ານມາ ຄະນະໜ່ວຍພັກ-ຄະນະນຳຂອງຄະນະຈັດຕັ້ງແຂວງ ໄດ້ຖືສຳຄັນ ແລະ ເອົາໃຈໃສ່ພັດທະນາບຸກຄະລາກອນ, ການຍົກສູງຄຸນນະພາບພະນັກງານ ເປັນວຽກຈຸດສຸມ ເພື່ອສ້າງຄວາມເຂັ້ມແຂງໃຫ້ແກ່ການຈັດຕັ້ງ ຮັບປະກັນດ້ານປະລິມານ ແລະ ຄຸນນະພາບ ໃນການເຄື່ອນໄຫວນຳພາຈັດຕັ້ງປະຕິບັດວຽກງານກໍ່ສ້າງພັກ, ກໍ່ສ້າງພະນັກງານ ແລະ ປັບປຸງກົງຈັກການຈັດຕັ້ງ ໃນນັ້ນ ໄດ້ຖືເອົາວຽກງານສຶກສາອົບຮົມການເມືອງ-ແນວຄິດ ໃຫ້ສະມາຊິກພັກ, ພະນັກງານ-ລັດຖະກອນເປັນກົກ ດ້ວຍການຈັດຕັ້ງຄົ້ນຄວ້າຮ່ຳຮຽນ, ເຜີຍແຜ່ເຊື່ອມຊຶມບັນດາມະຕິຂອງພັກ, ຂໍ້ກຳນົດ, ກົດໝາຍຂອງລັດ ແລະ ລະບຽບການ ຂອງຂະແໜງການຕົນຢ່າງເປັນປົກກະຕິຕໍ່ເນື່ອງ; ຖືເອົາການສ້າງພະນັກງານກັບທີ່ເປັນວຽກບຸລິມະສິດ ແນໃສ່ສ້າງພະນັກງານໃຫ້ມີຄຸນທາດການເມືອງໜັກແໜ້ນ ມີຄຸນສົມບັດສົນທຳປະຕິວັດ ດ້ວຍການຈັດປາຖະກະຖາເລົ່າມູນເຊື້ອອັນສຳຄັນຕ່າງໆຂອງຊາດ, ຂອງພັກ-ລັດ ແລະ ເອກະສານອື່ນໆ; ຄຽງຄູ່ກັນນັ້ນ ຍັງສົ່ງໄປກໍ່ສ້າງທາງດ້ານວິຊາການ, ຍົກລະດັບວິຊາສະເພາະ, ວິທະຍາສາດ ເຕັກໂນໂລຊີ ຢູ່ພາຍໃນ ແລະ ຕ່າງປະເທດທັງໄລຍະສັ້ນ ແລະ ໄລຍະຍາວ ໂດຍອີງໃສ່ແຜນກຳນົດພະນັກງານ, ແຜນກໍ່ສ້າງ-ບຳລຸງພະນັກງານ ຄັດເລືອກເອົາຜູ້ທີ່ມີຜົນງານດີເດັ່ນ, ມີມາດຕະຖານ, ເງື່ອນໄຂ, ເພື່ອສ້າງເປັນພະນັກງານສືບທອດປ່ຽນແທນ; ໃນນັ້ນ ມີພະນັກງານໄດ້ຮັບການຍົກລະດັບດ້ານທິດສະດີການເມືອງຂັ້ນສູງ ພາຍໃນປະເທດຈຳນວນ 2 ສະຫາຍ, ຢູ່ຕ່າງປະເທດ 2 ສະຫາຍ, ດ້ານວິຊາສະເພາະ ປະລິນຍາໂທຢູ່ຕ່າງປະເທດ 3 ສະຫາຍ; ໄປທັດສະນະສຶກສາໃນຫົວຂໍ້ຕ່າງໆທັງໝົດ 2 ຄັ້ງ, ໃນນີ້ຢູ່ພາຍໃນປະເທດ 1 ຄັ້ງ ແລະ ຢູ່ຕ່າງປະເທດ 1 ຄັ້ງ.

ຜ່ານການຈັດຕັ້ງປະຕິບັດວຽກງານຕົວຈິງໃນໄລຍະ 4 ປີ (2020-2024) ເຫັນວ່າບຸກຄະລາກອນຢູ່ຄະນະຈັດຕັ້ງແຂວງຊຽງຂວາງໄດ້ຮັບການພັດທະນາບັບມື້ມີຄຸນນະພາບສູງຂຶ້ນ, ພະນັກງານ, ສະມາຊິກພັກສ່ວນຫຼາຍຮັກສາໄດ້ຄຸນທາດການເມືອງ, ຄຸນສົມບັດສົນທຳປະຕິວັດ, ສະແດງອອກໄດ້ຮັບການແຕ່ງຕັ້ງເປັນພະນັກງານນຳພາ-ຄຸ້ມຄອງຂັ້ນຕ່າງໆເຊັ່ນ: ຮອງຄະນະຈັດຕັ້ງແຂວງ 1 ສະຫາຍ; ຍົກຍ້າຍໄປເປັນຮອງຫົວໜ້າຫ້ອງການມໍລະດົກໂລກແຂວງຊຽງຂວາງ 1 ສະຫາຍ, ຍົກຍ້າຍໄປເປັນຫົວໜ້າຄະນະໂຄສະນາອົບຮົມແຂວງຊຽງຂວາງ 1 ສະຫາຍ, ແຕ່ງຕັ້ງເປັນຫົວໜ້າຂະແໜງ 1 ສະຫາຍ, ຮອງຫົວໜ້າຂະແໜງ 1 ສະຫາຍ, ປະຈຸບັນຄະນະຈັດຕັ້ງແຂວງຊຽງຂວາງມີພະນັກງານ-ລັດຖະກອນທັງໝົດ 19 ທ່ານ, ຍິງ 6 ທ່ານ; ໃນນັ້ນ ຈົບປະລິນຍາໂທ 4 ທ່ານ, ຍິງ 1 ທ່ານ, ປະລິນຍາຕີ 10 ທ່ານ, ຍິງ 3 ທ່ານ, ຊັ້ນສູງ 4 ທ່ານ, ຍິງ 1 ທ່ານ, ຊັ້ນກາງ 1 ທ່ານ.

ເຖິງຢ່າງໃດກໍ່ຕາມ ການພັດທະນາບຸກຄະລາກອນຢູ່ຄະນະຈັດຕັ້ງແຂວງຊຽງຂວາງໃນໄລຍະຜ່ານມາ ເຖິງວ່າຄະນະໜ່ວຍພັກ, ຄະນະນຳໄດ້ເອົາໃຈໃສ່ເຮັດຢ່າງຕໍ່ເນື່ອງກໍ່ຕາມ ເມື່ອທຽບໃສ່ຄວາມຮຽກຮ້ອງຕ້ອງການຂອງໜ້າທີ່ວຽກງານຕົວຈິງແລ້ວເຫັນວ່າ ມີບາງດ້ານຍັງເຮັດບໍ່ທັນໄດ້ດີເທົ່າທີ່ຄວນ, ການບຳລຸງ-ກໍ່ສ້າງພະນັກງານຍັງບໍ່ທັນເປັນລະບົບ, ບໍ່ທັນຮັບປະກັນໄດ້ລັກ

ສະນະສືບທອດຕໍ່ເນື່ອງ, ການຍົກລະດັບດ້ານວິຊາສະເພາະຍັງບໍ່ທັນຕອບສະໜອງໄດ້ກັບຄວາມຕ້ອງການຕົວຈິງຂອງຫນ້າທີ່ວຽກງານ, ການພັດທະນາບຸກຄະລາກອນທາງດ້ານພາສາຕ່າງປະເທດ, ດ້ານວິທະຍາສາດເຕັກໂນໂລຊີຍັງບໍ່ທັນກວ້າງຂວາງ ແລະ ເລິກເຊິ່ງ, ທຶນຮອນໃນການກໍ່ສ້າງພະນັກງານມີຈຳກັດ; ພະນັກງານຈຳນວນໜຶ່ງສະຕິຕື່ນຕົວຕໍ່ການຈັດຕັ້ງບໍ່ທັນສູງ, ຄວາມເປັນເຈົ້າການໃນການປະຕິບັດກົດໝາຍ ວ່າດ້ວຍພະນັກງານ-ລັດຖະກອນ ກໍຄື: ພາລະບົດບາດ, ຂໍ້ກຳນົດຕ່າງໆຂອງຄະນະຈັດຕັ້ງແຂວງຍັງເຮັດບໍ່ທັນໄດ້ດີ, ບໍ່ທັນເອົາໃຈໃສ່ໃນການຝຶກຝົນຫຼໍ່ຫຼອມ ແລະ ພັດທະນາຕົນເອງ, ເຮັດໃຫ້ຂາດພະນັກງານທີ່ມີຄວາມຊຳນານງານ ຫຼື ຊ່ຽວຊານສະເພາະດ້ານ. ເພື່ອສືບຕໍ່ພັດທະນາບຸກຄະລາກອນຢູ່ຄະນະຈັດຕັ້ງແຂວງຊຽງຂວາງ ໃຫ້ມີຄຸນນະພາບສາມາດຕອບສະໜອງໄດ້ຄວາມຮຽກຮ້ອງຕ້ອງການຂອງຫນ້າທີ່ວຽກງານໃນໄລຍະໃຫມ່ຄວນເອົາໃຈໃສ່ບາງດ້ານ ດັ່ງນີ້:

ໜຶ່ງ: ເພີ່ມທະວີການນຳພາ-ຊີ້ນຳ ແລະ ຄວາມຮັບຜິດຊອບຂອງຄະນະໜ່ວຍພັກ, ຄະນະນຳ ໃນການສຶກສາອົບຮົມການເມືອງ-ແນວຄິດໃຫ້ພະນັກງານ-ລັດຖະກອນຢ່າງເປັນປົກກະຕິ, ຕໍ່ເນື່ອງ, ຖືສຳຄັນວຽກງານສຶກສາອົບຮົມການເມືອງ-ແນວຄິດເປັນກົກ ຕິດພັນໂດຍກົງກັບການນຳພາຂອງຕົນ, ຖືເອົາການບຳລຸງ-ສ້າງທາງດ້ານວິຊາການເປັນສິ່ງຈຳເປັນ ແລະ ຂາດບໍ່ໄດ້ ແນໃສ່ກໍ່ສ້າງບຸກຄະລາກອນໃຫ້ມີຄຸນທາດການເມືອງ, ຄຸນສົມບັດສິນທຳປະຕິວັດ, ມີຫຼັກໝັ້ນຊຶນຊັ້ນ, ມີທັດສະນະມະຫາຊົນທີ່ຖືກຕ້ອງ. ມີນ້ຳໃຈຮັບໃຊ້ຊາດ ຮັບໃຊ້ປະຊາຊົນຢ່າງແທ້ຈິງ.

ສອງ: ຄະນະໜ່ວຍພັກ, ຄະນະນຳຂອງຄະນະຈັດຕັ້ງແຂວງ ຄວນເພີ່ມທະວີຄວາມເອົາໃຈໃສ່ໃນການຂຶ້ນແຜນກຳນົດພະນັກງານນຳພາ-ຄຸ້ມຄອງຢ່າງເປັນລະບົບ ແລະ ໃຫ້ສອດຄ່ອງກັບຄວາມຮຽກຮ້ອງຕ້ອງການຕົວຈິງຂອງໜ້າທີ່ວຽກງານ, ສອດຄ່ອງກັບແຜນພັດທະນາເສດຖະກິດ-ສັງຄົມກໍຄືການພັດທະນາປະເທດຊາດໃນໄລຍະໃໝ່. ການຂຶ້ນແຜນກຳນົດພະນັກງານ ຕ້ອງຮັບປະກັນລັກສະນະສືບທອດຕໍ່ເນື່ອງ, ລັກສະນະຄົບຊຸດ, ຮັບປະກັນໂຄງປະກອບດ້ານເພດ, ເຜົ່າ, ອາຍຸ ແລະ ວິຊາສະເພາະ.

ສາມ: ການບຳລຸງ-ກໍ່ສ້າງພະນັກງານ ຄວນຕິດພັນກັບການປັບປຸງ, ຈັດວາງ, ສັບຊ້ອນ, ຍົກຍ້າຍ ແລະ ປຽນແທນຢ່າງເໝາະສົມ; ການບັນຈຸ, ສັບຊ້ອນພະນັກງານຕ້ອງຖືເອົາຜົນປະໂຫຍດລວມຂອງຊາດເປັນຫຼັກ, ຖືເອົາເງື່ອນໄຂມາດຖານ ແລະ ຄວາມຮຽກຮ້ອງຕ້ອງການຕົວຈິງ ຂອງໜ້າທີ່ວຽກງານ ເປັນສຳຄັນທັນເອົາຜູ້ທີ່ມີຄວາມຮູ້-ຄວາມສາມາດຕົວຈິງທີ່ເໝາະສົມກັບວຽກງານນັ້ນປະກອບໃສ່.

ສີ່: ເພີ່ມການລົງທຶນເຂົ້າໃສ່ການບຳລຸງ-ກໍ່ສ້າງພະນັກງານໃຫ້ສົມຄູ່ກັບຄວາມສຳຄັນ, ບົດບາດ, ໜ້າທີ່ຂອງພະນັກງານ ຕົ້ນຕໍແມ່ນສຸມໃສ່ພະນັກງານນຳພາ-ຄຸ້ມຄອງຢູ່ແຕ່ລະຂະແໜງ ໃຫ້ມີລະດັບຄວາມຮູ້, ຄວາມສາມາດທຽບເທົ່າກັບພາກພື້ນ ແລະ ສາກົນເທື່ອລະກ້າວ. ພ້ອມນີ້ກໍ່ເອົາໃຈໃສ່ປະຕິບັດລະບອບນະໂຍບາຍຕໍ່ພະນັກງານ, ມີການຍ້ອງຍໍ, ເລື່ອນຊັ້ນ, ເລື່ອນຂັ້ນໃຫ້ພະນັກງານ ເພື່ອເປັນການກະຕຸກຊຸກຍູ້ ໃຫ້ພະນັກງານມີຄວາມຈູບຈ້າວຫ້າວຫັນໃນການປະຕິບັດໜ້າທີ່ວຽກງານ ກໍຄື ການຝຶກຝົນ ຫຼໍ່ຫຼອມຕົນເອງໃຫ້ນັບມື້ມີຄວາມກ້າວໜ້າ.

ຫ້າ: ເພີ່ມທະວີການພົວພັນຮ່ວມມືກັບບັນດາປະເທດເພື່ອນມິດຍຸດທະສາດ, ພາກພື້ນແລະສາກົນ

ອ່ານຕໍ່ໜ້າ 36

ການຍົກສູງຄຸນນະພາບຖັນແຖວສະມາຊິກພັກ ຢູ່ຄະນະພົວພັນຕ່າງປະເທດສູນກາງພັກ ເປັນວຽກງານສຳຄັນ ແລະ ຕ້ອງໄດ້ດຳເນີນຢ່າງເປັນປະຈຳ

ໂດຍ: ຄຳຮຸ່ງ ຈັນທະວົງ

ປະຈຸບັນ ປະເທດເຮົາກຳລັງຢູ່ໃນໄລຍະສືບຕໍ່ຈັດຕັ້ງປະຕິບັດພາລະກິດການປ່ຽນແປງໃໝ່ຮອບດ້ານທີ່ມີຫຼັກການຂອງພັກ ໃນເງື່ອນໄຂເສດຖະກິດຕະຫຼາດ, ເປີດກວ້າງການພົວພັນຮ່ວມມືກັບຕ່າງປະເທດ ເຊິ່ງມີທັງກາລະໂອກາດທີ່ເອື້ອອຳນວຍໃນການສ້າງສາພັດທະນາປະເທດຊາດ ແລະ ທັງມີສິ່ງທ້າທາຍທົດສອບນາໆປະການໃຫ້ແກ່ການພັດທະນາປະເທດຊາດ ເປັນຕົ້ນແມ່ນບັນຫາຄວາມຫຍຸ້ງຍາກທາງດ້ານເສດຖະກິດ-ການເງິນ-ເງິນຕາ ແລະ ບັນຫາໜີ້ສາທາລະນະທີ່ສະສົມມາຍາວນານຢູ່ປະເທດເຮົາບວກກັບໄພທຳມະຊາດທີ່ເກີດຂຶ້ນຢ່າງຕໍ່ເນື່ອງ. ຈາກສະພາບການດັ່ງກ່າວໄດ້ກາຍເປັນອຸປະສັກຢ່າງໃຫຍ່ຫຼວງ ຕໍ່ການປະຕິບັດບັນດາຄາດໝາຍສູ້ຊົນ ແລະ ກາຍເປັນສິ່ງທ້າທາຍໂດຍກົງຕໍ່ບົດບາດການນຳພາ ຂອງພັກ ແລະ ຊີວິດການເປັນຢູ່ຂອງສະມາຊິກພັກ-ພະນັກງານ, ທະຫານ, ຕຳຫຼວດ ແລະ ພໍ່ແມ່ປະຊາຊົນໃນຂອບເຂດທົ່ວປະເທດ ຕໍ່ກັບປະກົດການດັ່ງກ່າວນັ້ນ ກອງປະຊຸມໃຫຍ່ ຜູ້ແທນທົ່ວປະເທດ ຄັ້ງທີ XI ຂອງພັກ ໄດ້ຍົກໃຫ້ເຫັນບັນດາຈຸດອ່ອນຂໍ້ຄົງຄ້າງຜ່ານມາວ່າ: ການເສື່ອມຖອຍຄຸນທາດດ້ານການເມືອງ, ຄຸນສົມບັດ ແລະ ມານະຈິດປະຕິວັດໃນຖັນແຖວສະມາຊິກພັກ-ພະນັກງານ ຍັງເປັນບັນຫາທີ່ໜ້າເປັນຫ່ວງຂອງພັກ ແລະ ສັງຄົມ, ສືບຕໍ່ສິ່ງຜົນກະທົບຕໍ່ບົດບາດການນຳພາຂອງພັກ ແລະ ລະບອບໃໝ່; ສະມາຊິກພັກ-ພະນັກງານ ຈຳນວນບໍ່ໜ້ອຍຂາດຄວາມເປັນເຈົ້າໃນການຈັດຕັ້ງປະຕິບັດໜ້າທີ່ທີ່ຖືກມອບໝາຍ, ນ້ຳໃຈເສຍສະຫຼະ ເພື່ອຜົນປະໂຫຍດສ່ວນລວມບໍ່ທັນສູງ, ບໍ່ກ້າຕໍ່ສູ້ຕ້ານກັບທ່າອຽງ ແລະ ປະກົດການຜິດເຂວ, ປະກົດການເລືອກວຽກທີ່ມີຄວາມແອບແຝງດ້ານຜົນປະໂຫຍດ ກໍ່ຄືປະກົດການສວຍໃຊ້ຕຳແໜ່ງ, ໜ້າທີ່ ເພື່ອຫາຜົນປະໂຫຍດສ່ວນຕົວ ແລະ ກຸ່ມກ້ອນຂອງເຈົ້າໜ້າທີ່ລັດ ຍັງເປັນຈຸດມໍລະສຸມ ທີ່ສັງຄົມເລັງເປົ້າວິພາກວິຈານ ແລະ ລະແວງສົງໄສເຖິງຄວາມເດັດຂາດ ກໍ່ຄືຄວາມສາມາດຂອງພັກ ແລະ ລັດເຮົາໃນການນຳພາການແກ້ໄຂບັນຫາຫຍໍ້ທໍ້ຢູ່ພາຍໃນພັກ ແລະ ໃນສັງຄົມ. ໃນການຕີລາຄາແບ່ງປະເພດ ແລະ ປະຕິບັດການຍ້ອງຍໍຕໍ່ພະນັກງານ, ບໍ່ແທດຕົວຈິງ ແລະ ບໍ່ທັນມີລັກສະນະກະຕຸ້ນການແຂ່ງຂັນພັດທະນາຕົນເອງ ຂອງພະນັກງານ; ຄະນະພັກຢູ່ຫຼາຍບ່ອນ ບໍ່ທັນເອົາໃຈໃສ່ຊີ້ນຳຢ່າງເຖິງລະດັບ ຕໍ່ການເລືອກເຟັ້ນ ແລະ ສັບຊ້ອນ, ຈັດວາງພະນັກງານທີ່ແນໃສ່ສ້າງໂອກາດ ແລະ ເງື່ອນໄຂຕົວຈິງ ເພື່ອສິ່ງ

ເສີມນຳໃຊ້ພະນັກງານທີ່ມີຄວາມສາມາດປະດິດສ້າງ ແລະ ກ້າເຮັດ, ກ້າຮັບຜິດຊອບໃນວຽກງານ. ສະນັ້ນການຍົກສູງຄຸນນະພາບຂອງສະມາຊິກພັກແມ່ນວຽກງານສຳຄັນ ແລະ ຈຳເປັນຮີບດ່ວນ.

ການຍົກສູງຄຸນນະພາບສະມາຊິກພັກ ມີຄວາມສຳຄັນຕໍ່ທຸກການເຄື່ອນໄຫວວຽກງານຊີ້ນຳ-ນຳພາຂອງພັກ-ລັດ ແລະ ປະກອບສ່ວນສຳຄັນເຂົ້າໃນການປັບປຸງຖັນແຖວສະມາຊິກພັກ, ການຈັດຕັ້ງພັກໃຫ້ເຕີບໃຫຍ່ຂະຫຍາຍຕົວ ທັງເປັນການປັບປຸງວຽກງານພະນັກງານໂດຍກົງ. ທິດສະດີກໍ່ຄືພຶດຕິກຳໃນການປັບປຸງການຈັດຕັ້ງພັກ ໄດ້ຢັ້ງຢືນໃຫ້ເຫັນຈະແຈ້ງວ່າ: ພັກຈະເຂັ້ມແຂງ ຫຼື ບໍ່ນັ້ນ ຕົ້ນຕໍແມ່ນການກໍ່ສ້າງ ແລະ ຍົກສູງຄຸນນະພາບຂອງຖັນແຖວສະມາຊິກພັກນັ້ນເອງ.

ເພື່ອເຮັດໃຫ້ວຽກງານປັບປຸງບູລະນະການຈັດຕັ້ງຮາກຖານພັກ ເວົ້າລວມ, ເວົ້າສະເພາະການກໍ່ສ້າງຖັນແຖວສະມາຊິກພັກ ໃຫ້ມີຄຸນນະພາບ ແລະ ການຫັນປ່ຽນຢ່າງຕັ້ງໜ້າໃນການກໍ່ສ້າງພັກ ຕ້ອງໄດ້ເພີ່ມທະວີການບຳລຸງ, ກໍ່ສ້າງຖັນແຖວສະມາຊິກພັກຢ່າງຮອບດ້ານ ເພື່ອກາຍເປັນກຳລັງແຮງສູ້ຮົບຂອງພັກ ໃນທຸກຂົງເຂດວຽກງານ, ທັງຕອບສະໜອງກັບຄວາມຮຽກຮ້ອງຕ້ອງການຂອງໜ້າທີ່ການເມືອງຂອງພັກໃນແຕ່ລະໄລຍະເປັນຢ່າງດີ. ສະເພາະຢູ່ອົງຄະນະພັກ ຄະນະພົວພັນຕ່າງປະເທດສູນກາງພັກ ເວລາໃດກໍ່ໃຫ້ຄວາມສຳຄັນ ແລະ ເອົາໃຈໃສ່ໃນການຍົກສູງຄຸນນະພາບສະມາຊິກພັກ-ພະນັກງານໃນຄວາມຮັບຜິດຊອບຂອງຕົນ ເພື່ອຮັບປະກັນເຮັດລ້ອນໜ້າທີ່ ທີ່ພັກ-ລັດມອບໝາຍໃຫ້.

ຄະນະພົວພັນຕ່າງປະເທດສູນກາງພັກເປັນໜຶ່ງໃນອົງການຈັດຕັ້ງຂອງພັກ ທີ່ເປັນເສນາທິການໃຫ້ຄະນະບໍລິຫານງານສູນກາງພັກ, ກົມການເມືອງສູນກາງພັກ ແລະ ຄະນະເລຂາທິການສູນກາງພັກ ໃນການຄົ້ນຄວ້າແຜນຍຸດທະສາດ, ແນວທາງການຕ່າງປະເທດຂອງພັກ, ຕາງໜ້າໃຫ້ສູນກາງພັກ ໃນການພົວພັນຮ່ວມມືກັບພັກການເມືອງຂອງຕ່າງປະເທດ ຕາມການມອບໝາຍຂອງກົມການເມືອງສູນກາງພັກ ແລະ ຄະນະເລຂາທິການສູນກາງພັກ; ພ້ອມທັງ ເປັນເຈົ້າການຊີ້ນຳ, ແນະນຳ, ຕິດຕາມ, ກວດກາ, ຊຸກຍູ້ ແລະ ຄຸ້ມຄອງການເຄື່ອນໄຫວວຽກງານຕ່າງປະເທດຂອງບັນດາອົງການຈັດຕັ້ງອ້ອມຂ້າງສູນກາງພັກ, ອົງການແນວລາວສ້າງຊາດ, ອົງການຈັດຕັ້ງມະຫາຊົນ, ການທູດປະຊາຊົນ, ອົງການມິດຕະພາບ, ຄະນະສັນຕິພາບ ແລະ ສາມັກຄີຂອງລາວ ໃຫ້ມີຄວາມເປັນເອກະພາບ ໂດຍຜ່ານປະຕູດຽວ; ມີໜ້າທີ່ຄົ້ນຄວ້າ ແລະ ຫັນແນວທາງການຕ່າງປະເທດ ເປັນຍຸດທະສາດ, ຍຸດໂທບາຍ; ຄົ້ນຄວ້າ, ວິເຄາະ, ວິໄຈສະພາບການພາກພື້ນ, ສາກົນ, ສະພາບການຂອງບັນດາພັກການເມືອງ, ຂະບວນການກອມມູນິດ, ກຳມະກອນສາກົນ ແລະ ຄາດຄະເນສະພາບການ ເພື່ອນຳສະເໜີຄຳເຫັນ, ທັດສະນະຂອງພັກເຮົາຕໍ່ບັນຫາຕ່າງໆຢ່າງເປັນປົກກະຕິ, ມີປະສິດທິຜົນ ແລະ ທັນການ. ພ້ອມທັງເປັນເຈົ້າການຊີ້ນຳ, ແນະນຳ, ຕິດຕາມ, ກວດກາ, ຊຸກຍູ້ການຈັດຕັ້ງປະຕິບັດບັນດາຂໍ້ຕົກລົງ ຂອງການນຳຂັ້ນສູງກ່ຽວກັບການພົວພັນຮ່ວມມື ລະຫວ່າງພັກເຮົາກັບພັກການເມືອງເພື່ອນມິດຍຸດທະສາດ.

ດ້ວຍບົດບາດ ແລະ ຄວາມສຳຄັນວຽກງານດັ່ງ

ກ່າວນັ້ນ, ໃນກອງປະຊຸມໃຫຍ່ສະມາຊິກພັກ ອົງຄະນະພັກຄະນະພົວພັນຕ່າງປະເທດ ຄັ້ງທີ II ໄດ້ກໍານົດທິດທາງຄາດໝາຍສູ້ຊົນຂອງຕົນໄວ້ວ່າ: ເອົາໃຈໃສ່ວຽກງານພັດທະນາຊັບພະຍາກອນມະນຸດ, ສ້າງພະນັກງານ-ສະມາຊິກພັກ ໃຫ້ມີຄວາມໜັກແໜ້ນທາງດ້ານການເມືອງ, ແນວຄິດ, ການຈັດຕັ້ງ, ແບບແຜນການນໍາພາ ແລະ ມີຄວາມຮູ້, ຄວາມສາມາດ ນັບທັງພາສາຕ່າງປະເທດໃນລະດັບທີ່ແນ່ນອນ ສົມຄູ່ກັບໜ້າທີ່ການເມືອງຂອງຕົນ; ສູ້ຊົນໃຫ້ພະນັກງານ-ສະມາຊິກພັກໄດ້ຮັບການບໍາລຸງຍົກລະດັບທາງດ້ານທິດສະດີການເມືອງ, ວິຊາສະເພາະຢ່າງໜ້ອຍ 25% ຈໍານວນສະມາຊິກພັກ ຂອງທົ່ວອົງຄະນະພັກ.

ໄລຍະຜ່ານມາ ຄະນະພັກ, ຄະນະນໍາ ຄະນະພົວພັນຕ່າງປະເທດສູນກາງພັກ ໄດ້ຖືເອົາວຽກງານພັກເປັນວຽກງານຕົ້ນຕໍ ແລະ ຫັນເປັນແຜນການລະອຽດເພື່ອແນໃສ່ຜັນຂະຫຍາຍເນື້ອໃນຈິດໃຈ ຂອງມະຕິກອງປະຊຸມໃຫຍ່ ຄັ້ງທີ XI ຂອງພັກ, ມະຕິກອງປະຊຸມໃຫຍ່ ຄັ້ງທີ II ຂອງອົງຄະນະພັກ ຄະນະພົວພັນຕ່າງປະເທດສູນກາງພັກ ໃຫ້ເຂົ້າສູ່ຊີວິດຕົວຈິງຢ່າງເລິກເຊິ່ງໃນກົມກອງຂອງຕົນ ຢ່າງມີແຜນການ ແລະ ຈຸດສຸມໃນການກໍ່ສ້າງ-ບໍາລຸງສະມາຊິກພັກ ໂດຍກໍານົດເອົາການສຶກສາອົບຮົມດ້ານການເມືອງ-ແນວຄິດເປັນກົກ ແລະ ວິຊາສະເພາະເປັນໃຈກາງ, ພັດທະນາຄົນ, ພັດທະນາສະມາຊິກພັກ ໃຫ້ມີວິຊາສະເພາະເກັ່ງ, ສຶກສາອົບຮົມໃຫ້ສະມາຊິກພັກ ມີທັດສະນະການເມືອງໜັກແໜ້ນ, ເຊື່ອໝັ້ນຕໍ່ການນໍາພາຂອງພັກ, ມີມານະຈິດໝັ້ນໝຽວ, ເພີ່ມທະວີຄວາມສາມັກຄີພາຍໃນພັກ ແລະ ສະມາຊິກພັກ, ຍົກສູງສະຕິລະວັງຕົວໃນການຕ້ານກົນອຸບາຍການຫັນປ່ຽນໂດຍສັນຕິຂອງບັນດາອິດທິກໍາລັງປໍລະປັກທີ່ຫວັງມ້າງເພທໍາລາຍຄວາມສາມັກຄີພາຍໃນພັກ.

ໄປຄຽງຄູ່ກັນນັ້ນ ຄະນະພັກ, ຄະນະນໍາ ຄະນະພົວພັນຕ່າງປະເທດກໍ່ໄດ້ຄົ້ນຄວ້າ, ເລືອກເຟັ້ນພະນັກງານຜູ້ທີ່ມີມາດຕະຖານ, ເງື່ອນໄຂຄົບຖ້ວນໄດ້ມີໂອກາດຍົກລະດັບຄວາມຮູ້, ຄວາມສາມາດດ້ານຕ່າງໆທັງພາຍໃນ ແລະ ຕ່າງປະເທດຄື: ໄດ້ສົ່ງພະນັກງານຂັ້ນສູນກາງຄຸ້ມຄອງເຂົ້າຝຶກອົບຮົມທິດສະດີການເມືອງຂັ້ນສູງໄລຍະ 9 ເດືອນຢູ່ສະຖາບັນການເມືອງ ແລະ ການປົກຄອງແຫ່ງຊາດ 03 ສະຫາຍ, ໄລຍະ 04 ເດືອນຢູ່ ສປ ຈີນ 01 ສະຫາຍ ແລະ ສສ ຫວຽດນາມ 01 ສະຫາຍ; ຂັ້ນກາງ 06 ເດືອນຢູ່ສະຖາບັນການເມືອງ ແລະ ການປົກຄອງແຫ່ງຊາດ 01 ສະຫາຍ; ຂັ້ນຕົ້ນ 03 ເດືອນ 14 ສະຫາຍ; ເຂົ້າຮ່ວມຝຶກອົບຮົມວຽກງານພົວພັນຕ່າງປະເທດໄລຍະ 02 ເດືອນຢູ່ ສສ ຫວຽດນາມ 07 ສະຫາຍ, ຍິງ 02 ສະຫາຍ; ສົ່ງພະນັກງານໄປຮຽນຕໍ່ຢູ່ຕ່າງປະເທດ 02 ສະຫາຍ; ສົ່ງພະນັກງານເຂົ້າຮ່ວມຝຶກອົບຮົມພາສາອັງກິດໄລຍະສັ້ນຢູ່ພາຍໃນ ແລະ ຕ່າງປະເທດ 19 ສະຫາຍ, ຍິງ 10 ສະຫາຍ; ເຂົ້າຮ່ວມຝຶກອົບຮົມຫົວຂໍ້ສະເພາະຢູ່ສະຖາບັນການຕ່າງປະເທດ 15 ສະຫາຍ, ຍິງ 04 ສະຫາຍ.

ພ້ອມດຽວກັນນັ້ນ, ສະມາຊິກພັກຍັງໄດ້ຜ່ານການກໍ່ສ້າງໃນຂະບວນການຕົວຈິງເປັນຕົ້ນແມ່ນການເຄື່ອນໄຫວຮັບໃຊ້ວຽກງານການເຄື່ອນໄຫວໃນກອບ 2 ຝ່າຍ, ຂົງເຂດອາຊີ-ປາຊີຟິກ ແລະ ອາຟຣິກາ ໄດ້ເປັນເຈົ້າ

ການໃນການກະກຽມ, ຕິດຕາມ ແລະ ອຳນວຍຄວາມສະດວກໃຫ້ ຄະນະຜູ້ແທນພັກ ປປ ລາວ ໄປເຄື່ອນໄຫວຕ່າງປະເທດ ແລະ ຕ້ອນຮັບຄະນະຜູ້ແທນຕ່າງປະເທດມາຢ້ຽມຢາມ ສປປ ລາວ, ເຂົ້າຮ່ວມກອງປະຊຸມ ແລະ ສົນທະນາທາງໄກ ໄດ້ທັງໝົດ 206 ຄັ້ງ, ໃນນັ້ນການເຄື່ອນໄຫວອັນພົ້ນເດັ່ນຄື: ສົ່ງຄະນະຜູ້ແທນພັກ ປປ ລາວ ໄປເຄື່ອນໄຫວວຽກງານຢູ່ຕ່າງປະເທດ ແລະ ຕ້ອນຮັບຜູ້ແທນຕ່າງປະເທດມາຢ້ຽມຢາມເຮັດວຽກ ສປປ ລາວ. ມາຮອດປະຈຸບັນ ຜ່ານການຍົກສູງຄຸນນະພາບສະມາຊິກພັກໃນດ້ານຕ່າງໆ ເຫັນໄດ້ວ່າສະມາຊິກພັກ-ພະນັກງານມີການເຕີບໃຫຍ່ຂະຫຍາຍຕົວທາງດ້ານປະລິມານ ແລະ ຄຸນນະພາບ ເຊິ່ງສະແດງອອກທີ່ອີງຄະນະພັກ ຄະນະພົວພັນຕ່າງປະເທດສູນກາງພັກມີພະນັກງານລັດຖະກອນ ທັງໝົດ 150 ທ່ານ, ຍິງ 51 ທ່ານ, ໃນນັ້ນ ພະນັກງານພວມປະຈຳການຢູ່ຕ່າງປະເທດ 17 ທ່ານ, ຄະນະພັກ, ຄະນະພົວພັນຕ່າງປະເທດສູນກາງພັກ ປະກອບມີ 08 ສະຫາຍ, ຍິງ 1 ສະຫາຍ; ມີສະມາຊິກພັກທັງໝົດ 110 ສະຫາຍ, ຍິງ 26 ສະຫາຍ, ໃນນັ້ນມີສະມາຊິກພັກສົມບູນ 84 ສະຫາຍ, ຍິງ 24 ສະຫາຍ, ສະມາຊິກພັກສຳຮອງ 06 ສະຫາຍ, ຍິງ 02 ສະຫາຍ ແລະ ພະນັກງານອາວຸໂສບຳນານ 18 ສະຫາຍ, ຍິງ 03 ສະຫາຍ.

ໄປຄຽງຄູ່ກັບຜົນສຳເລັດ ແລະ ດ້ານຕັ້ງໜ້າທີ່ກ່າວມາຂ້າງເທິງນັ້ນ, ເຖິງວ່າຄະນະພັກ ຄະນະພົວພັນຕ່າງປະເທດໄດ້ມີຄວາມພະຍາຍາມຍົກສູງຄຸນນະພາບຖັນແຖວສະມາຊິກພັກໃນໄລຍະຜ່ານມາແລ້ວກໍ່ຕາມ ແຕ່ຍັງມີບາງຂໍ້ຄົງຄ້າງຈຳນວນໜຶ່ງດັ່ງນີ້:

1. ສະມາຊິກພັກ-ພະນັກງານຈຳນວນໜຶ່ງ, ຄວາມຮັບຮູ້, ເຂົ້າໃຈຕໍ່ອຸດົມການ ຂອງພັກບໍ່ທັນສູງ, ຄວາມຕື່ນຕົວ, ສະຕິເຄົາລົບຕໍ່ການຈັດຕັ້ງ, ຕໍ່ກົດລະບຽບພັກ ແລະ ລະບຽບການຕໍ່ສຳນັກງານບໍ່ທັນເຮັດໄດ້ດີເທົ່າທີ່ຄວນ; ບາງສະຫາຍຍັງຖືເບົາຕໍ່ການຕຳນິຕິຊົມຕົນເອງ, ຕິຊົມກໍ່ສ້າງຊ່ວຍເຫຼືອເຊິ່ງກັນ ແລະ ກັນ, ຍັງບໍ່ທັນເປັນແບບຢ່າງທີ່ດີໃຫ້ແກ່ມະຫາຊົນ, ບໍ່ທັນເປັນເຈົ້າການໃນການຝຶກຝົນຫຼໍ່ຫຼອມ, ຄົ້ນຄວ້າຮໍ່າຮຽນດ້ວຍຕົນເອງ ແລະ ຍັງມີແນວຄິດລັງເລທໍ້ຖອຍ.

2. ການຈັດຕັ້ງຮາກຖານພັກບາງໜ່ວຍ ການຮ່ວມຊີວິດພັກຍັງບໍ່ທັນປັນປົກກະຕິຕໍ່ເນື່ອງ, ເນື້ອໃນ ແລະ ຮູບແບບໃນການຮ່ວມຊີວິດພັກບໍ່ທັນຮັບປະກັນຕາມ 3 ລັກສະນະ, ສະມາຊິກພັກ-ພະນັກງານຈຳນວນໜຶ່ງການຫັນປ່ຽນທາງດ້ານແນວຄິດ ໃນການບຸກທະລຸທາງດ້ານຈິນຕະນາການ ຍັງບໍ່ທັນເຮັດໄດ້ຢ່າງຕັ້ງໜ້າເທົ່າທີ່ຄວນ.

3. ການເປັນເສນາທິການວຽກງານກໍ່ສ້າງພັກ-ພະນັກງານ ຍັງບໍ່ທັນເປັນເຈົ້າການໃນການຊ່ວຍຄະນະພັກ ເທົ່າທີ່ຄວນ, ການກໍ່ສ້າງ-ບຳລຸງພະນັກງານທາງດ້ານວິຊາສະເພາະ ແລະ ພາສາຕ່າງປະເທດຍັງບໍ່ທັນມີແຜນການລະອຽດ ການຂຶດຂຽນແປພາສາຕ່າງປະເທດເປັນຕົ້ນແມ່ນພາສາຈີນ, ຫວຽດນາມ, ອັງກິດ ຍັງບໍ່ທັນພຽງພໍ. ນອກຈາກນັ້ນຍັງຂາດພະນັກງານ ທີ່ຮູ້ພາສາຕ່າງປະເທດ ເຊັ່ນ: ມຽນມາ, ເກົາຫຼີ, ຝຣັ່ງ, ເຢຍລະມັນ ແລະ ພາສາອື່ນໆ.

ເພື່ອຍົກສູງຄຸນນະພາບສະມາຊິກພັກ, ຍົກສູງບົດບາດ, ການເປັນແບບຢ່າງນຳໜ້າໃນທຸກຂົງເຂດວຽກ

ງານ, ເປັນນັກຮົບປະຕິວັດທີ່ເຂັ້ມແຂງ, ເປັນກໍາລັງແຮງສູ້ຮົບໃຫ້ແກ່ການຈັດຕັ້ງຮາກຖານພັກ ສາມາດຕອບສະໜອງໜ້າທີ່ການເມືອງ ແລະ ຄວາມຮຽກຮ້ອງຕ້ອງການຂອງວຽກງານໃນໄລຍະໃໝ່, ຄະນະພັກ ຄະນະພົວພັນຕ່າງປະເທດສູນກາງພັກ ຕ້ອງໄດ້ສືບຕໍ່ເອົາໃຈໃສ່ບາງດ້ານດັ່ງນີ້:

ໜຶ່ງ, ຄະນະພັກ, ຄະນະໜ່ວຍພັກ ຕ້ອງຖືເອົາການສຶກສາອົບຮົມການເມືອງ-ແນວຄິດສະມາຊິກພັກ-ພະນັກງານ ເປັນໜ້າທີ່ ແລະ ຄວາມຮັບຜິດຊອບໂດຍກົງການກໍ່ສ້າງ ແລະ ບໍາລຸງພະນັກງານ, ສະມາຊິກພັກຕິດພັນກັບໜ້າທີ່ການເມືອງໃນອົງການຈັດຕັ້ງຂອງຕົນ.

ສອງ, ຄະນະພັກ, ຄະນະນໍາຄະນະພົວພັນຕ່າງປະເທດ ຕ້ອງເປັນເຈົ້າການສ້າງເງື່ອນໄຂ, ສິ່ງອໍານວຍຄວາມສະດວກໃຫ້ພະນັກງານ-ສະມາຊິກພັກ ໄດ້ຮັບໂອກາດຍົກລະດັບ ທາງດ້ານວິຊາສະເພາະ, ທາງດ້ານທິດສະດີການເມືອງ ແລະ ຂະບວນທົດສອບການຝຶກຝົນຫຼໍ່ຫຼອມວຽກງານຕົວຈິງຢູ່ຮາກຖານ ເພື່ອເຮັດໃຫ້ຖັນແຖວສະມາຊິກພັກ ໄດ້ຮັບການພັດທະນາ ແລະ ຍົກລະດັບສູ່ຄຸນນະພາບໃໝ່ສູງຂຶ້ນເລື້ອຍໆ ເຊິ່ງໃນນັ້ນ ຕ້ອງໄດ້ກ້າຕັດສິນໃຈມອບໝາຍຄວາມຮັບຜິດຊອບໃຫ້ສະມາຊິກພັກໄດ້ມີໂອກາດເຂົ້າຮ່ວມເຄື່ອນໄຫວວຽກງານທັງພາຍໃນ ແລະ ຕ່າງປະເທດ.

ສາມ, ຄະນະພັກ, ຄະນະໜ່ວຍພັກຕ້ອງສືບຕໍ່ເສີມຂະຫຍາຍການຈັດຕັ້ງປະຕິບັດຢ່າງເຂັ້ມງວດ, ກົມກຽວພາຍໃນ ແລະ ມີປະສິດທິຜົນ ໃນການເຄື່ອນໄຫວຮ່ວມຊີວິດພັກຂອງຮາກຖານພັກ; ປະຕິບັດການກວດກາ, ຕີລາຄາ ແລະ ຈັດແບ່ງປະເພດຄຸນນະພາບຂອງສະມາຊິກພັກ, ຄະນະພັກ ແລະ ການຈັດຕັ້ງແຕ່ລະຂັ້ນໃນແຕ່ລະປີໃຫ້ຖືກຕາມຂໍ້ກໍານົດ, ກົດລະບຽບ. ພ້ອມດຽວກັນນັ້ນ, ຕ້ອງເອົາໃຈໃສ່ຄຸ້ມຄອງສະມາຊິກພັກກໍາແໜ້ນ ຈໍານວນ, ຄຸນທາດ, ຄຸນສົມບັດ, ຈຸດພິເສດ ແລະ ລັກສະນະຂອງຖັນແຖວສະມາຊິກພັກ; ກໍາສະພາບແນວຄິດ, ລະດັບຄວາມຮູ້, ຄວາມສາມາດ ແລະ ການປ່ຽນແປງຂອງຖັນແຖວສະມາຊິກພັກແຕ່ລະໄລຍະ;.

ສີ່, ສະມາຊິກພັກ ແຕ່ລະສະຫາຍຕ້ອງເອົາໃຈໃສ່ຝຶກຝົນຫຼໍ່ຫຼອມຕົນເອງ ໃນທຸກດ້ານ ເພື່ອເຮັດສໍາເລັດໜ້າທີ່ການເມືອງຂອງຕົນ ທີ່ໄດ້ຮັບມອບໝາຍ.

ເວົ້າລວມແລ້ວ, ການຍົກສູງຄຸນນະພາບຖັນແຖວສະມາຊິກພັກແມ່ນວຽກງານສໍາຄັນ, ເປັນບັນຫາທີ່ຮີບດ່ວນ ແລະ ພາວະວິໄສ ເພື່ອຮັບປະກັນໃຫ້ການປະຕິບັດໜ້າທີ່ການເມືອງຂອງພັກ ບັນລຸຕາມຈຸດປະສົງທີ່ກໍານົດໄວ້, ສະນັ້ນ ຄະນະພັກ, ຄະນະນໍາ ຄະນະພົວພັນຕ່າງປະເທດສູນກາງພັກ ຕ້ອງເອົາໃຈໃສ່ຢ່າງເປັນເຈົ້າການໃນການຍົກສູງຄຸນນະພາບໃຫ້ສະມາຊິກພັກ ທີ່ຢູ່ໃນຄວາມຮັບຜິດຊອບຂອງຕົນຢ່າງເປັນປົກກະຕິຕໍ່ເນື່ອງ ເພື່ອໃຫ້ເຂົາເຈົ້າມີຄຸນທາດການເມືອງທີ່ໜັກແໜ້ນ, ມີຄຸນສົມບັດສິນທໍາປະຕິວັດ, ມີຄວາມຮູ້, ຄວາມສາມາດ ແລະ ເຂົ້າໃຈພາສາຕ່າງປະເທດທີ່ແນ່ນອນ ເພື່ອເຮັດລ້ອນໜ້າທີ່ສໍາຄັນ ທີ່ພັກ ແລະ ລັດຖະບານມອບໝາຍໃຫ້ບັນລຸຜົນສໍາເລັດ...ງ

ບາງເນື້ອໃນການຈັດຕັ້ງປະຕິບັດການແກ້ໄຂຄວາມຫຍຸ້ງຍາກ ທາງດ້ານເສດຖະກິດ-ການເງິນ ຢູ່ ສປປ ລາວ

ໂດຍ: ນິວະລັດ ສິມວົງ

ໃນຊຸມປີຜ່ານມາ, ສະພາບການຂອງໂລກໄດ້ປະເຊີນກັບສິ່ງທ້າທາຍ ແລະ ຄວາມບໍ່ແນ່ນອນຫຼາຍດ້ານ, ການປັບຂຶ້ນອັດຕາດອກເບ້ຍທົ່ວໂລກ, ບັນຫາຄວາມຂັດແຍ່ງທາງດ້ານການເມືອງ ແລະ ເສດຖະກິດ ຂອງປະເທດມະຫາອຳນາດ ໄດ້ສົ່ງຜົນກະທົບທາງລົບຕໍ່ເສດຖະກິດຂອງບັນດາປະເທດໃນໂລກ. ຈາກສະພາບການດັ່ງກ່າວ ໄດ້ສົ່ງຜົນກະທົບຕໍ່ເສດຖະກິດຂອງປະເທດເຮົາ ຢ່າງຫຼີກລ່ຽງບໍ່ໄດ້ ໂດຍສະເພາະການປະເຊີນກັບຄວາມຫຍຸ້ງຍາກທາງດ້ານເສດຖະກິດ-ການເງິນ ເນື່ອງຈາກເສດຖະກິດພາຍໃນມີຄວາມບອບບາງ ສົ່ງຜົນໃຫ້ເກີດມີສະພາບ ອັດຕາເງິນເຟີ້ ແລະ ຄ່າຄອງຊີບສູງ ໃນຄະນະທີ່ລາຍໄດ້ບໍ່ສາມາດເພີ່ມຂຶ້ນຢ່າງສົມສ່ວນ. ຜ່ານມາ ພັກ ແລະ ລັດ ກໍ່ໄດ້ວາງນະໂຍບາຍເພື່ອແກ້ໄຂບັນຫາຄວາມຫຍຸ້ງຍາກທາງເສດຖະກິດດັ່ງກ່າວ ແຕ່ກໍ່ຍັງບໍ່ທັນສາມາດແກ້ໄຂໄດ້ຢ່າງເຕັມສ່ວນ, ບັນຫາໜີ້ສິນສາທາລະນະຍັງນັບມື້ນັບເພີ່ມຫຼາຍຂຶ້ນ, ການຜະລິດສິນຄ້າກະສິກຳ-ອຸດສາຫະກຳປຸງແຕ່ງຍັງບໍ່ທັນແຂງແຮງ, ການສ້າງມູນຄ່າເພີ່ມຜະລິດຕະພັນພາຍໃນຍັງເຮັດໄດ້ໜ້ອຍ. ເສດຖະກິດ-ການເງິນພົບຄວາມຫຍຸ້ງຍາກໜັກໜ່ວງ ເພດານງົບປະມານໃນແຕ່ລະປີຫຼຸດລົງມາຈາກການຂາດດູນງົບປະມານ, ການເກັບລາຍຮັບງົບປະມານຮົ່ວໄຫຼ, ຖານລາຍຮັບຍັງບໍ່ກວ້າງ ແລະ ບໍ່ຫຼາກຫຼາຍ. ຕໍ່ກັບສະພາບການດັ່ງກ່າວ ພັກ-ລັດເຮົາ ໄດ້ມີຄວາມພະຍາຍາມ ແລະ ຍົກສູງຄວາມຮັບຜິດຊອບນຳພາ-ຊີ້ນຳຕໍ່ການແກ້ໄຂຄວາມຫຍຸ້ງຍາກດ້ານເສດຖະກິດ-ການເງິນຢ່າງເປັນລະບົບຕໍ່ເນື່ອງດ້ວຍການກຳນົດທິດ, ນະໂຍບາຍ, ວາງມາດຕະການຕ່າງໆ ອອກຢ່າງຄົບຊຸດ ແລະ ຊີ້ນຳການຈັດຕັ້ງປະຕິບັດຕົວຈິງຢ່າງແທດເຖິງ. ກອງປະຊຸມໃຫຍ່ ຜູ້ແທນທົ່ວປະເທດ ຄັ້ງທີ XI ຂອງພັກ ໄດ້ກຳນົດທິດທາງໃນການປັບປຸງສະພາບການຄຸ້ມຄອງໃຫ້ແກ່ງົບປະມານຂອງລັດໄວ້ວ່າ: ສ້າງລະບົບຄຸ້ມຄອງລາຍຮັບ-ລາຍຈ່າຍງົບປະມານຂອງລັດ ໃຫ້ເຂັ້ມແຂງ ດ້ວຍການປະຕິບັດເຂັ້ມງວດຫຼັກການແຜນລາຍຈ່າຍ ຕ້ອງບົນພື້ນຖານຄວາມສາມາດຂອງລາຍຮັບງົບປະມານຕົວຈິງ ແລະ ບໍ່ສ້າງໂຄງການລົງທຶນໃໝ່ຈາກງົບປະມານລັດທີ່ບໍ່ມີແຫຼ່ງຊຳລະສະສາງອັນຈະແຈ້ງ, ຕ້ອງປະຕິບັດບັນດາມາດຕະການເພີ່ມລາຍຮັບງົບປະມານຢ່າງເຂັ້ມແຂງ ຕິດພັນກັບການຫັນລະບົບຄຸ້ມຄອງເກັບລາຍຮັບໃຫ້ທັນສະໄໝ, ຮັບປະກັນໃຫ້ທຸກວິສາຫະກິດ ຫຼື ທຸກເປົ້າໝາຍເສຍພາສີ-ອາກອນ ປະຕິບັດການເສຍພາສີ-ອາກອນຢ່າງຖືກຕ້ອງ ແລະ ຄົບຖ້ວນຕາມກົດໝາຍ, ຍົກເວັ້ນຕໍ່ບາງກິດຈະການລົງທຶນ ທີ່ມີຄວາມຈຳເປັນຕ້ອງສົ່ງເສີມສະເພາະ, ແຕ່ຕ້ອງຮີບຮ້ອນຄົ້ນຄວ້າ ແລະ ກຳນົດນະໂຍບາຍສົ່ງເສີມ ແລະ ນິຕິກຳອັນຈະແຈ້ງ ໂດຍມີເງື່ອນໄຂ ແລະ ຂັ້ນຕອນປະຕິບັດຢ່າງເປັນລະບົບ ແລະ ໂປ່ງໃສ, ເດັດດ່ຽວຫຼີກລ່ຽງການຍົກເວັ້ນພາສີ-ອາກອນແບບເລືອກເປົ້າໝາຍ, ບໍ່ໄປຕາມນະໂຍບາຍ ແລະ ຂັ້ນຕອນດັ່ງກ່າວ; ຕ້ອງຖືການປະຢັດລາຍຈ່າຍງົບປະມານໂດຍສະເພາະການໃຊ້ຈ່າຍບໍລິຫານເປັນວາລະແຫ່ງຊາດ ແລະ ຕິດພັນການປັບປຸງກົງຈັກການຈັດຕັ້ງໃຫ້ກະ

ທັດຮັດຍິ່ງຂຶ້ນ. ເຖິງຢ່າງໃດກໍ່ຕາມ, ເສດຖະກິດຂອງປະເທດເຮົາ ໃນປະຈຸບັນ ຍັງຢູ່ໃນສະພາບບອບບາງຫຼາຍ ເປັນຕົ້ນແມ່ນງົບປະມານປົກກະຕິຂອງລັດ ບໍ່ສາມາດຊໍາລະສະສາງໜີ້ໂຄງການທີ່ລັດລົງທຶນຜ່ານມາ ຕາມກໍານົດ, ການຂາດແຫຼ່ງທຶນ ແລະ ໜີ້ສິນເງິນກູ້ຕ່າງປະເທດ ທີ່ລົງທຶນບໍ່ມີປະສິດທິຜົນ, ຄວາມອ່ອນແອ ຂອງຄັງສໍາຮອງແຫ່ງຊາດ ທີ່ບໍ່ສາມາດຮັບປະກັນການປະຕິບັດພາລະບົດບາດດັດສົມມະຫາພາກ ແລະ ປະຕິບັດການຊໍາລະສະສາງສາກົນ ເຊິ່ງອາດບໍ່ສະເພາະແຕ່ສົ່ງຜົນກະທົບຮຸນແຮງໂດຍກົງ ຕໍ່ສະຖຽນລະພາບ ຂອງເສດຖະກິດມະຫາພາກ ຫາກຍັງອາດເຮັດໃຫ້ຄວາມເຊື່ອໝັ້ນ ຂອງປະຊາຊົນເຮົາ ຕໍ່ການນໍາພາຂອງພັກ ແລະ ການຄຸ້ມຄອງຂອງລັດ ນັບມື້ນັບຫຼຸດລົງ.

ຄວາມຫຍຸ້ງຍາກທີ່ກ່າວມານັ້ນ, ໄດ້ເລັ່ງທວງຢ່າງຮີບດ່ວນໃຫ້ພັກ-ລັດເຮົາ ຕ້ອງໄດ້ເພີ່ມທະວີການນໍາພາ-ຊີ້ນໍາ ເພື່ອແກ້ໄຂຄວາມຫຍຸ້ງຍາກດ້ານເສດຖະກິດ-ການເງິນ ໂດຍຍົກລະດັບການແກ້ໄຂບັນຫາດັ່ງກ່າວ "ເປັນວາລະແຫ່ງຊາດ" ການກໍານົດເປັນວາລະແຫ່ງຊາດ ວ່າດ້ວຍການແກ້ໄຂຄວາມຫຍຸ້ງຍາກ ດ້ານເສດຖະກິດ-ການເງິນເປັນເຫດການ ການເມືອງສໍາຄັນ ທີ່ເປັນປະຫວັດການ ຂອງປະເທດຊາດ ໃນການຕັດສິນໃຈດ້ານຍຸດທະສາດ ຂອງພັກ-ລັດເຮົາ, ເປັນການສ້າງກົນໄກປະຕິບັດ ທີ່ມີການປະສົມກົມກຽວ ລະຫວ່າງ ວິທີປົກກະຕິທີ່ມີຢູ່ກັບວິທີ ແລະ ມາດຕະການພິເສດ ເພື່ອຂັບເຄື່ອນການແກ້ບັນຫາຫຍຸ້ງຍາກ ດ້ານເສດຖະກິດ-ການເງິນ ທີ່ມີທ່າອ່ຽງ ແລະ ຄວາມສ່ຽງອາດຈະຕົກເຂົ້າສູ່ວິກິດການໃຫ້ຜ່ອນຄາຍລົງ ແລະ ໃຫ້ມີພື້ນຖານໝັ້ນປ່ຽນດີຂຶ້ນຢ່າງຈະແຈ້ງດ້ວຍການປັບປຸງນະໂຍບາຍ, ກົນໄກການຄຸ້ມຄອງບາງດ້ານ ໃຫ້ມີລັກສະນະບຸກທະລຸ ແນໃສ່ແກ້ໄຂບັນຫາໃຫ້ໄດ້ ແລະ ສ້າງຄວາມເຂັ້ມແຂງ ດ້ານເສດຖະກິດ-ການເງິນເປັນກ້າວໆ, ທົ່ວພັກ-ລັດ, ທົ່ວສັງຄົມ. ພ້ອມກັນນັ້ນ, ພັກ ແລະ ລັດຖະບານ ກໍ່ໄດ້ອອກນິຕິກໍາຕ່າງໆ ເພື່ອເປັນທິດໃຫ້ແກ່ຄະນະພັກແຕ່ລະຂັ້ນຈັດຕັ້ງປະຕິບັດ ເປັນຕົ້ນຄໍາສັ່ງຂອງກົມການເມືອງສູນກາງພັກ ສະບັບເລກທີ 01/ກມສພ ລົງວັນທີ 26 ກໍລະກົດ 2021 ວ່າດ້ວຍການເພີ່ມທະວີນໍາພາ-ຊີ້ນໍາຂອງຄະນະພັກແຕ່ລະຂັ້ນ ໃນການຈັດຕັ້ງປະຕິບັດມາດຕະການແກ້ໄຂຄວາມຫຍຸ້ງຍາກທາງດ້ານເສດຖະກິດ-ການເງິນ ແລະ ມະຕິຂອງສະພາແຫ່ງຊາດ ເລກ 62/ສພຊ ລົງວັນທີ 08 ກໍລະກົດ 2022 ວ່າດ້ວຍການຮັບຮອງເອົາບົດລາຍງານຜົນການຕິດຕາມກວດກາຄວາມຄືບໜ້າການຈັດຕັ້ງປະຕິບັດວາລະແຫ່ງຊາດ ກ່ຽວກັບການແກ້ໄຂຄວາມຫຍຸ້ງຍາກທາງດ້ານເສດຖະກິດ-ການເງິນ ແລະ ແກ້ໄຂບັນຫາຢາເສບຕິດໃນໄລຍະຜ່ານມາ, ຫັນເອົານິຕິກໍາມາເປັນແຜນງານ, ໂຄງການໃນການຈັດຕັ້ງປະຕິບັດໃຫ້ສອດຄ່ອງກັບສະພາບເງື່ອນໄຂຕົວຈິງຂອງແຕ່ລະຂົງເຂດ ແລະ ທ້ອງຖິ່ນຂອງຕົນໃຫ້ໄປຕາມທິດທາງລວມທີ່ກໍານົດໄວ້.

ເພື່ອຈັດຕັ້ງຜັນຂະຫຍາຍເນື້ອໃນຈິດໃຈດັ່ງກ່າວໃຫ້ມີຜົນສໍາເລັດຕາມຄາດໝາຍທີ່ກໍານົດໄວ້ເຫັນວ່າ ມີຫຼາຍດ້ານໄດ້ຮັບການຈັດຕັ້ງປະຕິບັດຢ່າງຕັ້ງໜ້າທີ່ສະແດງໃຫ້ເຫັນເຖິງທ່າກ້າວ ແລະ ຄວາມພະຍາຍາມໃນການປັບປຸງແກ້ໄຂຂອງພາກສ່ວນ, ຂະແໜງການຕ່າງໆ ພາຍໃຕ້ການຊີ້ນໍາ-ນໍາພາ ຂອງຄະນະພັກແຕ່ລະຂັ້ນ ໄດ້ຫັນເອົາມາເປັນແຜນງານ, ແຜນການລະອຽດ ໂດຍສະເພາະຂະແໜງການທີ່ກ່ຽວຂ້ອງໄດ້ເອົາໃຈໃສ່ຈັດຕັ້ງປະຕິບັດດ້ວຍຄວາມຮັບຜິດຊອບ ໃນການແກ້ໄຂຄວາມຫຍຸ້ງຍາກທາງດ້ານເສດຖະກິດຂອງປະເທດເຮົາ ໃນໄລຍະຜ່ານມາ ມີຫຼາຍດ້ານທີ່ພົ້ນເດັ່ນ ເປັນຕົ້ນ:

ການສົ່ງເສີມການຜະລິດ ເພື່ອທົດແທນການນໍາເຂົ້າ ແລະ ເປັນສິນຄ້າສົ່ງອອກ ເພື່ອສ້າງຖານລາຍຮັບທີ່ເຂັ້ມແຂງ ແລະ ຍືນຍົງ. ໃນປີ 2022 ສາມາດຜະລິດເຂົ້າເປືອກລວມໄດ້ 957.629 ເຮັກຕາ, ຜົນຜະລິດ 3,78 ລ້ານ

ກວ່າໂຕນ ທຽບໃສ່ປີຜ່ານມາ ເພີ່ມຂຶ້ນ 0,3% (ເນື້ອທີ່ 936.662 ເຮັກຕາ, ຜົນຜະລິດ 3,66 ລ້ານໂຕນ) ເມື່ອດຸ່ນດ່ຽງໃສ່ຄວາມຕ້ອງການສາມາດຮັບປະກັນດ້ານສະບຽງອາຫານ, ພ້ອມທັງມີສ່ວນແຮ ແລະ ເປັນສິນຄ້າ; ປູກພືດສະບຽງອາຫານ ເພື່ອບໍລິໂພກພາຍໃນ ແລະ ປ້ອນເຂົ້າໂຮງງານອຸດສະຫະກໍາປຸງແຕ່ງ ໄດ້ 265.395 ເຮັກຕາ, ຜົນຜະລິດ 2.369.580 ໂຕນ ທຽບໃສ່ປີຜ່ານມາເພີ່ມຂຶ້ນ 14,4% (ເນື້ອທີ່ການຜະລິດ 192.851 ເຮັກຕາ, ຜົນຜະລິດ 2.070.927 ໂຕນ), ຜະລິດຊີ້ນ, ໄຂ່ ແລະ ປາ ໄດ້ທັງໝົດ 507.644 ໂຕນ ທຽບໃສ່ປີຜ່ານມາເພີ່ມຂຶ້ນ 4,5% (ຈາກ 485.480 ໂຕນ); ການນໍາເຂົ້າພືດ ແລະ ຜະລິດຕະພັນສັດ ມີມູນຄ່າຫລຸດລົງ 11,54 ລ້ານໂດລາສະຫະລັດ (ນໍາເຂົ້າປີ 2022 ມູນຄ່າ 87,21 ລ້ານໂດລາສະຫະລັດ ແລະ ປີ 2021 ມີ ມູນຄ່າ 98,75 ລ້ານໂດລາສະຫະລັດ). ດ້ານການສົ່ງເສີມການຜະລິດເປັນສິນຄ້າເພື່ອສົ່ງອອກ ສາມາດເຈລະຈາເປີດຕະຫຼາດການຜະລິດບັນດາພືດ ປະຕິບັດໄດ້ 563.456 ເຮັກຕາ, ຜົນຜະລິດ 8,17 ລ້ານກວ່າໂຕນ ທຽບໃສ່ກ່ອນປະຕິບັດວາລະແຫ່ງຊາດ ແມ່ນເພີ່ມຂຶ້ນ 41,35% (5,78 ລ້ານໂຕນ).

ໃນການສ້າງຄວາມເຂັ້ມແຂງດ້ານການເກັບລາຍຮັບງົບປະມານ ໄດ້ສຸມໃສ່ຈັດຕັ້ງປະຕິບັດຄໍາສັ່ງເລກທີ 18/ນຍ ໃນການເກັບລາຍຮັບໂດຍຫັນເປັນທັນສະໄໝແບບດີຈີຕ້ອນ ໄດ້ຍົກລະດັບລະບົບ (Lao National Single Windows/ASYCUDA) ມາເປັນລະບົບດຽວກັບ NSWA+ (ລະບົບແຈ້ງພາສີປະຕູດຽວແຫ່ງຊາດ ອາຊີກູດາພລັສ) ເຊິ່ງເປັນລະບົບແຈ້ງພາສີແບບເອເລັກໂຕຣນິກ ຕາມມາດຕະຖານສາກົນ ໄດ້ເປີດນໍາໃຊ້ຢູ່ດ່ານທ່ານາແລ້ງ ຄັ້ງວັນທີ 2 ກຸມພາ 2023; ໄດ້ນໍາໃຊ້ລະບົບປະຕູດຽວອາຊຽນ ເພື່ອຢັ້ງຢືນຕົ້ນກໍາເນີດສິນຄ້າໂດຍຜ່ານລະບົບ TaxRIS ຢູ່ບັນດາດ່ານໃນຂອບເຂດທົ່ວປະເທດ, ຢູ່ 54 ເມືອງ ແລະ 6 ຈຸດເຂດເສດຖະກິດພິເສດ; ສໍາເລັດການສ້າງ API ໃນການຈັດເກັບພາສີທີ່ດິນ ແລະ ວຽກຕ້ານການຮົ່ວໄຫຼລາຍຮັບງົບປະມານແຫ່ງລັດ, ປັບປຸງກົນໄກການເກັບລາຍຮັບ ແລະ ຄຸ້ມຄອງການນໍາເຂົ້າສາມາດເຮັດໃຫ້ລາຍຮັບເພີ່ມຂຶ້ນ 309 ຕື້ກີບ ໃນປີ 2022.

ການສົ່ງເສີມການປະຢັດ, ຕ້ານການຟຸມເຟືອຍ, ລາຍຈ່າຍງົບປະມານ ແລະ ການແກ້ໄຂໜີ້ສິນພາຍໃນແລະ ຕ່າງປະເທດ. 1. ສາມາດຄຸ້ມຄອງລາຍຈ່າຍໄປຕາມທິດປະຢັດ ແລະ ຕ້ານການຟຸມເຟືອຍ ຢູ່ບັນດາຂະແໜງການ ແລະ ທ້ອງຖິ່ນ, ປັບປຸງກົນໄກການປະຕິບັດລາຍຈ່າຍດ້ວຍການເຮັດທົດລອງມອບຄວາມຮັບຜິດຊອບໃຫ້ຜູ້ສັ່ງການຫຼາຍຂຶ້ນ ໂດຍກະຊວງການເງິນ ຈະຫັນໄປຄຸ້ມຄອງວຽກງານມະຫາພາກ ເພື່ອຫຼຸດຜ່ອນຂັ້ນຕອນອະນຸມັດ, ແຕ່ສຸມໃສ່ການຕິດຕາມກວດກາ; ໄດ້ຜັນຂະຫຍາຍດໍາລັດວ່າດ້ວຍການປະຢັດ ແລະ ຕ້ານການຟຸມເຟືອຍສະບັບເລກທີ 205/ລບ ເປັນຂໍ້ຕົກລົງວ່າດ້ວຍການປັບປຸງກໍານົດໝາຍໃຊ້ຈ່າຍງົບປະມານ ຂອງລັດການປະຢັດແລະ ຕ້ານການຟຸມເຟືອຍ ພ້ອມລົງເຜີຍແຜ່ໃຫ້ແຕ່ລະກະຊວງ, ອົງການ ແລະ ແຂວງ, ນະຄອນຫຼວງ ໄດ້ຈໍານວນໜຶ່ງ; 2. ຈັດຕັ້ງປະຕິບັດດໍາລັດ ວ່າດ້ວຍລົດຂອງລັດ ສະບັບເລກທີ 599/ລບ ມາຮອດປະຈຸບັນສາມາດສັງລວມຂໍ້ມູນລົດລັດເບື້ອງຕົ້ນ ໃນທົ່ວປະເທດ ໄດ້ທັງໝົດ 39.754 ຄັນ, ສໍາເລັດການກວດກາຄືນ ບັນຊີສະຖິຕິລົດລັດ ຢູ່ 40 ພາກສ່ວນໃນຂັ້ນສູນກາງ ແລະ ໄດ້ຕິດແຜ່ນກາໝາຍການນໍາໃຊ້ລົດລັດແລະ QR code ສໍາເລັດ 39 ພາກສ່ວນ, 14 ແຂວງ; 3. ໄດ້ສ້າງແຜນແກ້ໄຂໜີ້ສິນສາທາລະນະໃນແຕ່ລະໄລຍະ ເພື່ອຮັບປະກັນແຫຼ່ງທຶນທີ່ໝັ້ນຄົງຕາມກົດໝາຍການຄຸ້ມຄອງໜີ້ສິນສາທາລະນະ, ໄດ້ລະດົມແຫຼ່ງທຶນ ແລະ ແຫຼ່ງລາຍຮັບທັງພາຍໃນ ແລະ ຕ່າງປະເທດ ເພື່ອມາຊໍາລະຕົ້ນທຶນ ແລະ ດອກເບ້ຍດ້ວຍຮູບແບບຕ່າງໆ.

ໃນການສ້າງສະຖຽນລະພາບດ້ານເງິນຕາ. 1. ສົ່ງເສີມການເຂົ້າເຖິງແຫຼ່ງທຶນ ເພື່ອຊຸກຍູ້ການຜະລິດພາຍໃນ ແລະ ຫຼຸດຜ່ອນລະດັບການຂາດດຸນກັບຕ່າງປະເທດ ດ້ວຍຫຼາຍຮູບແບບເປັນຕົ້ນ ໂຄງການສິນເຊື່ອສົ່ງເສີມ SMEs ຜ່ານ 4 ທະນາຄານທຸລະກິດ ເຊິ່ງຮອດເດືອນ ມີນາ 2023 ສາມາດປ່ອຍກູ້ໃຫ້ລູກຄ້າ ໃນມູນຄ່າ 391,65 ຕື້ກີບ ກວມເອົາ 82,63% ຂອງທຶນທັງໝົດ; 2. ໄດ້ສຸມໃສ່ແກ້ໄຂສະພາບຄ່າເງິນກີບ, ສ້າງຄັງສຳຮອງເງິນຕາຕ່າງປະເທດ ແລະ ຄວບຄຸມອັດຕາເງິນເຟີ້ ໂດຍໄດ້ປັບເພີ່ມອັດຕາດອກເບ້ຍພື້ນຖານ ຂອງ ທຫລ ສະກຸນເງິນກີບ ແລະ ເງິນຕາຕ່າງປະເທດ; ປະຕິບັດນະໂຍບາຍອັດຕາແລກປ່ຽນແບບຍືດຍຸ່ນກວ່າເກົ່າ.

ຍົກສູງປະສິດທິພາບການຄຸ້ມຄອງລັດ-ຄຸ້ມຄອງສັງຄົມ ດ້ວຍກົດໝາຍໃຫ້ມີຜົນສັກສິດ. ໄດ້ຊຸກຍູ້ການປະຕິຮູບການບໍລິຫານ ແລະ ດຳເນີນທຸລະກິດ ຂອງ 5 ລັດວິສາຫະກິດຍຸດທະສາດເຊັ່ນ: ລັດວິສາຫະກິດໄຟຟ້າລາວ, ລັດວິສາຫະກິດການບິນລາວ, ລັດວິສາຫະກິດນ້ຳມັນເຊື້ອໄຟລາວ; ລັດວິສາຫະກິດພັດທະນາກະສິກຳ, ອຸດສາຫະກຳ ແລະ ການບໍລິການຂາອອກ-ຂາເຂົ້າ; ສຳເລັດການປະຕິຮູບ 2 ທະນາຄານທຸລະກິດລັດ (ທະນາຄານພັດທະນາລາວ ແລະ ທະນາຄານສົ່ງເສີມກະສິກຳ ຂາຍຫຸ້ນຂອງລັດອອກ 70% ໃຫ້ເອກະຊົນພາຍໃນ ແລະ ຮັກສາຫຸ້ນ ຂອງລັດໄວ້ 30% ເຊິ່ງໄດ້ສຳເລັດໂດຍພື້ນຖານ.

ໃນປີ 2023 ລະດັບຄວາມພຽງພໍຂອງທຶນ (CAR) ຢູ່ໃນລະດັບ 19,10% (ຄາດໝາຍວາລະແຫ່ງຊາດ: ສູງກວ່າ 8%); ອັດຕາສ່ວນຜົນຕອບແທນຕໍ່ຊັບສິນ (ROA) ຂອງທະນາຄານທຸລະກິດທົ່ວລະບົບ ສະເລ່ຍຢູ່ໃນລະດັບ 0,88% (ຄາດໝາຍວາລະແຫ່ງຊາດ: ສູງກວ່າ 0,28%); ອັດຕາສ່ວນຜົນຕອບແທນຈາກທຶນ (ROE) ຂອງທະນາຄານທຸລະກິດທົ່ວລະບົບ ສະເລ່ຍຢູ່ໃນລະດັບ 10,95% (ຄາດໝາຍວາລະແຫ່ງຊາດ: ສູງກວ່າ 6,4%) .

ໄດ້ຮັບຮອງກົດໝາຍທີ່ຕິດພັນກັບ 2 ວາລະແຫ່ງຊາດ ມີທັງໝົດ 15 ສະບັບ, ໃນນັ້ນ 11 ສະບັບຕິດພັນກັບການແກ້ໄຂຄວາມຫຍຸ້ງຍາກດ້ານເສດຖະກິດ-ການເງິນ. ສະເພາະປີ 2022 ສຳເລັດການສ້າງ ແລະ ປັບປຸງທັງໝົດ 7 ສະບັບ ແລະ ຍັງສືບຕໍ່ປັບປຸງຕື່ມ ເຊັ່ນ: ກົດໝາຍວ່າດ້ວຍສົ່ງເສີມການລົງທຶນ, ກົດໝາຍ ວ່າດ້ວຍອາກອນທີ່ດິນ, ກົດໝາຍວ່າ ດ້ວຍອາກອນສິ່ງແວດລ້ອມ ແລະ ອື່ນໆ; ໄດ້ປັບປຸງນິຕິກຳຫຼາຍສະບັບໃນຂະແໜງການເງິນ ເຊິ່ງປະກອບມີ: ກົດໝາຍ ວ່າດ້ວຍການຄຸ້ມຄອງສ່ວຍສາອາກອນ, ອາກອນມູນຄ່າເພີ່ມ, ອາກອນຊົມໃຊ້ ແລະ ອາກອນລາຍໄດ້; ກົດໝາຍ ວ່າດ້ວຍການປັບປຸງບາງມາດຕາ ຂອງກົດໝາຍ ວ່າດ້ວຍງົບປະມານແຫ່ງລັດ ແລະ ກົດໝາຍ ວ່າດ້ວຍຊັບສິນແຫ່ງລັດ (ສະບັບປັບປຸງ).

ຄຽງຄູ່ກັບດ້ານຕັ້ງໜ້າໃນການແກ້ໄຂບັນຫາຄວາມຫຍຸ້ງຍາກດ້ານເສດຖະກິດທີ່ກ່າວມາ ກໍ່ຍັງມີບາງບັນຫາຕັ້ງຂຶ້ນຈຳນວນໜຶ່ງເຊັ່ນ:

1). ການສົ່ງເສີມການຜະລິດເປັນສິນຄ້າ ຍັງບໍ່ທັນກາຍເປັນທ່າແຮງ ເພື່ອທົດແທນການນຳເຂົ້າ ແລະ ເປັນສິນຄ້າສົ່ງອອກ: ການຜັນຂະຫຍາຍສູ່ຕົວຈິງ ຂອງແຕ່ລະຂະແໜງການ ແລະ ທ້ອງຖິ່ນ ໃນການຊຸກຍູ້ການ ຜະລິດພາຍໃນ ຍັງບໍ່ທັນເຂົ້າສູ່ລວງເລິກ, ກົນໄກການຈັດຕັ້ງປະຕິບັດຍັງບໍ່ທັນກຳນົດລະອຽດ ໂດຍສະເພາະຕິດພັນກັບນະໂຍບາຍ ແລະ ມາດຕະການຫຼຸດຜ່ອນການນຳເຂົ້າສິນຄ້າ ຍັງບໍ່ໄປໃນທິດທາງດຽວກັນ; ການໂຄສະນາເຜີຍແຜ່ຂໍ້ມູນຂ່າວສານ ເພື່ອສົ່ງເສີມການຜະລິດ ແລະ ຊົມໃຊ້ສິນຄ້າພາຍໃນ ຍັງບໍ່ທັນພົ້ນເດັ່ນ ແລະ ການສະໜອງສິນເຊື່ອໃຫ້ແກ່ຜູ້ຜະລິດພາຍໃນທີ່ເປັນທ່າແຮງຍັງບໍ່ທັນທົ່ວເຖິງ.

2). ລະບົບການເກັບລາຍຮັບງົບປະມານ ຍັງບໍ່

ທັນເຂັ້ມແຂງ, ບໍ່ທັນສະໄໝ ແລະ ມີການຮົ່ວໄຫຼ, ຖານລາຍຮັບຈຳນວນໜຶ່ງ ຍັງມີການຍົກເວັ້ນ, ການນຳໃຊ້ງົບປະມານຂອງລັດ ຍັງມີການຟຸມເຟືອຍ ແລະ ຮົ່ວໄຫຼຫຼາຍ, ການປະຕິບັດວິໄນແຜນການ ແລະ ວິໄນການເງິນ ຍັງບໍ່ທັນເຂັ້ມງວດ ພາໃຫ້ເກີດມີໜີ້ສິນຄຸມເຄືອແກ່ຍາວ ແລະ ຂາດຄວາມໂປ່ງໃສ, ການຂະຫຍາຍຖານລາຍຮັບທີ່ໝັ້ນຄົງ ແລະ ເປັນຖານລາຍຮັບຫຼັກຂອງປະເທດ ຍັງບໍ່ທັນປະກົດເຫັນຊັດເຈນ ເປັນຕົ້ນ ລາຍຮັບຈາກ: ທີ່ດິນ, ຊັບສິນ; ການອັດຂອດຮົ່ວໄຫຼຕ່າງໆ ຍັງມີຊ່ອງຫວ່າງ, ການຫັນເປັນທັນສະໄໝໃນການເກັບລາຍຮັບ ແລະ ຄຸ້ມຄອງລາຍຈ່າຍຍັງບໍ່ເປັນລະບົບ, ການເກັບລາຍຮັບກະແຈກກະຈາຍບໍ່ລວມສູນ, ການປະຕິບັດມາດຕະການຕໍ່ຜູ້ບໍ່ມອບພັນທະຈາກໂຄງການຍັງບໍ່ເດັດຂາດ.

3). ການສົ່ງເສີມການປະຢັດ ແລະ ມາດຕະການຕ້ານການຟຸມເຟືອຍຍັງບໍ່ທັນເຂັ້ມງວດ, ການຕັດສິນ ໃຈປະຢັດລາຍຈ່າຍງົບປະມານ ຂອງບາງຂະແໜງການ ແລະ ທ້ອງຖິ່ນຍັງບໍ່ທັນເຮັດໄດ້ດີ, ການປະຕິບັດດຳລັດວ່າດ້ວຍລົດຂອງລັດ (ເລກທີ 599/ລບ) ຍັງມີບາງຂະແໜງການ ແລະ ຫຼາຍທ້ອງຖິ່ນ ບໍ່ທັນສຳເລັດການຂຶ້ນທະບຽນຄຸ້ມຄອງ ແລະ ຕິດແຜ່ນກາໝາຍການນຳໃຊ້ລົດລັດ.

4). ການແກ້ໄຂສະຖຽນລະພາບທາງດ້ານການເງິນ ແລະ ອັດຕາແລກປ່ຽນຍັງບໍ່ທັນສາມາດແກ້ໄດ້ຢ່າງແຂງແຮງ, ຂາດສະພາບການຄຸ້ມຄອງດ້ານເງິນຕາຕ່າງປະເທດ, ອັດຕາເງິນເຟີ້ຍັງຢູ່ໃນລະດັບສູງ, ການຄຸ້ມຄອງເງິນຕາ ແຕ່ລະພາກສ່ວນຍັງບໍ່ກົມກຽວກັນ ແລະ ຈັນຍາບັນໃນການຄຸ້ມຄອງເງິນຕາ ຂອງພະນັກງານທີ່ກ່ຽວຂ້ອງຈຳນວນໜຶ່ງຍັງບໍ່ທັນເລີກເຊົາ.

5). ການຄຸ້ມຄອງລັດດ້ານເສດຖະກິດ ຍັງບໍ່ທັນເຂັ້ມແຂງ: ການປັບປຸງໂຄງສ້າງວິສາຫະກິດຂອງລັດຍັງຊັກຊ້າ, ຍັງບໍ່ທັນສ້າງໄດ້ການຫັນປ່ຽນຢ່າງຈະແຈ້ງ, ຄຸນນະພາບການບໍລິຫານ ແລະ ປະສິດທິຜົນການດຳເນີນທຸລະກິດຂອງລັດວິສາຫະກິດຍັງບໍ່ສູງ, ວິສາຫະກິດຂອງລັດບໍ່ທັນເຂັ້ມແຂງ ແລະ ບໍ່ທັນສາມາດເປັນເຈົ້າພາທາງໄດ້.

ເພື່ອເຮັດໃຫ້ການແກ້ໄຂຄວາມຫຍຸ້ງຍາກທາງດ້ານເສດຖະກິດ-ການເງິນ ສືບຕໍ່ຈັດຕັ້ງປະຕິບັດໃຫ້ດີຂຶ້ນກວ່າເກົ່າ ແລະ ມີປະສິດທິພາບສູງ ບັນລຸຕາມຄາດໝາຍທີ່ກຳນົດໄວ້ ຄວນເອົາໃຈໃສ່ບາງວິທີການ ແລະ ມາດຕະການແກ້ໄຂໃນຕໍ່ໜ້າດັ່ງນີ້:

1. ສົ່ງເສີມການຜະລິດເພື່ອທົດແທນການນຳເຂົ້າໃຫ້ມີຄວາມເຂັ້ມແຂງ: ຊຸກຍູ້ການຄົ້ນຄວ້າຍຸດທະສາດພັດທະນາກະສິກຳ ເພື່ອຊອກຫາເຕັກນິກ-ເຕັກໂນໂລຊີ ສຳລັບການຜະລິດກະສິກຳ ແລະ ປ່າໄມ້, ຄົ້ນຄວ້າແນວພັນ ແລະ ເຕັກໂນໂລຊີ ເພື່ອຍົກສະມັດຕະພາບ ຂອງການຜະລິດໃຫ້ສູງຂຶ້ນ; ຍູ້ແຮງການຜະລິດຕິດພັນກັບການປຸງແຕ່ງ ແລະ ຕະຫຼາດ ຕາມທ່າແຮງໄດ້ປຽບຂອງທ້ອງຖິ່ນ, ການຜະລິດຈັດຕັ້ງເປັນກຸ່ມ, ຜະລິດເປັນຟາມ; ສ້າງເງື່ອນໄຂ ແລະ ໂອກາດໃຫ້ຊາວກະສິກອນ ໄດ້ຮຽນຮູ້-ນຳໃຊ້ວິທະຍາສາດເຕັກໂນໂລຊີໃໝ່, ຫັນເປັນກົນຈັກເຂົ້າສູ່ການຜະລິດ, ພັດທະນາແນວພັນພືດ-ແນວພັນສັດ, ເຕັກນິກການປູກ, ລ້ຽງ ແລະ ການເກັບຮັກສາ. ພ້ອມທັງນຳໃຊ້ທຶນ ແລະ ເຕັກນິກ ຂອງຕ່າງປະເທດ ເພື່ອລົງທຶນໃສ່ກະສິກຳ, ປະຕິບັດການບໍລິການສອງສົ້ນໃຫ້ແກ່ຊາວກະສິກອນໃຫ້ດີ.

2. ສ້າງຄວາມເຂັ້ມແຂງທາງດ້ານເກັບລາຍຮັບງົບປະມານຂອງລັດ: ຕ້ອງເອົາໃຈໃສ່ຈັດຕັ້ງຜັນຂະຫຍາຍຕໍ່ການປະຕິຮູບກົນໄກການຄຸ້ມຄອງເກັບລາຍຮັບ ຕາມທິດຄຳສັ່ງ ເລກທີ 18/ນຍ, ລົງວັນທີ 16 ກັນຍາ 2021 ວ່າດ້ວຍການເພີ່ມທະວີຄຸ້ມຄອງ ແລະ ຕ້ານການຮົ່ວໄຫຼລາຍຮັບ ງົບປະມານ, ນຳໃຊ້ເຄື່ອງມືທີ່ທັນສະໄໝ ເຂົ້າໃນການຄຸ້ມຄອງເກັບລາຍຮັບໃຫ້ລວມສູນ, ຖືກຕ້ອງ ແລະ ສາມາດກວດກາໄດ້. ເລັ່ງຂະຫຍາຍຖານຈັດເກັບລາຍຮັບຜ່ານລະບົບ ແລະ ເຄື່ອງມືທັນສະໄໝ ໃຫ້ຫຼາຍກວ່າເກົ່າ,

ເລັ່ງເຊື່ອມຖານຂໍ້ມູນກັບຂະແໜງການເສດຖະກິດ ເພື່ອຄຸ້ມຄອງແຫຼ່ງລາຍຮັບ; ເລັ່ງປັບປຸງກົນໄກ ແລະ ເງື່ອນໄຂໃນການເກັບຖານ ລາຍຮັບທີ່ໝັ້ນຄົງເຊັ່ນ: ອາກອນທີ່ດິນ, ອາກອນຊັບສິນ. ນອກຈາກນັ້ນ, ປະເມີນຄືນບັນດາໂຄງການທົດລອງຂຸດຄົ້ນແຮ່ທາດ, ພ້ອມທັງເລັ່ງທວງລາຍຮັບທີ່ໂຄງການຍັງຄ້າງຊໍາລະ.

3. ສົ່ງເສີມການປະຢັດ ແລະ ມາດຕະການຕ້ານການຟຸ່ມເຟືອຍ: ໃນສະພາບແວດລ້ອມງົບປະມານແຫ່ງລັດຍັງຂາດດູນຢ່າງຕໍ່ເນື່ອງ, ການຈັດຕັ້ງປະຕິບັດສົ່ງເສີມການປະຢັດ ແລະ ມາດຕະການຕ້ານການຟຸມເຟືອຍ ຕາມດໍາລັດນາຍົກລັດຖະມົນຕີ ກ່ຽວກັບນະໂຍບາຍປະຢັດແຫ່ງຊາດ ແມ່ນມີຄວາມຖືກຕ້ອງ ແລະ ສອດຄ່ອງທີ່ສຸດ, ຕ້ອງໄດ້ນໍາໃຊ້ງົບປະມານທີ່ມີຈໍາກັດໃຫ້ເກີດປະໂຫຍດສູງສຸດ; ຕ້ອງຈັດຕັ້ງຜັນຂະຫຍາຍຄໍາສັ່ງວ່າດ້ວຍການເພີ່ມທະວີການຄຸ້ມຄອງ ແລະ ຕ້ານການຮົ່ວໄຫຼ ຂອງລາຍຮັບງົບປະມານ, ສະບັບເລກທີ 18/ນຍ, ລົງວັນທີ 16 ກັນຍາ 2021; ນໍາໃຊ້ເຄື່ອງມືທັນສະໄໝເຂົ້າໃນການຄຸ້ມຄອງເກັບລາຍຮັບໃນທົ່ວປະເທດ ເພື່ອຮັບປະກັນລາຍຮັບໃຫ້ລວມສູນ, ບັບປຸງລະບົບຄຸ້ມຄອງການເກັບພາສີທີ່ດິນ ແລະ ຄ່າທໍານຽມທາງ, ສຸມໃສ່ເກັບກໍາຂໍ້ມູນ ແລະ ຂຸດຄົ້ນແຫຼ່ງລາຍຮັບທີ່ບົ່ມຊ້ອນໂດຍສະເພາະທຸລະກິດຂະແໜງພະລັງງານ ແລະ ບໍ່ແຮ່, ຂະແໜງການບໍລິການ ແລະ ທ່ອງທ່ຽວ, ຫົວໜ່ວຍທຸລະກິດຕ່າງໆ.

4. ສ້າງສະຖຽນລະພາບທາງດ້ານການເງິນ ແລະ ເງິນຕາຕ່າງປະເທດ: ເຜີຍແຜ່ຜົນເສຍ ຂອງການນໍາໃຊ້ເງິນຕາຕ່າງປະເທດຫຼາຍສະກຸນ ຢູ່ພາຍໃນປະເທດໃຫ້ທຸກກຸ່ມເປົ້າໝາຍ, ຕ້ອງສົ່ງເສີມການນໍາໃຊ້ເງິນກີບ ເປັນຕົ້ນການຮ້ອງ ແລະ ເກັບຄ່າທໍານຽມຕ່າງໆ ພາຍໃນປະເທດໃຫ້ເປັນເງິນກີບ, ທະນາຄານແຫ່ງ ສປປ ລາວ ຕ້ອງເປັນເຈົ້າການຍົກສູງຄຸນຄ່າຂອງເງິນກີບ, ນໍາໃຊ້ເຄື່ອງມືອັດຕາແລກປ່ຽນ ເປັນເຄື່ອງມືຫຼັກ ເຮັດໃຫ້ສັງຄົມມີຄວາມຕ້ອງການຊໍາລະ ແລະ ຖືຄອງເງິນກີບຫຼາຍຂຶ້ນ, ຕິດຕາມກວດກາການລົງໂຄສະນະສິນຄ້າ, ການກໍານົດລາຄາ ແລະ ບໍລິການຕ້ອງໃຫ້ເປັນເງິນກີບ, ອົງການບໍລິຫານລັດ ຕ້ອງເປັນແບບຢ່າງໃນການນໍາໃຊ້ເງິນກີບ ແລະ ຕ້ອງມີມາດຕະການເດັດຂາດຕໍ່ຜູ້ລະເມີດ ຫຼື ສ້າງຄວາມເສຍຫາຍຕໍ່ລະບົບການເງິນ, ເງິນຕາຕ່າງປະເທດ.

5. ຍົກສູງປະສິດທິພາບໃນການຄຸ້ມຄອງລັດດ້ານເສດຖະກິດ: ຍູ້ແຮງການປ່ຽນແປງໃໝ່ຮອບດ້ານ ແບບແຜນການຄຸ້ມຄອງລັດ ດ້ານເສດຖະກິດ, ປະຕິຮູບກົນໄກເສດຖະກິດ, ປະຕິຮູບສະພາບແວດລ້ອມການດໍາເນີນທຸລະກິດ, ເພີ່ມທະວີຄວາມສັກສິດໃນການປະຕິບັດກົດໝາຍ, ຫຼຸດຜ່ອນບົດບາດໃນການດໍາເນີນທຸລະກິດ ແລະ ລົງທຶນໂດຍກົງ ຂອງລັດ ເພື່ອເຮັດໃຫ້ການຍົກສູງປະສິດທິພາບໃນການຄຸ້ມຄອງລັດ ໄດ້ຮັບໝາກຜົນດີ, ຍົກສູງປະສິດທິພາບ ແລະ ປະສິດທິຜົນ ຂອງການຄຸ້ມຄອງລັດດ້ານເສດຖະກິດ ດ້ວຍເຄື່ອງມືຄຸ້ມຄອງ ລັດແຫ່ງກົດໝາຍທີ່ສັກສິດ, ເຂັ້ມແຂງ, ໜັກແໜ້ນ, ໂປ່ງໃສ ແລະ ຍຸຕິທໍາ. ບັນດາອົງການຈັດຕັ້ງທີ່ເຮັດໜ້າທີ່ຄຸ້ມຄອງລັດຕໍ່ການແກ້ໄຂຄວາມຫຍຸ້ງຍາກດ້ານເສດຖະກິດ ຕ້ອງຍົກສູງຄວາມຮັບຜິດຊອບ ປະກອບສ່ວນຕັ້ງໜ້າເຂົ້າໃນວຽກງານດັ່ງກ່າວ ຕາມພາລະບົດບາດຂອງຕົນ.

ສັງລວມແລ້ວ ບັນຫາຄວາມຫຍຸ້ງຍາກທາງດ້ານເສດຖະກິດ-ການເງິນ ທີ່ເກີດຂຶ້ນຢູ່ປະເທດເຮົາ ສ່ວນໜຶ່ງແມ່ນຍ້ອນໄດ້ຮັບຜົນກະທົບມາຈາກພາຍນອກວິກິດການການເງິນໂລກ, ຂໍ້ຂັດແຍ້ງທາງການຄ້າຂອງບັນດາປະເທດມະຫາອໍານາດ ແລະ ບັນຫາສົງຄາມ... ສ່ວນໜຶ່ງກໍ່ມາຈາກພາຍໃນເອງ ເນື່ອງຈາກພື້ນຖານເສດຖະກິດຂອງປະເທດບໍ່ເຂັ້ມແຂງ, ການຂະຫຍາຍຕົວດ້ານເສດຖະກິດຍັງອາໄສການລົງທຶນຈາກຕ່າງປະເທດ ທີ່ເລັ່ງໃສ່ການນໍາໃຊ້ຊັບພະຍາກອນທໍາມະຊາດ, ສິນຄ້າອຸປະໂພກ-ບໍລິໂພກສ່ວນໃຫຍ່ແມ່ນນໍາເຂົ້າ; ຂາດດູນງົບປະມານ ໃນລະ

ດັບສູງຕໍ່ເນື່ອງ; ໜີ້ສິນສາທາລະນະຍັງບໍ່ທັນສາມາດແກ້ໄຂໄດ້; ຄັງສໍາຮອງເງິນຕາຕ່າງປະເທດມີຈໍາກັດ. ສະນັ້ນ, ການແກ້ໄຂບັນຫາດັ່ງກ່າວແມ່ນຄວາມຮັບຜິດຊອບຂອງທຸກພາກສ່ວນ ຕ້ອງເປັນເຈົ້າການຢ່າງຕັ້ງໜ້າໃນການປະກອບສ່ວນຈັດຕັ້ງປະຕິບັດວາລະແຫ່ງຊາດ ວ່າດ້ວຍການແກ້ໄຂຄວາມຫຍຸ້ງຍາກທາງດ້ານເສດຖະກິດ-ການເງິນໃຫ້ມີຜົນສໍາເລັດໃນແຕ່ລະດ້ານທີ່ກໍານົດໄວ້ເປັນຕົ້ນ ໄດ້ເຮັດໃຫ້ເສດຖະກິດມະຫາພາກມີສະຖຽນລະພາບ; ການຜະລິດກະສິກໍາຫຼາຍດ້ານໄດ້ຮັບການປັບປຸງດີຂຶ້ນ; ສາມາດຜະລິດທົດແທນການນໍາເຂົ້າສິນຄ້າປະເພດພືດຈໍານວນໜຶ່ງໄດ້; ການເກັບລາຍຮັບພາສີ-ອາກອນ, ຄ່າທໍານຽມຕ່າງໆ ໄດ້ຫັນເຂົ້າສູ່ລະບົບທັນສະໄໝເພີ່ມຂຶ້ນ; ການຄຸ້ມຄອງລາຍຈ່າຍໄດ້ຫັນເຂົ້າສູ່ການປະຢັດ, ມີຄວາມໂປ່ງໃສຫຼາຍຂຶ້ນ; ການຄຸ້ມຄອງເງິນຕາ, ການແກ້ໄຂໜີ້ສາທາລະນະ ແລະ ບັນຫາອັດຕາເງິນເຟີ້ຕ້ອງໄດ້ຮັບການແກ້ໄຂ ເພື່ອກ້າວໄປເຖິງການສ້າງປັດໄຈພື້ນຖານທີ່ສໍາຄັນໃຫ້ແກ່ການພັດທະນາ ແລະ ການແກ້ໄຂບັນຫາຄວາມຫຍຸ້ງຍາກທາງດ້ານເສດຖະກິດ-ການເງິນ, ນໍາພາປະເທດຊາດຫຼຸດພົ້ນອອກຈາກວິກິດການຄວາມຫຍຸ້ງຍາກທີ່ກໍາລັງປະເຊີນຢູ່ໃຫ້ຕົກໄປເທື່ອລະກ້າວເຮັດໃຫ້ປະເທດຊາດມີຄວາມເຂັ້ມແຂງ ສາມາດກ້າວເດີນຕາມເສັ້ນທາງສັງຄົມນິຍົມຢ່າງໜັກແໜ້ນ...ຯ

ການພັດທະນາບຸກຄະລາກອນ ຢູ່ຄະນະ...

ຕໍ່ຈາກໜ້າ 24

ເພື່ອຍາດແຍ່ງເອົາການຊ່ວຍເຫຼືອດ້ານທຶນຮອນ, ຄວາມຮູ້ວິທະຍາສາດ, ເຕັກໂນໂລຊີທີ່ທັນສະໄໝ, ແລກປ່ຽນຖອດຖອນບົດຮຽນ, ຄວາມຮູ້ວິຊາການໃນດ້ານຕ່າງໆ ທຶນການສຶກສາ ເພື່ອໃຫ້ພະນັກງານໄດ້ມີໂອກາດຍົກລະດັບດ້ານວິຊາສະເພາະ ກໍຄືດ້ານອື່ນໆ.

ສັງລວມແລ້ວ ການພັດທະນາບຸກຄະລາກອນຢູ່ຄະນະຈັດຕັ້ງແຂວງຊຽງຂວາງໃນໄລຍະໃໝ່ ແມ່ນວຽກງານຍຸດທະສາດທີ່ມີຄວາມຈໍາເປັນພາວະວິໄສທີ່ຄະນະພັກ, ຄະນະນໍາ ຄວນເອົາໃຈໃສ່ ເປັນບຸລິມະສິດພິເສດ ເພື່ອເຮັດໃຫ້ພະນັກງານຂະແໜງວິຊາການຕ່າງໆມີຄວາມເຂັ້ມແຂງ ເຊິ່ງຕິດພັນໂດຍກົງກັບບົດບາດ, ຄວາມສາມາດນໍາພາຂອງຄະນະພັກ, ຖ້າມີພະນັກງານເກັ່ງທັງພຽບພ້ອມໄປດ້ວຍຄຸນທາດການເມືອງໜັກແໜ້ນ, ຄຸນສົມບັດສິນທໍາປະຕິວັດດີຈະເຮັດໃຫ້ບົດບາດ, ຄວາມສາມາດນໍາພາກໍ່ຄືການຈັດຕັ້ງປະຕິບັດໜ້າທີ່ວຽກງານມີປະສິດທິພາບ ແລະ ມີປະສິດທິຜົນສູງຂຶ້ນ. ສະນັ້ນການບໍາລຸງ-ກໍ່ສ້າງພະນັກງານ ຈຶ່ງແມ່ນໜ້າທີ່ ແລະ ຄວາມຮັບຜິດຊອບໂດຍກົງຂອງຄະນະພັກ, ຄະນະຈັດຕັ້ງແຂວງ ທີ່ຕ້ອງເອົາໃຈໃສ່ສຶກສາອົບຮົມການເມືອງ-ແນວຄິດ, ສ້າງໂອກາດ ແລະ ຊຸກຍູ້ສົ່ງເສີມໃຫ້ພະນັກງານໄດ້ຮັບການຍົກລະດັບຄວາມຮູ້-ຄວາມສາມາດ ດ້ານວິຊາສະເພາະ, ວິທະຍາສາດ-ເຕັກໂນໂລຊີ ແລະ ພາສາຕ່າງປະເທດໃຫ້ມີຄວາມຄ່ອງແຄ້ວ, ຊໍານິ ຊໍານານ ກາຍເປັນພະນັກງານສືບທອດປ່ຽນແທນທີ່ດີເດັ່ນ ແລະ ມີຄຸນນະພາບ ສາມາດຕອບສະໜອງໜ້າທີ່ວຽກງານໃນສະເພາະໜ້າ ແລະ ຍາວນານ...ຯ

ບາງທັດສະນະກ່ຽວກັບການກໍ່ສ້າງ ໜ່ວຍພັກປອດໃສ, ເຂັ້ມແຂງ, ໜັກແໜ້ນ

ໂດຍ: ສົມບັດ ຈະເລີນສຸກ

ໃນກົດລະບຽບພັກ ປປ ລາວ ສະໄໝທີ XI ໄດ້ລະບຸໄວ້ວ່າ: "ພັກປະຊາຊົນປະຕິວັດລາວ ແມ່ນກອງນຳໜ້າທີ່ມີການຈັດຕັ້ງ, ແມ່ນການຈັດຕັ້ງການເມືອງສູງສຸດຂອງຊົນຊັ້ນກຳມະກອນ ແລະ ຂອງລະບອບປະຊາທິປະໄຕປະຊາຊົນລາວ, ເປັນຕົວແທນທີ່ຈິງຮັກພັກດີຢ່າງສະເໝີຕົ້ນສະເໝີປາຍ ຕໍ່ສິດ ແລະ ຜົນປະໂຫຍດຂອງຊົນຊັ້ນກຳມະກອນ, ຊາວຜູ້ອອກແຮງງານລາວບັນດາເຜົ່າ ແລະ ຊາດລາວທັງໝົດ; ຈຸດປະສົງຂອງພັກແມ່ນນຳພາປວງຊົນລາວທັງຊາດ ດຳເນີນພາລະກິດປ່ຽນແປງໃໝ່ຮອບດ້ານ ທີ່ມີຫຼັກການຂອງພັກ, ປົກປັກຮັກສາປະເທດຊາດໄວ້ໃຫ້ໝັ້ນຄົງ, ກໍ່ສ້າງລະບອບປະຊາທິປະໄຕໃຫ້ບັນລຸຕາມຈຸດໝາຍສັງຄົມນິຍົມ". ສະນັ້ນ, ເພື່ອເຮັດສຳເລັດໜ້າທີ່ການເມືອງດັ່ງກ່າວ ມັນຮຽກຮ້ອງໃຫ້ພັກຕ້ອງໄດ້ກໍ່ສ້າງ ແລະ ປັບປຸງຕົນເອງໃນແຕ່ລະໄລຍະ ໂດຍໄລຍະທຳອິດເລີ່ມຈາກການກໍ່ສ້າງຮາກຖານພັກ 3 ດີ 4 ໜ້າທີ່; ຕໍ່ມາຮອດປີ 1967 ກອງປະຊຸມຈັດຕັ້ງທົ່ວປະເທດ ຄັ້ງທີ I ໄດ້ຕົກລົງເປັນເອກະພາບປັບປຸງມາເປັນການກໍ່ສ້າງໜ່ວຍພັກ 4 ຮູ້; ຕໍ່ມາປີ 1978 ກອງປະຊຸມຈັດຕັ້ງທົ່ວປະເທດ ຄັ້ງທີ IV ໄດ້ປັບປຸງມາເປັນການກໍ່ສ້າງໜ່ວຍພັກຮູ້ນຳພາຮອບດ້ານ ຕາມ 6 ໜ້າທີ່ຂອງສະມາຊິກພັກ ຕາມກົດລະບຽບພັກ ສະໄໝທີ III; ປີ 1984 ກອງປະຊຸມຈັດຕັ້ງທົ່ວປະເທດ ຄັ້ງທີ VI ໄດ້ປັບປຸງມາເປັນການກໍ່ສ້າງໜ່ວຍພັກເຂັ້ມແຂງຮອບດ້ານ ຕາມ 6 ໜ້າທີ່ ຂອງສະມາຊິກພັກ; ປີ 1993 ກອງປະຊຸມຕົວແທນໜ່ວຍພັກທົ່ວປະເທດ ໄດ້ປັບປຸງມາເປັນການກໍ່ສ້າງໜ່ວຍພັກເຂັ້ມແຂງ-ຮູ້ນຳພາຮອບດ້ານ ຕາມ 5 ເນື້ອໃນ; ປະຕິບັດຕາມມະຕິກອງປະຊຸມຕົວແທນໜ່ວຍພັກທົ່ວປະເທດ, ກົມການເມືອງສູນກາງພັກ ໄດ້ອອກຄຳສັ່ງ ສະບັບເລກທີ 11, ລົງວັນທີ 17 ສິງຫາ 1996 ວ່າດ້ວຍການເພີ່ມທະວີການນຳພາຂອງຄະນະພັກຂັ້ນຕ່າງໆ ໃນການປັບປຸງ-ກໍ່ສ້າງຮາກຖານພັກ ໃຫ້ເຂັ້ມແຂງ-ຮູ້ນຳພາຮອບດ້ານ ຕາມ 05 ເນື້ອໃນ ແລະ ໄດ້ອອກຂໍ້ກຳນົດ ຂອງກົມການເມືອງສູນກາງພັກ ສະບັບເລກທີ 03, ລົງວັນທີ 13 ສິງຫາ 2004 ກ່ຽວກັບມາດຖານການປັບປຸງ, ກໍ່ສ້າງໜ່ວຍພັກເຂັ້ມແຂງ-ຮູ້ນຳພາຮອບດ້ານ, ອອກເປັນ 02 ມາດຖານ: ສ້າງໜ່ວຍພັກໃຫ້ເຂັ້ມແຂງທັງ 04 ດ້ານ ແລະ ສ້າງໜ່ວຍພັກໃຫ້ຮູ້ນຳພາຮອບດ້ານ ຕາມ 5 ເນື້ອໃນ; ປີ 2018 ຮອດປະຈຸບັນ ທົ່ວພັກພວມກຳລັງຈັດຕັ້ງຜັນຂະຫຍາຍ ຄຳສັ່ງ ຂອງກົມການເມືອງສູນກາງພັກ ສະບັບເລກທີ 01 ລົງວັນທີ 03 ມັງກອນ 2018 ວ່າດ້ວຍການເພີ່ມທະວີການກໍ່ສ້າງໜ່ວຍພັກປອດໃສ, ເຂັ້ມແຂງ, ໜັກແໜ້ນ ຕາມ 5 ເນື້ອໃນບົນພື້ນຖານຕາມ 5 ຫຼັກການ ແລະ 3 ທິດນຳຂອງພັກ.

ຜ່ານການຈັດຕັ້ງປະຕິບັດ ເຮັດໃຫ້ໜ່ວຍພັກ ແລະ ສະມາຊິກພັກ ມີຄວາມເຕີບໃຫຍ່ຂະຫຍາຍຕົວທາງດ້ານຈຳນວນ ແລະ ຄຸນນະພາບ, ໜ່ວຍພັກ, ສະມາຊິກພັກຢູ່ຫຼາຍບ່ອນ ໄດ້ພະຍາຍາມຍົກສູງຄວາມສາມາດນຳພາຂອງຕົນສູງຂຶ້ນ. ໜ່ວຍພັກບ້ານໄດ້ຮູ້ນຳພາປະຊາຊົນພັດທະນາບ້ານຊ່ອງຂອງຕົນ ປົວແປງ ແລະ ແກ້ໄຂຊີວິດການເປັນຢູ່ໃຫ້ດີຂຶ້ນ, ໜ່ວຍພັກສຳນັກງານ-ອົງ

ການ, ກົມກອງ ໄດ້ມີການຫັນປ່ຽນທີ່ຕັ້ງໜ້າ. ຄະນະພັກ, ຄະນະຈັດຕັ້ງແຕ່ລະຂັ້ນໄດ້ເອົາໃຈໃສ່ເຮັດໜ້າທີ່ຂອງຕົນຢ່າງຕັ້ງໜ້າໃນການຊຸກຍູ້ຕິດຕາມການປັບປຸງການຈັດຕັ້ງພັກໂດຍຕິດພັນກັບການປັບປຸງກົງຈັກລັດ ໃຫ້ມີຄວາມສອດຄ່ອງ, ເຄື່ອນໄຫວມີປະສິດທິພາບ ແລະ ປະສິດທິຜົນ; ສືບຕໍ່ສຸມໃສ່ການກໍ່ສ້າງໜ່ວຍພັກ ປອດໃສ, ເຂັ້ມແຂງ, ໜັກແໜ້ນ, ເອົາໃຈໃສ່ຈັດຕັ້ງປະຕິບັດຄໍາສັ່ງຂອງກົມການເມືອງສູນກາງພັກ ເລກທີ 01 ປີ 2018 ແລະ ຄໍາແນະນໍາຂອງຄະນະຈັດຕັ້ງສູນກາງພັກ ເລກທີ 291 ວ່າດ້ວຍການເພີ່ມທະວີການກໍ່ສ້າງໜ່ວຍພັກປອດໃສ, ເຂັ້ມແຂງ, ໜັກແໜ້ນ; ນໍາພາປັບປຸງການຈັດຕັ້ງຮາກຖານພັກ, ຊຸກຍູ້ບັນດາໜ່ວຍພັກ ສ້າງແຜນ, ປະເມີນຜົນ ແລະ ສະຫຼຸບຖອດຖອນບົດຮຽນກ່ຽວກັບການປະຕິບັດແຜນກໍ່ສ້າງໜ່ວຍພັກປອດໃສ, ເຂັ້ມແຂງ, ໜັກແໜ້ນ ເປັນປົກກະຕິ. ພ້ອມທັງ ສຸມໃສ່ການສ້າງແຜນການ, ຕິດຕາມ, ຊຸກຍູ້ການຈັດຕັ້ງປະຕິບັດແຜນ ແລະ ປະເມີນຜົນການກໍ່ສ້າງໜ່ວຍພັກປອດໃສ, ເຂັ້ມແຂງ, ໜັກແໜ້ນ ປະຈໍາປີ 2023, ໄດ້ສະຫຼຸບຖອດຖອນບົດຮຽນກ່ຽວກັບການປະຕິບັດ ເພື່ອສ້າງແຜນກໍ່ສ້າງໜ່ວຍພັກປອດໃສ, ເຂັ້ມແຂງ, ໜັກແໜ້ນ ປີ 2024, ສະແດງອອກໃນແຕ່ລະດ້ານຄື:

ດ້ານການເມືອງ: ຄະນະໜ່ວຍພັກ, ສະມາຊິກພັກມີຄວາມຮູ້ຢ່າງເລິກເຊິ່ງກ່ຽວກັບທິດສະດີມາກ-ເລນິນ ແລະ ແນວທາງ, ແຜນນະໂຍບາຍຂອງພັກ; ມີຄວາມເຊື່ອໝັ້ນ ຕໍ່ອຸດົມການສັງຄົມນິຍົມຢ່າງໜັກແໜ້ນ; ມີຫຼັກໝັ້ນມີດສັດຕູຈະແຈ້ງ ມີຄວາມຮັບຜິດຊອບສູງ ຕໍ່ໜ້າທີ່ວຽກງານທີ່ໄດ້ຮັບມອບໝາຍ; ເຄົາລົບ ແລະ ປະຕິບັດກົດລະບຽບຂອງພັກ, ກົດໝາຍ ແລະ ລະບຽບການຕ່າງໆຂອງລັດຢ່າງເຂັ້ມງວດ. ມີນໍ້າໃຈເສຍສະຫຼະເພື່ອຊາດ, ເພື່ອປະຊາຊົນຢ່າງແທ້ຈິງ; ມີຄວາມດຸໝັ່ນພາກພຽນ, ຊື່ສັດ, ປະຢັດ ແລະ ປອດໃສ; ມີລະບຽບວິໄນ ແລະ ເຄົາລົບກົດໝາຍ; ມີຄວາມສາມັກຄີເອື້ອເຟື້ອເພື່ອແຜ່; ມີນໍ້າໃຈຮັກຊາດອັນດູດດື່ມ; ມີຄວາມສຸພາບຮຽບຮ້ອຍ ມີນໍ້າໃຈປະຕິວັດ, ເຮັດແທ້ທໍາຈິງ; ມີຄວາມບຸກບືນຮໍ່າຮຽນ ແລະ ພັດທະນາຕົນເອງຢູ່ເລື້ອຍໆ.

ດ້ານແນວຄິດ: ຄະນະໜ່ວຍພັກ, ສະມາຊິກພັກມີຄວາມເປັນເອກະພາບຕໍ່ແນວທາງປ່ຽນແປງໃໝ່ຂອງພັກ, ເປັນເຈົ້າການປົກປ້ອງແນວທາງ, ອຸດົມການຂອງພັກ, ຕອບຕ້ານປະກົດການຫຍໍ້ທໍ້ຕ່າງໆທີ່ເກີດຂຶ້ນພາຍໃນໜ່ວຍພັກ ແລະ ສັງຄົມ, ມີຄວາມສາມັກຄີເປັນເອກະພາບພາຍໃນໜ່ວຍພັກ, ຕ້ານແນວຄິດຫຼາຍພັກ, ຫຼາຍເຄົ້າ, ຈຸ້ມເຈື້ອພັກພວກ ແລະ ກຸ່ມກ້ອນ; ຕ້ານພະຍາດອາຍາສິດ, ເອກະຊົນ, ແນວຄິດສວຍໂອກາດສໍ້ລາດບັງຫຼວງ, ສວຍໃຊ້ໜ້າທີ່ຕໍາແໜ່ງເພື່ອຫາຜົນປະໂຫຍດສ່ວນຕົວ; ມີສະຕິເຄົາລົບການຈັດຕັ້ງປະຕິບັດກົດລະບຽບຂອງພັກ, ກົດໝາຍຂອງລັດ, ລະບຽບການຕ່າງໆຂອງສໍານັກງານ-ອົງການ ແລະ ທ້ອງຖິ່ນຕົນຢ່າງເຂັ້ມງວດ, ເຂົ້າຮ່ວມຊີວິດການເມືອງຂອງໜ່ວຍພັກ, ສົ່ງເສີມການຕິຊົມຕົນເອງ, ຕິຊົມກັນພາຍໃນພັກ ເຊິ່ງເປັນກົດເກນແຫ່ງການຄົງຕົວ ແລະ ຂະຫຍາຍຕົວຂອງພັກ, ປະຕິບັດລະບອບ ເສຍເງິນສະຕິພັກໃຫ້ເປັນປົກກະຕິ.

ດ້ານແບບແຜນນໍາພາ ແລະ ວິທີເຮັດວຽກ: ຄະນະໜ່ວຍພັກ, ສະມາຊິກພັກໄດ້ຍຶດໝັ້ນ ແລະ ປະຕິບັດຫຼັກການລວມສູນປະຊາທິປະໄຕຢ່າງເຂັ້ມງວດ, ນໍາພາເປັນໝູ່ຄະນະ, ເວົ້າ ແລະ ປະຕິບັດຕາມມະຕິ, ບຸກຄົນຂຶ້ນກັບການຈັດຕັ້ງ, ມີການແບ່ງງານແບ່ງຄວາມຮັບຜິດຊອບໃຫ້ແທດເໝາະກັບຄວາມຮູ້, ຄວາມສາມາດ, ແທດຕົວຈິງຂອງແຕ່ລະສະຫາຍ, ຕັ້ງໜ້າເສີມຂະຫຍາຍປະຊາທິປະໄຕພາຍໃນພັກບົນພື້ນຖານແນວທາງ ແລະ ລະບຽບຂອງພັກ ທັງເປັນປັດໄຈສ້າງຄວາມສາມັກຄີເປັນເອກະພາບພາຍໃນພັກ, ເຮັດວຽກມີແຜນການໂຄງການ, ມີການຊຸກຍູ້ຕິດຕາມ, ກວດກາ, ສະຫຼຸບຖອນຖອດບົດຮຽນ ແລະ ສ່ອງແສງລາຍງານ ເປັນປົກກະຕິ.

ຄວາມຮັບຜິດຊອບໜ້າທີ່ການເມືອງ: ຄະນະໜ່ວຍພັກ, ສະມາຊິກພັກມີຄວາມຮັບຜິດຊອບ ໃນການປະຕິບັດໜ້າທີ່ວຽກງານທີ່ໄດ້ຮັບມອບໝາຍ, ຫ້າວຫັນ

ເປັນເຈົ້າການປະຕິບັດວຽກງານດ້ວຍຄວາມປະດິດສ້າງ, ມີຄວາມກ້າຫານຮັບຜິດຊອບຕໍ່ຜົນໄດ້ຜົນເສຍໃນການປະຕິບັດໜ້າທີ່ວຽກງານ, ບໍ່ເລືອກວຽກເລືອກງານທີ່ການຈັດຕັ້ງມອບໝາຍໃຫ້, ມີຄວາມຕັດສິນໃຈຜ່ານຜ່າອຸປະສັກນາໆປະການ, ເຮັດວຽກມີຜົນສຳເລັດ ແລະ ມີປະສິດທິຜົນສູງ.

ສະແດງອອກດ້ານຕົວເລກເຫັນວ່າ: ທົ່ວປະເທດມີ 36 ອົງຄະນະພັກກະຊວງ-ອົງການ, 18 ອົງຄະນະພັກແຂວງ-ນະຄອນຫຼວງ, ມີ 149 ອົງຄະນະພັກເມືອງ ແລະ ທຽບເທົ່າ, ມີການຈັດຕັ້ງຮາກຖານພັກທັງໝົດ 24.440 ຮາກຖານ, ໃນນີ້ມີຄະນະພັກຮາກຖານ 2.140 ຮາກຖານ, ມີ 9.775 ໜ່ວຍພັກຮາກຖານ, ມີ 12.525 ໜ່ວຍພັກຂຶ້ນກັບຄະນະພັກຮາກຖານ; ສະຖິຕິການປະເມີນໜ່ວຍພັກຈາກ 09 ອົງຄະນະພັກແຂວງ-ນະຄອນຫຼວງ, 12 ອົງຄະນະພັກກະຊວງ- ອົງການ ໃນນີ້ໄດ້ຮັບຮອງເປັນໜ່ວຍພັກປອດໃສ, ເຂັ້ມແຂງ, ໜັກແໜ້ນ ມີ 9.446 ໜ່ວຍ; ໜ່ວຍພັກແຂງ ມີ 886 ໜ່ວຍ, ໜ່ວຍພັກກາງ ມີ 1.484 ໜ່ວຍ; ໜ່ວຍພັກອ່ອນ 97 ໜ່ວຍ ແລະ ບໍ່ໄດ້ຈັດ ປະເພດ 894 ໜ່ວຍ. ທົ່ວປະເທດມີສະມາຊິກພັກທັງໝົດ 412.520 ສະຫາຍ, ຍິງ 112.009 ສະຫາຍ, ທຽບໃສ່ປີ 2022 ເພີ່ມຂຶ້ນ 8.006 ສະຫາຍ, ຍິງ 2.104 ສະຫາຍ. ໃນປີ 2023 ໄດ້ຮັບການລາຍງານຈາກ 21 ອົງຄະນະພັກ ທີ່ໄດ້ຕີລາຄາແບ່ງປະເພດສະມາຊິກພັກໃນນີ້: ປະເພດແຂງ 188.721 ສະຫາຍ, ຍິງ 51.672 ສະຫາຍ, ປະເພດກາງ 14.465 ສະຫາຍ, ຍິງ 3.219 ສະຫາຍ, ປະເພດອ່ອນ 256 ສະຫາຍ, ຍິງ 32 ສະຫາຍ, ປະເພດເສຍທາດ 16 ສະຫາຍ, ຍິງ 01 ສະຫາຍ, ບໍ່ໄດ້ຕີລາຄາແບ່ງປະເພດ 38.123 ສະຫາຍ, ຍິງ 10.713 ສະຫາຍ.

ຄຽງຄູ່ກັບຜົນສຳເລັດທີ່ຕັ້ງໜ້າໃນການປັບປຸງກໍ່ສ້າງພັກໃຫ້ມີຄວາມປອດໃສ, ເຂັ້ມແຂງ, ໜັກແໜ້ນຜ່ານມານັ້ນ ຍັງມີຂໍ້ຄົງຄ້າງຈຳນວນໜຶ່ງທີ່ຄະນະພັກ, ຄະນະຮັບຜິດຊອບແຕ່ລະຂັ້ນຕ້ອງໄດ້ສືບຕໍ່ປັບປຸງແກ້ໄຂດັ່ງນີ້:

1). ນິຕິກຳກ່ຽວກັບວຽກງານການຈັດຕັ້ງຮາກຖານພັກມີບາງດ້ານ, ບາງເນື້ອໃນບໍ່ທັນຮັດກຸມ, ບໍ່ທັນລະອຽດຈະແຈ້ງ, ບໍ່ທັນສອດຄ່ອງກັບສະພາບຕົວຈິງຂອງແຕ່ລະປະເພດຮາກຖານພັກໃນໄລຍະຜ່ານມາ;

2). ຄະນະພັກຈຳນວນໜຶ່ງຍັງບໍ່ທັນໃຫ້ຄວາມສຳຄັນເອົາໃຈໃສ່ຄົ້ນຄວ້າ, ເຊື່ອມຊຶມ, ກຳແໜ້ນ ແລະ ຜັນຂະຫຍາຍໃຫ້ສອດຄ່ອງກັບຮາກຖານພັກ ທີ່ຂຶ້ນກັບຄະນະພັກຂັ້ນຕົນ; ການລົງຕິດຕາມ, ກວດກາ, ຊຸກຍູ້ວຽກງານກໍ່ສ້າງ, ປັບປຸງການຈັດຕັ້ງຮາກຖານພັກບໍ່ທັນເຮັດເປັນປົກກະຕິ, ຕໍ່ເນື່ອງ; ຄະນະພັກຈຳນວນໜຶ່ງຄວາມຮັບຮູ້, ເຂົ້າໃຈຕໍ່ວຽກງານການກໍ່ສ້າງໜ່ວຍພັກປອດໃສ, ເຂັ້ມແຂງ, ໜັກແໜ້ນບໍ່ທັນເລິກເຊິ່ງ, ຄວາມເອົາໃຈໃສ່ ແລະ ຄວາມເປັນເຈົ້າການໃນການສ້າງແຜນການ, ການຈັດຕັ້ງປະຕິບັດແຜນການ ແລະ ການສະຫຼຸບຕີລາຄາປະເມີນຜົນຍັງບໍ່ທັນສູງ, ຍັງເຮັດແບບຮູບການ, ບໍ່ທັນໄດ້ປະຕິບັດຕາມນິຕິກຳທີ່ໄດ້ກຳນົດໄວ້ ຈຶ່ງເຮັດໃຫ້ສະພາບການຈັດຕັ້ງປະຕິບັດບາງດ້ານບໍ່ຖືກຕ້ອງ ແລະ ບໍ່ຮັບປະກັນດ້ານຄຸນນະພາບ. ຈຳນວນໜ່ວຍພັກປອດໃສ, ເຂັ້ມແຂງ, ໜັກແໜ້ນເພີ່ມຂຶ້ນ ແຕ່ຄຸນນະພາບບໍ່ສົມຄູ່;

3). ຄະນະພັກຈຳນວນໜຶ່ງ ການນຳພາ-ຊີ້ນຳຕໍ່ການສ້າງໜ່ວຍພັກປອດໃສ, ເຂັ້ມແຂງ, ໜັກແໜ້ນຍັງບໍ່ທັນໄດ້ດີ ບໍ່ທັນຊີ້ນຳ, ແນະນຳບັນດາໜ່ວຍພັກໃນການຫັນແຜນການປະຈຳປີ ມາເປັນແຜນການເຄື່ອນໄຫວປະຈຳເດືອນຂອງຕົນ, ບໍ່ທັນໄດ້ກຳນົດຕົວຊີ້ວັດແຕ່ລະດ້ານໃຫ້ແທດເໝາະກັບໜ້າທີ່ການເມືອງຂອງຮາກຖານຕົນ; ການປະເມີນໜ່ວຍພັກປອດໃສ, ເຂັ້ມແຂງ, ໜັກແໜ້ນ ບໍ່ໄປຕາມນິຕິກຳ, ບໍ່ອີງໃສ່ແຜນການ ແລະ ຜົນສຳເລັດຕົວຈິງ, ເວລາຕີລາຄາກໍ່ເຫັນອົກເຫັນໃຈກັນ ເຮັດໃຫ້ການຕີລາຄາບໍ່ຊັດເຈນ, ໜ່ວຍພັກຈຳນວນໜຶ່ງທີ່ໄດ້ຮັບໃບຢັ້ງຢືນ ກໍ່ບໍ່ທັນຮັບປະກັນດ້ານຄຸນນະພາບ, ຈຳນວນໜຶ່ງບໍ່ສ້າງແຜນການ, ບໍ່ປະເມີນແຜນການສ້າງໜ່ວຍພັກປອດໃສ, ເຂັ້ມແຂງ, ໜັກແໜ້ນ.

4). ຄະນະພັກຈຳນວນໜຶ່ງ ຄວາມສາມາດນຳພາ ແລະ ກຳລັງແຮງສູ້ຮົບບໍ່ທັນສູງເທົ່າທີ່ຄວນ; ການຜັນຂະຫຍາຍ ແລະ ການນຳພາຈັດຕັ້ງປະຕິບັດແນວທາງ, ແຜນນະໂຍບາຍ, ນະໂຍບາຍ, ກົດລະບຽບພັກ, ກົດໝາຍ ແລະ ລະບຽບການຕ່າງໆຂອງລັດ, ຂອງຄະນະພັກຂັ້ນເທິງ ຍັງບໍ່ທັນເຂັ້ມງວດ ແລະ ປະສິດທິຜົນບໍ່ທັນສູງເທົ່າທີ່ຄວນ; ຈຳນວນບໍ່ໜ້ອຍຍັງບໍ່ທັນໄດ້ເຄື່ອນໄຫວນຳພາ-ຊີ້ນຳ ຕາມພາລະບົດບາດ, ໜ້າທີ່ຂອງຕົນຢ່າງແຂງແຮງ ແລະ ແທ້ຈິງ; ແບບແຜນນຳພາ ແລະ ວິທີເຮັດວຽກຍັງມີການລະເມີດລະບຽບຫຼັກການຂອງພັກ, ເຮັດໃຫ້ມີປະກົດການຫຍໍ້ທໍ້ເກີດຂຶ້ນໃນການຈັດຕັ້ງຮາກຖານພັກ ແລະ ສະມາຊິກພັກ-ພະນັກງານ; ການນຳພາຮ່ວມຊີວິດໜ່ວຍພັກຍັງເຮັດບໍ່ທັນເປັນປົກກະຕິ, ເນື້ອໃນ ການຮ່ວມຊີວິດໜ່ວຍພັກຍັງບໍ່ທັນຮັບປະກັນໄດ້ 3 ລັກສະນະຂອງພັກ; ບໍ່ມີບົດສະຫຼຸບ ແລະ ທິດທາງແຜນການ; ບໍ່ມີມະຕິ, ບໍ່ມີບົດບັນທຶກ; ວຽກງານຂະຫຍາຍພັກບໍ່ທັນໄດ້ເອົາໃຈໃສ່ ແລະ ໃຫ້ຄວາມສຳຄັນເທົ່າທີ່ຄວນ, ປະຕິບັດບໍ່ທັນຖືກຕ້ອງຕາມບາດກ້າວ, ຂັ້ນຕອນ ທີ່ໄດ້ກຳນົດໄວ້ໃນກົດລະບຽບພັກ ແລະ ນິຕິກຳທີ່ກ່ຽວຂ້ອງ, ຈຳນວນສະມາຊິກພັກເພີ່ມຂຶ້ນ ແຕ່ຄຸນນະພາບບໍ່ທັນສູງ, ບາງຮາກຖານພັກການສຶກສາອົບຮົມຈຸດປະສົງເຂົ້າພັກບໍ່ທັນເລິກເຊິ່ງ, ບໍ່ແຫຼມຄົມ, ຈຳນວນໜຶ່ງເຂົ້າພັກ ເພື່ອຜົນປະໂຫຍດ. ການຂະຫຍາຍພັກໃນຖັນແຖວພະນັກງານ- ລັດຖະກອນເພີ່ມຂຶ້ນຫຼາຍ ແຕ່ຢູ່ຮາກຖານບ້ານຂະຫຍາຍໄດ້ໜ້ອຍ; ບາງຮາກຖານພັກບ້ານ ເກີດມີສະພາບ ມະຫາຊົນບໍ່ຢາກເຂົ້າພັກ;

5). ຄະນະພັກຈຳນວນໜຶ່ງຄວາມຮັບຮູ້ເຂົ້າໃຈຕໍ່ເນື້ອໃນການກໍ່ສ້າງ-ປັບປຸງການຈັດຕັ້ງຮາກຖານພັກບໍ່ທັນເລິກເຊິ່ງ, ການນຳພາຈັດຕັ້ງປະຕິບັດຕົວຈິງມີບາງດ້ານບໍ່ສອດຄ່ອງ, ມີລັກສະນະຮູບການ, ແບບຜິວເຜີນ ແລະ ບໍ່ທັນເປັນເອກະພາບ; ການຄຸ້ມຄອງ, ການກຳສະພາບສະມາຊິກພັກ-ພະນັກງານ ທີ່ຢູ່ໃນຄວາມຮັບຜິດຊອບຂອງຕົນຍັງບໍ່ທັນເລິກເຊິ່ງຈຶ່ງເຮັດໃຫ້ການຍົກສູງຄຸນນະພາບການຈັດຕັ້ງຮາກຖານພັກ, ສະມາຊິກພັກ ແລະ ວຽກງານປ້ອງກັນພັກ-ພະນັກງານບາງດ້ານບໍ່ທັນສອດຄ່ອງ, ບໍ່ຮັບປະກັນຄຸນນະພາບດີເທົ່າທີ່ຄວນ; ມີສະມາຊິກພັກຈຳນວນບໍ່ໜ້ອຍ ຄຸນທາດການເມືອງ, ຄຸນສົມບັດສິນທຳປະຕິວັດ, ນ້ຳໃຈຮັບໃຊ້ຊາດ, ຮັບໃຊ້ປະຊາຊົນຫຼຸດລົງ; ພະຍາດອາຍາສິດ, ເອກະຊົນ, ຫ່າງເຫີນຈາກມະຫາຊົນ, ການສວຍໃຊ້ໜ້າທີ່ຕຳແໜ່ງ, ສໍ້ລາດບັງຫຼວງ, ຫາຜົນປະໂຫຍດສ່ວນຕົວ ຍັງມີປະກົດການເກີດຂຶ້ນ. ສະແດງອອກມີສະມາຊິກພັກຖືກວິໄນ 295 ສະຫາຍ, ຍິງ 84 ສະຫາຍ; ຂັ້ນຕິຕຽນ 29 ສະຫາຍ, ຍິງ 5 ສະຫາຍ; ກ່າວເຕືອນ 46 ສະຫາຍ, ຍິງ 6 ສະຫາຍ; ປົດຕຳແໜ່ງພາຍໃນພັກ 18 ສະຫາຍ; ໂຈະການເຄື່ອນໄຫວ 93 ສະຫາຍ; ເອົາອອກຈາກພັກ 109 ສະຫາຍ, ຍິງ 66 ສະຫາຍ;

6). ງົບປະມານຮັບໃຊ້ເຂົ້າໃນວຽກງານກໍ່ສ້າງ, ປັບປຸງການຈັດຕັ້ງຮາກຖານພັກແຕ່ລະຂັ້ນຍັງຈຳກັດ.

ເພື່ອເຮັດໃຫ້ການກໍ່ສ້າງໜ່ວຍພັກປອດໃສ, ເຂັ້ມແຂງ, ໜັກແໜ້ນ ໄດ້ຮັບການປັບປຸງໄປສູ່ຄຸນນະພາບໃໝ່ ແລະ ມີຄຸນນະພາບຕາມທີ່ພັກໄດ້ກຳນົດໄວ້ ຜູ້ຂຽນຂໍມີທັດສະນະແລກປ່ຽນບາງດ້ານດັ່ງນີ້:

ໜຶ່ງ, ອີງການເສນາທີ່ເຮັດວຽກງານກໍ່ສ້າງພັກແຕ່ລະຂັ້ນຕ້ອງຍົກສູງຄວາມຮັບຜິດຊອບໃນການເອົາໃຈໃສ່ນຳພາ-ຊີ້ນຳ, ຊຸກຍູ້, ຕິດຕາມ,ກວດກາຢ່າງໃກ້ຊິດຕໍ່ບັນດາການຈັດຕັ້ງຮາກຖານພັກທີ່ຢູ່ໃນຄວາມຮັບຜິດຊອບຂອງຕົນ ໃນການປະຕິບັດກົດລະບຽບພັກ, ຄຳສັ່ງ ເລກທີ 01 ຂອງກົມການເມືອງສູນກາງພັກ ແລະ ຄຳແນະນຳຂອງຄະນະຈັດຕັ້ງສູນກາງພັກ ເລກທີ 291 ວ່າດ້ວຍການເພີ່ມທະວີການກໍ່ສ້າງໜ່ວຍພັກປອດໃສ, ເຂັ້ມແຂງ, ໜັກແໜ້ນ, ການຈັດຕັ້ງຮາກຖານພັກຕ້ອງຖືເອົາເນື້ອໃນດັ່ງກ່າວເປັນທິດນຳໃນການປະຕິບັດໜ້າທີ່ການເມືອງ ແລະ ພັນທະຂອງໜ່ວຍພັກທີ່ຕ້ອງໄດ້ຈັດຕັ້ງປະຕິບັດ. ພ້ອມດຽວກັນນັ້ນ,

ຄະນະຮັບຜິດຊອບທີ່ຖືກແຕ່ງຕັ້ງຕ້ອງໄດ້ເປັນເຈົ້າການໃນການເກັບກຳຂໍ້ມູນ, ຕິດຕາມ, ຊຸກຍູ້, ກວດກາ ແລະ ປະເມີນຜົນການຈັດຕັ້ງປະຕິບັດໜ້າທີ່ຂອງໜ່ວຍພັກ ແລະ ບຸກຄົນສະມາຊິກພັກ ໂດຍອີງໃສ່ 5 ເນື້ອໃນຂອງການສ້າງໜ່ວຍພັກປອດໃສ, ເຂັ້ມແຂງ, ໜັກແໜ້ນ;

ສອງ, ຕ້ອງຖືເອົາການກໍ່ສ້າງໜ່ວຍພັກປອດໃສ, ເຂັ້ມແຂງ, ໜັກແໜ້ນເປັນໜ້າທີ່ຕົ້ນຕໍຂອງສະມາຊິກພັກ, ບໍ່ໃຫ້ຖືວ່າແມ່ນວຽກຂອງຄະນະພັກຂັ້ນໃດຂັ້ນໜຶ່ງເທົ່ານັ້ນ ຫາກແມ່ນວຽກຂອງສະມາຊິກພັກທຸກສະຫາຍ ທີ່ຕ້ອງພ້ອມກັນຈັດຕັ້ງປະຕິບັດ ເພາະສະນັ້ນ, ຄະນະໜ່ວຍພັກ, ສະມາຊິກພັກທຸກສະຫາຍຕ້ອງມີຄວາມຮັບຜິດຊອບ, ມີນ້ຳໃຈປະຕິວັດຕື່ນຕົວສູງ ພ້ອມກັນນຳພາຈັດຕັ້ງປະຕິບັດວຽກງານດັ່ງກ່າວ ໃຫ້ຖືກຕ້ອງສອດຄ່ອງກັບພາລະບົດບາດ, ສິດ ແລະ ໜ້າທີ່ຂອງໜ່ວຍພັກໃຫ້ຮັບປະກັນໄດ້ຄຸນນະພາບ ແລະ ມີຜົນສຳເລັດຕາມຄາດໝາຍສູ້ຊົນທີ່ວາງໄວ້.

ສາມ, ໜ່ວຍພັກຕ້ອງເປັນເຈົ້າການໃນການຂຶ້ນແຜນຈັດຕັ້ງປະຕິບັດ, ມີສະຫຼຸບຕີລາຄາປະເມີນຜົນການກໍ່ສ້າງໜ່ວຍພັກປອດໃສ, ເຂັ້ມແຂງ, ໜັກແໜ້ນຂອງຕົນ; ການສະຫຼຸບຕີລາຄາປະເມີນຜົນຕ້ອງໃຫ້ເລິກເຊິ່ງ, ພາວະວິໄສ, ສ່ອງແສງເຖິງ ພາວະຄວາມເປັນຈິງຂອງການເຄື່ອນໄຫວຊີ້ນຳ-ນຳພາຂອງໜ່ວຍພັກ ແລະ ສະມາຊິກພັກ, ເອົາໃຈໃສ່ໃນການສະຫຼຸບບົນພື້ນຖານເນື້ອໃນ ແຜນການທີ່ວາງໄວ້, ພ້ອມທັງສ້າງແຜນການຄາດໝາຍສູ້ຊົນໃນປີຕໍ່ໄປ. ພາຍຫຼັງບົດສະຫຼຸບການກໍ່ສ້າງໜ່ວຍພັກປອດໃສ, ເຂັ້ມແຂງ, ໜັກແໜ້ນໄດ້ຮັບຮອງຈາກໜ່ວຍພັກແລ້ວໃຫ້ນຳເອົາໄປຜ່ານອົງການປົກຄອງ, ອົງການແນວລາວສ້າງຊາດ ແລະ ອົງການຈັດຕັ້ງມະຫາຊົນທີ່ຢູ່ໃນຂອບເຂດການນຳພາ ຂອງໜ່ວຍພັກຕົນ ເພື່ອຄວາມເປັນເອກະພາບໃນລະດັບສູງ; ຈາກນັ້ນຈຶ່ງລາຍງານຄະນະຮັບຜິດຊອບ ແລະ ຄະນະພັກຂັ້ນເທິງຖັດຕົນພິຈາລະນາ.

ສີ່, ຄະນະພັກ, ຄະນະກວດກາ ຕ້ອງຍົກສູງຄວາມຮັບຜິດຊອບໃນການກຳແໜ້ນການຈັດຕັ້ງພັກ, ສະມາຊິກພັກຢູ່ໃນຄວາມຮັບຜິດຊອບຂອງຕົນຢ່າງລະອຽດເລິກເຊິ່ງ ເອົາໃຈໃສ່ໃນການຕິດຕາມ, ກວດກາ, ຊຸກຍູ້, ກຳສະພາບ ຄະນະໜ່ວຍພັກ ແລະ ສະມາຊິກພັກ ເຄື່ອນໄຫວຖືກຕ້ອງຕາມກົດລະບຽບພັກ, ພາລະບົດບາດ, ໜ້າທີ່ທີ່ໄດ້ກຳນົດໄວ້ແລ້ວບໍ ເປັນຕົ້ນແມ່ນ: ຄຸນທາດການເມືອງ, ຄຸນສົມບັດສິນທຳປະຕິວັດ, ນ້ຳໃຈຮັບໃຊ້ຊາດ, ຮັບໃຊ້ປະຊາຊົນ ແລະ ຄວາມເສຍສະຫຼະ ເພື່ອສ່ວນລວມ; ພະຍາດອາຍາສິດ, ເອກະຊົນ, ຫ່າງເຫີນ ຈາກມະຫາຊົນ, ການສວຍໃຊ້ໜ້າທີ່ຕຳແໜ່ງ, ສໍ້ລາດບັງຫຼວງ ຫາຜົນປະໂຫຍດ ສ່ວນຕົວຂອງສະມາຊິກພັກ ເພື່ອສະກັ້ນກັນ ແລະ ຊອກຫາວິທີການປັບປຸງ, ແກ້ໄຂຢ່າງເຂັ້ມງວດ, ເດັດຂາດ.

ສັງລວມແລ້ວ, ການກໍ່ສ້າງໜ່ວຍພັກປອດໃສ, ເຂັ້ມແຂງ, ໜັກແໜ້ນ ຕາມ 5 ເນື້ອໃນ ນັ້ນແມ່ນວິທະຍາສາດໃນການປັບປຸງປົວແປງພັກ, ກໍ່ສ້າງພາຍໃນພັກໃຫ້ມີຄວາມເຂັ້ມແຂງ, ໜັກແໜ້ນ ທາງດ້ານການເມືອງ, ຄຸນສົມບັດສິນທຳປະຕິວັດ, ດ້ານແນວຄິດ, ດ້ານການຈັດຕັ້ງ, ດ້ານແບບແຜນນຳພາ, ຄວາມຮັບຜິດຊອບຕໍ່ໜ້າທີ່ການເມືອງ ຂອງຄະນະພັກແຕ່ລະຂັ້ນ. ສະມາຊິກພັກແຕ່ລະສະຫາຍ ຕ້ອງເພີ່ມທະວີຄວາມເປັນເຈົ້າການເສີມຂະຫຍາຍຄວາມຮັບຜິດຊອບໃຫ້ສູງຂຶ້ນກວ່າເກົ່າໃນວຽກງານກໍ່ສ້າງພັກ ເພື່ອພັດທະນາການຈັດຕັ້ງພັກ, ສະມາຊິກພັກໃຫ້ມີຄຸນທາດການເມືອງໜັກແໜ້ນ, ມີຄຸນສົມບັດສິນທຳປະຕິວັດ, ມີແນວຄິດທີ່ປອດໃສ; ມີການຈັດຕັ້ງທີ່ເຂັ້ມແຂງ ແລະ ມີແບບແຜນນຳພາແທດເໝາະຕົວຈິງ ຖ້າຫາກເຮັດໄດ້ຄືແນວນັ້ນກໍ່ຈະເຮັດໃຫ້ໜ່ວຍພັກ ກາຍເປັນແກນນຳທີ່ປອດໃສ, ເຂັ້ມແຂງ, ໜັກແໜ້ນ ຢູ່ໃນລະບົບການເມືອງຢູ່ຂັ້ນຮາກຖານຢ່າງແທ້ຈິງເທື່ອລະກ້າວ...ຯ

ບາງບົດຮຽນ ກ່ຽວກັບການປັບປຸງ ວຽກງານຄຸ້ມຄອງພະນັກງານ ຢູ່ຄະນະຈັດຕັ້ງສູນກາງພັກ

ໂດຍ: ອິນທາ ບຸນຖາວອນ

ການຫັນປ່ຽນວຽກງານພະນັກງານແມ່ນໜຶ່ງໃນບັນຫາສຳຄັນທີ່ສຸດ ພົວພັນເຖິງການກຳອຳນາດ ແລະ ການຄົງຕົວຂອງພັກເຮົາ ກໍ່ຄືຜົນສຳເລັດພາລະກິດປ່ຽນແປງໃໝ່ຮອບດ້ານ ທີ່ມີຫຼັກການຂອງພັກ, ທັງແມ່ນບັນຫາຮີບດ່ວນສະເພາະໜ້າ ແລະ ທັງເປັນບັນຫາຍຸດທະສາດພື້ນຖານຍາວນານ ເພື່ອສ້າງໃຫ້ມີຖັນແຖວພະນັກງານ (ນຳພາ-ຄຸ້ມຄອງ ແລະ ວິຊາການ) ທີ່ພຽບພ້ອມ ແລະ ປ່ຽມລົ້ນໄປດ້ວຍຄຸນທາດການເມືອງ, ຄຸນສົມບັດສິນທຳປະຕິວັດທີ່ໜັກແໜ້ນ, ມີນໍ້າໃຈເສຍສະຫຼະສູງ, ມີແບບແຜນທີ່ດີໃນການດຳລົງຊີວິດ, ມີຈັນຍາບັນ, ຈັນຍາທຳ, ມີຄວາມຮູ້, ຄວາມສາມາດ-ຊຳນິຊຳນານ, ມີແບບແຜນເຮັດວຽກວິທະຍາສາດ ຮັບໃຊ້ປະຊາຊົນ ແລະ ປະເທດຊາດຢ່າງສຸດໃຈ ສືບທອດພາລະກິດປະຕິວັດຂອງພັກ ແລະ ຂອງຊາດໃຫ້ຍືນຍົງຄົງຕົວ.

ວຽກງານພະນັກງານ ເວົ້າລວມ, ເວົ້າສະເພາະວຽກງານຄຸ້ມຄອງພະນັກງານເປັນວຽກງານໜຶ່ງ ທີ່ສຳຄັນ ແລະ ມີຄວາມຈຳເປັນພາວະວິໄສ ທັງແມ່ນຂໍກຸນແຈໜຶ່ງເພື່ອເປັນການປະກອບສ່ວນໃນການຈັດຕັ້ງຜັນຂະຫຍາຍແນວທາງຂອງພັກໄລຍະໃໝ່ ໃຫ້ມີປະສິດທິຜົນ ແມ່ນຂອດວຽກງານໜຶ່ງທີ່ກະທົບເຖິງຄຸນນະພາບຂອງພະນັກງານ ແລະ ພົວພັນໂດຍກົງເຖິງລະບອບການເມືອງ ຖ້າພວກເຮົາເຮັດວຽກງານຄຸ້ມຄອງພະນັກງານໄດ້ດີ ກໍ່ຈະເປັນການເສີມຂະຫຍາຍກຳລັງແຮງຂອງພັກ, ຂອງການຈັດຕັ້ງແຕ່ລະຂັ້ນໃນການປະຕິບັດໜ້າທີ່ວຽກງານ ທັງເປັນການປ້ອງກັນພະນັກງານຫຼົກແຫຼ່ງແກ່ນສານໃຫ້ມີຄວາມປອດໃສ, ເຂັ້ມແຂງ, ໜັກແໜ້ນ ເຮັດໃຫ້ບົດບາດ, ອິດທິພົນຂອງພັກໄດ້ຮັບຄວາມເຊື່ອໝັ້ນຈາກມະຫາຊົນສູງຂຶ້ນ ກົງກັນຂ້າມ ຖ້າຫາກວຽກງານຄຸ້ມຄອງພະນັກງານບໍ່ໄດ້ຮັບການປັບປຸງ, ຂາດປະສິດທິພາບ ຈະເຮັດໃຫ້ສູນເສຍພະນັກງານທີ່ດີ, ເກີດມີຊ່ອງຫວ່າງໃຫ້ບຸກຄົນບໍ່ດີເລັດລອດເຂົ້າໃນອົງການຈັດຕັ້ງພັກ, ລັດ ເຮັດໃຫ້ອົງການຈັດຕັ້ງມີຄວາມອ່ອນແອ ແລະ ກ້າວໄປເຖິງເຮັດໃຫ້ພັກສູນເສຍບົດບາດ ແລະ ອິດທິພົນ. ດ້ວຍບົດບາດ ແລະ ຄວາມສຳຄັນຂອງວຽກງານດັ່ງກ່າວ ກອງປະຊຸມໃຫຍ່ ຜູ້ແທນທົ່ວປະເທດ ຄັ້ງທີ XI ຂອງພັກ ໄດ້ກຳນົດສ້າງການຫັນປ່ຽນຢ່າງແຂງແຮງ ແລະ ເລິກເຊິ່ງໃນວຽກງານພະນັກງານ ກ່ຽວກັບລະບອບຄຸ້ມຄອງ, ຕິດຕາມ, ກວດກາ ແລະ ມາດຕະການທາງວິໄນຕໍ່ພະນັກງານຢ່າງເຂັ້ມງວດໄວ້ວ່າ: ການຄຸ້ມຄອງພະນັກງານ ຕ້ອງໄດ້ຮັບການຈັດຕັ້ງປະຕິບັດຢ່າງເປັນລະບົບ ນັບແຕ່ການເກັບກຳບັນຊີສະຖິຕິ, ປະຫວັດການເຄື່ອນໄຫວ ແລະ ການປ່ຽນແປງ ຂອງສະພາບສະມາຊິກພັກ-ພະນັກງານ ແລະ ລັດຖະກອນ. ຈາກນັ້ນເປັນເຈົ້າການສ້າງ, ປັບປຸງລະບອບ, ລະບຽບການ ທີ່ເປັນລະບົບຮັດກຸມ ເພື່ອສ້າງສະພາບແວດລ້ອມອັນດີ ໃຫ້ພະນັກງານປັບປຸງຕົນເອງ ແລະ ເສີມຂະຫຍາຍການປະດິດສ້າງ,

ຮັບປະກັນປົກປ້ອງພະນັກງານທີ່ກ້າຄິດ, ກ້າເຮັດ, ກ້າບຸກທະລຸ ເພື່ອຜົນປະໂຫຍດລວມ; ໂດຍເລີ່ມຈາກກຳນົດອອກໃນມະຕິກອງປະຊຸມໃຫຍ່ ສະມາຊິກພັກ ຄັ້ງທີ XI ຂອງອົງຄະນະພັກ ຄະນະຈັດຕັ້ງສູນກາງພັກ ໄວ້ວ່າ: ເພີ່ມທະວີນຳພາວຽກງານພະນັກງານ ສືບຕໍ່ສ້າງແຜນກຳນົດພະນັກງານ, ການກຳນົດຕຳແໜ່ງງານພາຍໃນ ຄະນະຈັດຕັ້ງສູນກາງພັກ ເພື່ອເປັນບ່ອນອີງໃຫ້ແກ່ການບຳລຸງ-ກໍ່ສ້າງ ແລະ ສັບຊ້ອນ, ຈັດວາງພະນັກງານ; ຍົກສູງຄວາມຮັບຜິດຊອບຄະນະພັກ, ບັນດາກົມໃນການຕິດຕາມ, ຄຸ້ມຄອງ, ກຳແໜ້ນສະມາຊິກພັກ, ພະນັກງານ-ລັດຖະກອນ ໃຫ້ຮັດກຸມກວ່າເກົ່າ; ເອົາໃຈໃສ່ປະເມີນຜົນການປະຕິບັດໜ້າທີ່ວຽກງານຂອງພະນັກງານ-ລັດຖະກອນ ໃຫ້ເປັນປົກກະຕິ, ແທດຕົວຈິງ ແລະ ຈັດຕັ້ງປະຕິບັດຜົນ ຂອງການປະເມີນໃຫ້ຖືກຕາມກົດໝາຍລັດຖະກອນກຳນົດໄວ້.

ໄລຍະຜ່ານມາ, ຄະນະພັກ, ຄະນະຈັດຕັ້ງສູນກາງພັກ ເອົາໃຈໃສ່ປັບປຸງວຽກງານຄຸ້ມຄອງພະນັກງານໃຫ້ໄປຕາມທິດນຳ ຂອງພັກ, ຖືເອົານິຕິກຳ ຂອງພັກເປັນບ່ອນອີງ ໃນການຈັດຕັ້ງປະຕິບັດການຄຸ້ມຄອງ ແລະ ວາງແຜນຄຸ້ມຄອງໃຫ້ຮັບປະກັນຫຼັກການນຳພາ, ຫຼັກການລວມສູນປະຊາທິປະໄຕ, ມີການປຶກສາຫາລືເປັນໝູ່ຄະນະ; ພ້ອມກັນນັ້ນ, ກໍ່ໄດ້ມີການມອບໝາຍຄວາມຮັບຜິດຊອບເສນາທິການ ທີ່ເຮັດວຽກງານພະນັກງານ, ຄະນະໜ່ວຍພັກທີ່ຂຶ້ນກັບຄວາມຮັບຜິດຊອບເປັນເຈົ້າການໃນການກຳແໜ້ນສະພາບແນວຄິດ, ຕິດຕາມ, ກວດກາການເຄື່ອນໄຫວພະນັກງານທີ່ຢູ່ໃນຄວາມຮັບຜິດຊອບຂອງຕົນ ເປັນຕົ້ນແມ່ນດ້ານຄຸນທາດການເມືອງ, ຄຸນສົມບັດສິນທຳປະຕິວັດ, ປະຫວັດຕົ້ນກຳເນີດ, ປະຫວັດການເຄື່ອນໄຫວ, ການປະຕິບັດໜ້າທີ່ວຽກງານ, ລະດັບຄວາມຮູ້, ຄວາມສາມາດ, ສະພາບຄອບຄົວ ແລະ ຈຸດພິເສດອຸປະນິໄສ, ພອນສະຫວັນຂອງພະນັກງານ; ຊອກໃຫ້ເຫັນ, ດ້ານດີ, ດ້ານຕັ້ງໜ້າ, ຈຸດອ່ອນ, ຂໍ້ຄົງຄ້າງຊອກວິທີທາງໃນການປັບປຸງ, ສ້າງເງື່ອນໄຂໃຫ້ພະນັກງານມີໂອກາດ, ຍົກລະດັບຄວາມຮູ້ດ້ວຍວິທີການຕ່າງໆ ເຮັດໃຫ້ພະນັກງານ-ລັດຖະກອນມີຄວາມຮູ້, ຄວາມສາມາດສົມຄູ່ກັບໜ້າທີ່ ແລະ ຄວາມຮັບຜິດຊອບການເມືອງ, ມີຄວາມໜັກແໜ້ນທາງດ້ານການເມືອງ-ແນວຄິດ, ມີວິຊາສະເພາະທີ່ແນ່ນອນ. ໄປພ້ອມກັນນັ້ນ, ກໍ່ໄດ້ເອົາໃຈໃສ່ເຜີຍແຜ່ເອກະສານວຽກງານກວດກາຈຳນວນໜຶ່ງ, ຄົ້ນຄວ້າ ແລະ ອອກຂໍ້ຕົກລົງ ວ່າດ້ວຍການເຄື່ອນໄຫວ ຂອງຜູ້ເຮັດວຽກງານກວດກາໜ່ວຍພັກ ແລະ ຂອງຄະນະກວດກາ, ແຕ່ງຕັ້ງຄະນະປ້ອງກັນພາຍໃນ, ຄະນະຄົ້ນຄວ້າວິໄນ, ປະຕິບັດໜ້າທີ່ ໃນການຕິດຕາມ, ກວດກາ ການປະເມີນໜ່ວຍພັກ ແລະ ສະມາຊິກພັກ, ປະເມີນລັດຖະກອນ ຜ່ານການຈັດຕັ້ງປະຕິບັດໄດ້ເຮັດໃຫ້ການຈັດຕັ້ງນັບມື້ນັບມີຄວາມເຂັ້ມແຂງເທື່ອລະກ້າວ ສະແດງອອກໄລຍະ 1 ປີຜ່ານມາກໍ່ໄດ້ຄຸ້ມຄອງ-ນຳໃຊ້ ແລະ ບຳລຸງ-ຍົກລະດັບພະນັກງານດ້ວຍຫຼາຍວິທີການເຊັ່ນ: ອະນຸມັດໃຫ້ພະນັກງານໄປເຄື່ອນໄຫວວຽກງານ ຢູ່ກະຊວງ-ອົງການ ແລະ ທ້ອງຖິ່ນ 661 ເທື່ອຄົນ, ຍິງ 132 ເທື່ອຄົນ, ໄປເຄື່ອນໄຫວຕ່າງປະເທດ 30 ເທື່ອຄົນ, ຍິງ 9 ເທື່ອຄົນ, ໄປຍົກລະດັບໄລຍະສັ້ນ ແລະ ຍາວຢູ່ພາຍໃນ ແລະ ຕ່າງປະເທດ 54 ເທື່ອຄົນ, ຍິງ 17 ເທື່ອຄົນ, ໃນນີ້ ໄປຍົກລະດັບທິດສະດີການເມືອງມີ 10 ສະຫາຍ, ຍິງ 1 ສະຫາຍ, ໄປຄົ້ນຄວ້າປະລິນຍາເອກ 1 ສະຫາຍ, ປະລິນຍາໂທ 5 ສະຫາຍ, ຍິງ 1 ສະຫາຍ, ທຽບລະດັບທິດສະດີການເມືອງໃຫ້ 3 ສະຫາຍ, ຍິງ 1 ສະຫາຍ, ຍົກຍ້າຍ, ສັບຊ້ອນພະນັກງານ 12 ສະຫາຍ, ຍິງ 6 ສະຫາຍ, ຮັບລັດຖະກອນໃໝ່ 3 ສະຫາຍ, ຍິງ 1 ສະຫາຍ, ເລື່ອນເປັນລັດຖະກອນສົມບູນ 4 ສະຫາຍ, ຍົກຍ້າຍໄປປະຈຳການຢູ່ອົງການອື່ນ 2 ສະຫາຍ; ໄດ້ປະເມີນພະນັກງານ 2 ສະຫາຍ ທີ່ລົງຮາກຖານ ຢູ່ແຂວງໄຊສົມບູນ; ຮັບເອົາພະນັກງານທີ່ຍົກຍ້າຍມາແຕ່ພາກສ່ວນອື່ນ 1 ສະຫາຍ, ຈັດຕັ້ງການຝຶກອົບຮົມ ໃນຫົວຂໍ້ ການບໍລິ

ຫານລັດ ໃຫ້ພະນັກງານ 30 ສະຫາຍ, ຍິງ 11 ສະຫາຍ, ຝຶກອົບຮົມໃນການເປັນຄູຝຶກ 30 ສະຫາຍ, ຍິງ 5 ສະຫາຍ; ປະຈຸບັນພະນັກງານ-ລັດຖະກອນ ມີ 192 ສະຫາຍ, ຍິງ 83 ສະຫາຍ; ໃນປີ 2023 ໄດ້ດໍາເນີນການປະເມີນການຈັດຕັ້ງປະຕິບັດວຽກງານຂອງພະນັກງານ-ລັດຖະກອນ ໄດ້ລະດັບດີຫຼາຍ 64 ສະຫາຍ, ຍິງ 22 ສະຫາຍ; ດີ 97 ສະຫາຍ, ຍິງ 44 ສະຫາຍ; ກາງ 1 ສະຫາຍ; ອ່ອນ 2 ສະຫາຍ, ຍິງ 1ສະຫາຍ;

ນອກນັ້ນ ໄດ້ຍ້ອງຍໍພະນັກງານ-ລັດຖະກອນທີ່ມີຜົນງານດີເດັ່ນ ໃນການປະຕິບັດໜ້າທີ່ວຽກງານປະຈໍາປີ 2023 ຈໍານວນ 161 ສະຫາຍ, ຍິງ 66 ສະຫາຍ, ໃນນັ້ນປະເພດ I ຈໍານວນ 64 ສະຫາຍ, ຍິງ 22 ສະຫາຍ, ປະເພດ II ຈໍານວນ 97 ສະຫາຍ, ຍິງ 44 ສະຫາຍ. ພ້ອມດຽວກັນນັ້ນ, ກໍ່ໄດ້ປະຕິບັດນະໂຍບາຍໃຫ້ພະນັກງານ-ລັດຖະກອນ ຕາມລະບຽບການເລື່ອນຕໍາແໜ່ງບໍລິຫານຈໍານວນ 10 ສະຫາຍ, ຍິງ 4 ສະຫາຍ (ເປັນຫົວໜ້າກົມ 2 ສະຫາຍ, ຍິງ 1 ສະຫາຍ, ຮອງຫົວໜ້າຫ້ອງການຍິງ 1 ສະຫາຍ, ຫົວໜ້າພະແນກ 6 ສະຫາຍ, ຍິງ 1 ສະຫາຍ ແລະ ຜູ້ຊ່ວຍເລຂານຸການ ຍິງ 1 ສະຫາຍ, ເລື່ອນຊັ້ນ-ຂັ້ນເງິນເດືອນໃຫ້ພະນັກງານ 86 ສະຫາຍ, ດັດແກ້ຕາມໃບປະກາສະນີຍະບັດ 2 ສະຫາຍ, ໄດ້ຮັບເອົາເມຍ ແລະ ລູກພະນັກງານເຂົ້າບັນຊີງົບປະມານ 14 ສະຫາຍ.

ໄປຄຽງຄູ່ກັບຜົນສໍາເລັດທີ່ກ່າວມານັ້ນ, ຖ້າທຽບໃສ່ຄວາມຮຽກຮ້ອງຕ້ອງການຂອງໜ້າທີ່ການເມືອງໃນປະຈຸບັນແລ້ວ ເຫັນວ່າຍັງມີບາງດ້ານທີ່ຈະຕ້ອງໄດ້ສືບຕໍ່ເອົາໃຈໃສ່ຈັດຕັ້ງປະຕິບັດເປັນຕົ້ນ:

1). ການຄຸ້ມຄອງທາງດ້ານການເມືອງ-ແນວຄິດຕໍ່ຖັນແຖວພະນັກງານ-ລັດຖະກອນຍັງບໍ່ທັນໜັກແໜ້ນ ເຂັ້ມແຂງເທົ່າທີ່ຄວນ, ເຖິງວ່າຈະດໍາເນີນເປັນປົກກະຕິ, ຕໍ່ເນື່ອງກໍ່ຕາມ ແຕ່ຍັງເຫັນວ່າ ພະນັກງານ-ລັດຖະກອນຈໍານວນໜຶ່ງຍັງບໍ່ທັນມີການຫັນປ່ຽນຍັງມີລັກສະນະຖືເບົາ, ສະຕິຕໍ່ການຈັດຕັ້ງບໍ່ສູງ, ຍັງບໍ່ທັນຮັກສາໄດ້ຄວາມເປັນແບບຢ່າງ, ຈໍານວນໜຶ່ງຂາດແບບແຜນວິທີການເຮັດວຽກ, ຄຸນນະພາບໃນການປະຕິບັດໜ້າທີ່ການເມືອງບໍ່ທັນສູງ.

2). ພະນັກງານ-ລັດຖະກອນຈໍານວນໜຶ່ງ ຍັງບໍ່ທັນເອົາໃຈໃສ່ໃນການຄົ້ນຄວ້າ, ກໍາແໜ້ນແນວທາງຂອງພັກ, ນິຕິກໍາວຽກງານຈັດຕັ້ງ, ຍັງບໍ່ທັນເປັນເຈົ້າການໃນການປະຕິບັດກົດໝາຍພະນັກງານ-ລັດຖະກອນ ແລະ ລະບຽບການພາຍໃນ ເປັນຕົ້ນແມ່ນການປະຕິບັດໂມງເວລາລັດຖະການ ຍັງບໍ່ທັນໄດ້ດີເທົ່າທີ່ຄວນ, ຄວາມຮັບຜິດຊອບຕໍ່ໜ້າທີ່ການເມືອງບໍ່ທັນສູງ, ພະນັກງານຈໍານວນໜຶ່ງ ຍັງມີແນວຄິດລັງເລ, ຄອນແຄນຂາດຄວາມທຸ່ນທ່ຽງໃນການປະຕິບັດໜ້າທີ່ວຽກງານຂອງຕົນ.

3). ການປະຕິບັດນິຕິກໍາວຽກງານພະນັກງານ ກໍ່ຄືວຽກງານການຄຸ້ມຄອງພະນັກງານ ບາງກົມກອງຍັງບໍ່ທັນປະຕິບັດໄດ້ດີເທົ່າທີ່ຄວນ, ຍັງຖືເບົາ ແລະ ຍັງບໍ່ທັນເຂັ້ມງວດ ແລະ ຮັດກຸມ ໃນບາງກໍລະນີການຈັດຕັ້ງປະຕິບັດບໍ່ໄປຕາມແຜນກໍານົດ ແລະ ແຜນການທີ່ວາງໄວ້, ຂາດການຕິດຕາມ, ຊຸກຍູ້, ການຄຸ້ມຄອງພະນັກງານຍັງບໍ່ທັນໄດ້ເສີມຂະຫຍາຍຫົວຄິດປະດິດສ້າງ, ຍັງບໍ່ທັນສະແດງອອກທາງດ້ານພຶດຕິກໍາ, ພະນັກງານຈໍານວນໜຶ່ງມີຄວາມຮູ້-ຄວາມສາມາດ, ແຕ່ປະສິດທິພາບໃນການເຮັດວຽກບໍ່ທັນສູງ;

4). ການຕິດຕາມ, ກວດກາ ຕໍ່ວຽກງານຄຸ້ມຄອງພະນັກງານ ຍັງບໍ່ທັນເຮັດໄດ້ດີ, ການຕີລາຄາຈັດແບ່ງປະເພດພະນັກງານເຖິງວ່າຈະເຮັດເປັນປົກກະຕິ, ຕໍ່ເນື່ອງກໍ່ຕາມ, ແຕ່ກໍ່ຍັງເກີດມີປະກົດການທາງສຽງຈົ່ມວ່າ, ບໍ່ທັນມີຄວາມເປັນເອກະພາບຕໍ່ການຕັດສິນຂອງຂັ້ນເທິງ.

ເພື່ອເຮັດໃຫ້ວຽກງານການຄຸ້ມຄອງພະນັກງານຢູ່ຄະນະຈັດຕັ້ງສູນກາງພັກ ໄດ້ຮັບການປັບປຸງ ກ້າວໄປສູ່ຄຸນນະພາບໃໝ່ ແລະ ຕອບສະໜອງກັບຄວາມຮຽກຮ້ອງຕ້ອງການຂອງໜ້າທີ່ການເມືອງໃນໄລຍະໃໝ່ ຕາມທັດສະນະຂອງຜູ້ຂຽນຄວນເອົາໃຈໃສ່ບາງ

ວຽກດັ່ງນີ້:

1). ເອົາໃຈໃສ່ຄຸ້ມຄອງທາງດ້ານແນວຄິດຂອງພະນັກງານ ໂດຍເລີ່ມຈາກການເພີ່ມທະວີການນຳພາຂອງຄະນະພັກ, ຄະນະໜ່ວຍພັກໃນການສຶກສາອົບຮົມການເມືອງ-ແນວຄິດຕໍ່ກັບຖັນແຖວພະນັກງານທີ່ຢູ່ໃນຄວາມຮັບຜິດຊອບຂອງຕົນຢ່າງເປັນປົກກະຕິ, ຕໍ່ເນື່ອງ, ດຳເນີນການສຶກສາອົບຮົມດ້ວຍຫຼາຍຮູບການ, ວິທີການພ້ອມທັງຈັດຕັ້ງເຜີຍແຜ່, ເຊື່ອມຊຶມແນວທາງນະໂຍບາຍຂອງພັກ, ບັນດາມະຕິ, ຄຳສັ່ງ, ຂໍ້ກຳນົດກົດໝາຍຕ່າງໆ ທີ່ພົວພັນໂດຍກົງກັບພະນັກງານຢ່າງເປັນປົກກະຕິ ພື່ອເຮັດໃຫ້ເຂົາເຈົ້າຮັບຮູ້ ແລະ ເຂົ້າໃຈຕໍ່ແນວທາງນະໂຍບາຍຂອງພັກ, ກົດໝາຍຂອງລັດ ແລະ ເຊື່ອໝັ້ນຕໍ່ການຈັດຕັ້ງ, ເຊື່ອໝັ້ນຕໍ່ການນຳພາ ແລະ ແນວທາງລວມຂອງພັກທີ່ກຳນົດໄວ້.

2). ເພີ່ມທະວີການຄຸ້ມຄອງພະນັກງານໃຫ້ເຂັ້ມງວດກວ່າເກົ່າ, ປັບປຸງລະບອບການແບ່ງສິດຂອບເຂດຄຸ້ມຄອງພະນັກງານໃຫ້ລະອຽດຈະແຈ້ງ, ປັບປຸງວິທີເຮັດວຽກ, ການປະສານງານລະຫວ່າງອົງການເສນາທິການທີ່ເຮັດວຽກງານພະນັກງານກັບບັນດາກົມ, ຫ້ອງການ ໃຫ້ເປັນເອກະພາບ, ປະຕິບັດຖືກຕ້ອງຕາມລະບຽບການ ແລະ ຫຼັກການຂອງພັກ. ພ້ອມກັນນັ້ນ, ກໍ່ຕ້ອງກຳໃຫ້ໄດ້ດ້ານຄຸນນະພາບ, ຄຸນລັກສະນະ, ດ້ານວິຊາສະເພາະ ແລະ ຈຸດພິເສດພອນສະຫວັນ ຂອງພະນັກງານ ເພື່ອເປັນພື້ນຖານຕີລາຄາ, ຄົ້ນຄວ້າ, ເລືອກເຟັ້ນໃນການກໍ່ສ້າງ, ບຳລຸງ, ສັບຊ້ອນ, ຈັດວາງໃຫ້ຖືກຕ້ອງ, ຊັດເຈນເໝາະສົມກັບຄວາມຮູ້, ຄວາມສາມາດ, ລະດັບວິຊາສະເພາະ ແລະ ພອນສະຫວັນ ຂອງແຕ່ລະຄົນຢ່າງເປັນລະບົບ.

3). ເອົາໃຈໃສ່ໃນການຕິດຕາມ, ກວດກາການຄຸ້ມຄອງພະນັກງານໃຫ້ທົ່ວເຖິງ, ເຂັ້ມງວດ, ມີລະບອບ ແລະ ກົນໄກການຕິດຕາມກວດກາເປັນປົກກະຕິ ເປັນຕົ້ນແມ່ນຄະນະໜ່ວຍພັກ, ຜູ້ເຮັດວຽກງານກວດກາຕ້ອງເປັນເຈົ້າການໃນການຄຸ້ມຄອງ, ຕິດຕາມ, ກວດກາ, ກຳແໜ້ນສະພາບແນວຄິດ, ການເຄື່ອນໄຫວພະນັກງານຂອງຕົນ ພ້ອມທັງເປີດໂອກາດໃຫ້ມະຫາຊົນໄດ້ສະແດງຄວາມຄິດເຫັນຕໍ່ກັບການຕິດຕາມ, ກວດກາ ເພື່ອເຮັດໃຫ້ວຽກງານຄຸ້ມຄອງພະນັກງານໄດ້ຮັບການຈັດຕັ້ງປະຕິບັດຢ່າງມີປະສິດທິພາບ ແລະ ປະສິດທິຜົນ, ຖືກຕ້ອງ, ເຂັ້ມງວດນັບມື້ນັບດີຂຶ້ນເທື່ອລະກ້າວ.

ສັງລວມແລ້ວ, ການປັບປຸງວຽກງານຄຸ້ມຄອງພະນັກງານ ເປັນວຽກໜຶ່ງທີ່ມີຄວາມຈຳເປັນຮີບດ່ວນ, ແລະ ຕ້ອງໄດ້ເຮັດເປັນປົກກະຕິ ແນໃສ່ຕອບສະໜອງຄວາມຮຽກຮ້ອງຕ້ອງການຂອງໜ້າທີ່ການເມືອງ, ເປັນການຍົກສູງປະສິດທິພາບຂອງວຽກງານຄຸ້ມຄອງພະນັກງານ ເຊິ່ງຄະນະພັກແຕ່ລະຂັ້ນຕ້ອງຖືສຳຄັນ ແລະ ຈັດຕັ້ງປະຕິບັດຢ່າງເປັນປະຈຳ ເພາະວ່າພະນັກງານແມ່ນບັນຫາກົກເຄົ້າຕັດສິນຜົນສຳເລັດ ຫຼື ການປະລາໄຊຂອງທຸກວຽກງານ ແລະ ໃຫ້ໄປຕາມທິດທີ່ວ່າ: ຄຸ້ມຄອງວຽກຕ້ອງຄຸ້ມຄອງພະນັກງານໄປພ້ອມ, ທັງສອງດ້ານມີການພົວພັນກັນແບບກາຍ-ອິນຊີທີ່ບໍ່ສາມາດຕັດແຍກອອກຈາກກັນໄດ້.

ຖ້າຫາກຄຸ້ມຄອງພະນັກງານໄດ້ດີ, ມີປະສິດທິພາບ ຮັບປະກັນຄວາມຖືກຕ້ອງ, ໂປ່ງໃສ, ພາວະວິໄສ, ຮອບຄອບ, ຮັດກຸມ, ສະກັດກັ້ນ ແລະ ຕ້ານປະກົດການຫຍໍ້ທໍ້ຕ່າງໆພາຍໃນການຈັດຕັ້ງ ຈະຊ່ວຍເຮັດໃຫ້ພະນັກງານມີຄວາມຮັບຜິດຊອບສູງຂຶ້ນ, ມີຄວາມເຊື່ອໝັ້ນຕໍ່ການຈັດຕັ້ງ, ຕໍ່ແນວທາງຂອງພັກ, ລະບຽບການ, ກົດໝາຍຂອງລັດ ແລະ ເປັນເຈົ້າການໃນການພັດທະນາຕົນເອງ ເພື່ອປະກອບສ່ວນເປັນກຳລັງແຮງຊຸກຍູ້ປົກປັກຮັກສາ ແລະ ສ້າງສາພັດທະນາປະເທດຊາດໃຫ້ເຂັ້ມແຂງ ແລະ ສີວິໄລ ກ້າວຂຶ້ນສັງຄົມນິຍົມເທື່ອລະກ້າວ...ຯ

ການດຳລົງຊີວິດຢ່າງມີແບບແຜນ ເພື່ອຕັ້ງໜ້າ ສ້າງເສດຖະກິດຄອບຄົວເຮັດໃຫ້ຊີວິດການເປັນຢູ່ດີຂຶ້ນ

ໂດຍ: ແສງຄຳ

ຄະຕິການດຳລົງຊີວິດຂອງຄົນເຮົາເພື່ອຄວາມຢູ່ລອດໃນສັງຄົມແມ່ນ ເຮັດຫຍັງກໍ່ໄດ້ ແລະ ສາມາດມີຢູ່ມີກິນໄດ້ ເປັນເຈົ້າຕົນເອງສ້າງຄວາມເຂັ້ມແຂງດ້ວຍຕົນເອງ ໃນການສ້າງເສດຖະກິດຄອບຄົວບົນພື້ນຖານຄວາມຖືກຕ້ອງສອດຄ່ອງກັບແນວທາງ ແລະ ລະບຽບກົດໝາຍຂອງລັດ ຄຽງຄູ່ກັນນັ້ນ ກໍ່ຕ້ອງມີຄວາມບຸກ

ບືນ, ດຸໝັ່ນ, ຂະຫຍັນພຽນ, ໃຊ້ຈ່າຍຢ່າງປະຢັດສົມເຫດສົມຜົນ, ມີແບບແຜນການດຳລົງຊີວິດທີ່ດີ, ມີການປຶກສາຫາລື, ເອກະພາບພາຍໃນຄອບຄົວຈຶ່ງກ້າວໄປເຖິງຜົນສຳເລັດ ດັ່ງຄຳສຸພາສິດທີ່ວ່າ: "ຄວາມພະຍາຍາມຢູ່ໃສ, ຄວາມສຳເລັດຢູ່ບ່ອນນັ້ນ" ດັ່ງສະຫາຍ ສົມໄຊ ເມັກກີ ກໍ່ເປັນຜູ້ໜຶ່ງ ທີ່ມີຄວາມດຸໝັ່ນຂະຫຍັນພຽນ, ມີຄວາມອົດທົນພະຍາຍາມສູງ ແລະ ເປັນຄົນທີ່ມີຫົວຄິດປະດິດສ້າງພັດທະນາຕົນເອງຊອກຫາຄວາມຮູ້ໃໝ່ໆຢູ່ເລື້ອຍໆ ເພື່ອຍົກລະດັບຊີວິດການເປັນຢູ່ຂອງຄອບຄົວຈາກແຕ່ກ່ອນມີຄວາມຫຍຸ້ງຍາກຂາດເຂີນກ້າວໄປສູ່ຄອບຄົວມີຄວາມເຂັ້ມແຂງ, ມີຢູ່ມີກິນ ຈົນກາຍເປັນຄອບຄົວຕົວແບບທີ່ພົ້ນເດັ່ນຂອງບ້ານຫາດ

ເດື່ອ ເມືອງຂວາ ແຂວງຜົ້ງສາລີ.

ສະຫາຍ ສົມໄຊ ເມັກກີ ໄດ້ສ້າງຄອບຄົວກັບນາງ ແສງແກ້ວ ເມັກກີ ໃນປີ 1998 ມີລູກນໍາກັນ 2 ຄົນ ປະຈຸບັນມີແຮງງານຕົ້ນຕໍ 5 ຄົນ (ມີລູກໃພ້ 1 ຄົນ) ແລະ ກໍາມະກອນແປງລົດຊ່ວຍ 1 ຄົນ, ສະຫາຍ ເປັນຄົນພື້ນຖານ ແລະ ຮັບຮູ້ເຂົ້າໃຈສະພາບເງື່ອນໄຂທ້ອງຖິ່ນຂອງຕົນດີ ບວກກັບຄວາມມັກຮັກ ກ່ອນສ້າງຄອບຄົວ, ສະຫາຍໄດ້ຮຽນສ້ອມແປງກົນຈັກ ໃນປີ 1995-1997 ເມື່ອແຕ່ງງານແລ້ວ ຈຶ່ງໄດ້ປຶກສາຫາລືກັບຄອບຄົວເພື່ອພັດທະນາຊີວິດການເປັນຢູ່ ຈຶ່ງໄດ້ຕັດສິນໃຈນໍາໃຊ້ບົດຮຽນທີ່ຮຽນມາເປີດຮ້ານສ້ອມແປງ ໃນໄລຍະເລີ່ມຕົ້ນຍັງບໍ່ທັນມີທຶນຮອນຈຶ່ງໄດ້ສະເໜີຂໍກູ້ຢືມເງິນນໍາທະນາຄານພັດທະນາລາວ ຈໍານວນ 4 ລ້ານກີບ ເພື່ອມາລົງທຶນຕັ້ງຮ້ານສ້ອມແປງລົດ ແລະ ຊື້ອຸປະກອນສ້ອມແປງເຂົ້າຮ້ານ ລາຍຮັບຈາກການສ້ອມແປງກໍ່ພໍແຕ່ກຸ້ມກິນ ແລະ ສົ່ງຕົ້ນທຶນ, ດອກເບ້ຍ ເຫັນວ່າ ສະພາບຄອບຄົວໂດຍລວມແລ້ວຍັງພົບຄວາມຫຍຸ້ງຍາກພໍສົມຄວນ. ຕົກມາຮອດປີ 2007 ພັກ-ລັດຖະບານ ມີແນວທາງນະໂຍບາຍສົ່ງເສີມການຜະລິດເປັນສິນຄ້າ ເປັນຕົ້ນແມ່ນການປູກພືດອຸດສະຫະກໍາ. ດັ່ງນັ້ນ, ຕົນເອງກໍ່ມີຄວາມສົນໃຈ ຈຶ່ງໄດ້ປຶກສາຫາລືກັບຄອບຄົວທົດລອງປູກຢາງພາລາຈໍານວນ 300 ກວ່າຕົ້ນ ຈົນມາຮອດປີ 2015 ຈຶ່ງສາມາດກີດຢາງໄດ້ ເຊິ່ງໄລຍະນັ້ນລາຄາຢາງພາລາ ມີພຽງ 3.500-4.000 ກີບ/ກິໂລ ປີໜຶ່ງສ້າງລາຍຮັບໄດ້ປະມານ 5 ລ້ານກີບກໍ່ຍັງບໍ່ທັນກຸ້ມກິນ ແຕ່ຕົນເອງກໍ່ມີຄວາມເຊື່ອໝັ້ນວ່າຢາງພາລາຈະສາມາດສ້າງລາຍຮັບເຂົ້າຄອບຄົວ ແລະ ຈະສາມາດແກ້ໄຂຄວາມທຸກຍາກໄດ້.

ມາຮອດປີ 2016 ຈຶ່ງໄດ້ຕັດສິນໃຈຢືມເງິນຈາກທະນາຄານນະໂຍບາຍຈໍານວນ 100 ລ້ານກີບ ເພື່ອລົງທຶນຂະຫຍາຍພື້ນທີ່ປູກຢາງພາລາ ໂດຍການຊື້ດິນເພີ່ມ 2 ຕອນ ແລະ ຊື້ເບ້ຍຢາງພາລາມາປູກ, ພ້ອມກັນນັ້ນ, ກໍ່ໄດ້ລົງທຶນໃສ່ການບໍລິການຊື້ເຄື່ອງດົນຕີ, ໂຕະຕັ່ງເຕັ້ນໃຫ້ຄົນເຊົ່າ, ລ້ຽງເປັດໄກ່, ລ້ຽງໝູ ແລະ ຂະຫຍາຍຮ້ານສ້ອມແປງລົດຕື່ມອີກ, ເຮັດໃຫ້ການບໍລິການທຸກຢ່າງຂະຫຍາຍຕົວໄດ້ດີຂຶ້ນເປັນກ້າວໆ ແລະ ສາມາດສ້າງລາຍຮັບເປັນຕົ້ນ ເກັບຜົນຜະລິດຢາງພາລາ, ການບໍລິການເຄື່ອງສຽງ ແລະ ໂຕະ, ຕັ່ງ, ເຕັ້ນ ກໍ່ໄດ້ອອກງານເປັນປະຈໍາ ໃນ 1 ເດືອນສະເລ່ຍໄດ້ຮັບງານເຖິງ 13 ງານ, ການສ້ອມແປງລົດກໍ່ມີລູກຄ້າມາໃຊ້ບໍລິການທຸກມື້; ການລ້ຽງໝູ ແລະ ສັດປີກກໍ່ໄດ້ຮັບຜົນດີ ແລະ ສາມາດຂາຍໄດ້ໃນແຕ່ລະງວດ ເຊິ່ງຜົນໄດ້ຮັບ 1 ປີ, ຫັກຄ່າໃຊ້ຈ່າຍແລ້ວສາມາດສ້າງລາຍຮັບສະເລ່ຍປະມານ 245 ລ້ານກວ່າກີບຕໍ່ປີຄື: ຢາງພາລາມີລາຍຮັບ 24 ລ້ານກວ່າກີບ; ບໍລິການເຄື່ອງສຽງ, ໂຕະ, ຕັ່ງ, ເຕັ້ນ ໄດ້ 150 ລ້ານກວ່າກີບ; ການສ້ອມແປງລົດທຸກປະເພດ 50 ລ້ານກວ່າກີບ, ການລ້ຽງສັດ ໄດ້ 20 ລ້ານກີບ.

ມາຮອດປະຈຸບັນ ສາມາດເວົ້າໄດ້ວ່າ ຄອບຄົວສະຫາຍ ສົມໄຊ ເມັກກີ ເປັນຄອບຄົວທີ່ອຸດົມສົມບູນກາຍເປັນຄອບຄົວຕົວແບບທີ່ດີ ແລະ ພົ້ນເດັ່ນດ້ານການປູກ-ການລ້ຽງ ແລະ ການບໍລິການ, ຈາກຄອບຄົວທີ່ຫຍຸ້ງຍາກຂາດເຂີນ ກາຍເປັນຄອບຄົວທີ່ເຂັ້ມແຂງ ແລະ ອຸດົມສົມບູນ, ມີເຮືອນຢູ່ທີ່ຖາວອນ, ມີພາຫະນະ

ຮັບໃຊ້ລົດໃຫຍ່ 3 ຄັນ, ລົດຈັກ 4 ຄັນ, ມີເງິນເກັບໄວ້ເພື່ອໃຊ້ຈ່າຍພາຍໃນຄອບຄົວ ແລະ ຊື້ດິນໄວ້ອີກ 2 ຕອນ, ສາມາດສົ່ງລູກຊາຍ 2 ຄົນຮຽນຈົບ, ລູກຊາຍກົກຮຽນຄົບອດ ແລະ ລູກຊາຍຫຼ້າຮຽນແປງເຄື່ອງໃຊ້ພາຍໃນຄອບຄົວ (ແປງແອ, ແປງເຄື່ອງໃຊ້ໄຟຟ້າ) ແລະ ສາມາດໃຊ້ຄືນໜີ້ທະນາຄານໄດ້ທັງໝົດ.

ແຕ່ເຖິງຢ່າງໃດກໍ່ຕາມ, ຄຽງຄູ່ກັບຜົນສໍາເລັດທີ່ຕັ້ງໜ້າ ແລະ ເປັນທີ່ເພິ່ງພໍໃຈດັ່ງກ່າວນັ້ນ, ກໍ່ຍັງມີບາງດ້ານທີ່ຍັງພົບຄວາມຫຍຸ້ງຍາກ ເປັນຕົ້ນແມ່ນສະຖານທີ່ປູກປາງພາລາ ແລະ ລ້ຽງສັດຍັງມີໜ້ອຍ ເຮັດໃຫ້ການປູກ-ການລ້ຽງຍັງຈໍາກັດ, ການຂະຫຍາຍພື້ນທີ່ການຜະລິດຍັງບໍ່ທັນໄດ້ຕາມເປົ້າໝາຍ ແລະ ສະຖານທີ່ການບໍລິການສ້ອມແປງຍັງຄັບແຄບ, ບ່ອນໃຫ້ບໍລິການຍັງບໍ່ສະດວກສະບາຍເທົ່າທີ່ຄວນ. ດ້ວຍຄວາມຕັດສິນໃຈສູງໃນທິດຕໍ່ໜ້າສະຫາຍຍັງມີແຜນການໃນການຂະຫຍາຍການປູກການລ້ຽງ ແລະ ກິດຈະການໃຫ້ດີຂຶ້ນກວ່າເກົ່າ ດ້ວຍການຈະຂະຫຍາຍພື້ນທີ່ການປູກປາງພາລາເພີ່ມອີກປະມານ 3 ຕອນ ແລະ ຂະຫຍາຍພື້ນທີ່ໃນການບໍລິການສ້ອມແປງໃຫ້ກວ້າງຂຶ້ນຕື່ມອີກ.

ຈາກຜົນໄດ້ຮັບທີ່ເປັນປະຈັກຕານັ້ນ, ໄດ້ເຮັດໃຫ້ເປັນທີ່ນິຍົມຊົມຊອບ ຂອງຜູ້ໃຊ້ບໍລິການ ແລະ ໄດ້ຮັບຄວາມເຊື່ອໝັ້ນຈາກການຈັດຕັ້ງຂັ້ນເທິງ, ການຈັດຕັ້ງບ້ານ, ພໍ່ແມ່ປະຊາຊົນພາຍໃນບ້ານ, ໄດ້ຮັບມອບໝາຍໜ້າທີ່ສໍາຄັນ ເປັນເລຂາໜ່ວຍພັກ, ນາຍບ້ານ ບ້ານຫາດເດື່ອ ຈົນເຖິງປະຈຸບັນ.

ສະຫາຍຍັງໄດ້ເວົ້າຕື່ມວ່າ: ໃນນາມທີ່ຕົນເອງເປັນເລຂາໜ່ວຍພັກບ້ານ, ນາຍບ້ານ ແລະ ເຮັດທຸລະກິດໄປພ້ອມນັ້ນມັນບໍ່ແມ່ນເລື່ອງງ່າຍ ແຕ່ຕົນເອງກໍ່ໄດ້ແບ່ງເວລາລະຫວ່າງວຽກຄອບຄົວ ແລະ ວຽກພາຍໃນບ້ານແບ່ງເວລາຢ່າງລະອຽດ ເວລາມີວຽກບ້ານການເມືອງ, ມີກອງປະຊຸມຕ່າງໆພາຍໃນບ້ານ ຫຼື ກອງປະຊຸມຢູ່ເມືອງ ກໍ່ໄດ້ແບ່ງໃຫ້ຮອງເລຂາ, ແຕ່ເວລາທີ່ບໍ່ມີວຽກໄປທາງນອກ ຂ້າພະເຈົ້າກໍ່ໄດ້ຮ່ວມເປັນປົກກະຕິ ການເຄື່ອນໄຫວຂອງສະຫາຍ ສົມໄຊ ເມັກກີ ສະແດງໃຫ້ເຫັນເຖິງນໍ້າໃຈຮັກຊາດ, ຮັກບ້ານເກີດເມືອງນອນ ແລະ ຄວາມຕັດສິນໃຈສູງໃນການປະກອບສ່ວນເພື່ອສ່ວນລວມ ເຊິ່ງເປັນອີກໜຶ່ງຕົວແບບການນໍາພາທີ່ດີຂອງເລຂາໜ່ວຍພັກ.

ສັງລວມແລ້ວ ຕໍ່ກັບຜົນສໍາເລັດທີ່ກ່າວມາທັງໝົດນັ້ນ ຍ້ອນຄວາມຕື່ນຕົວທາງການເມືອງ ແລະ ຄວາມເຂົ້າໃຈຕໍ່ແນວທາງນະໂຍບາຍ, ແບບແຜນການດໍາລົງຊີວິດຂອງພັກ, ຄະນະພັກຂັ້ນເທິງ ໄດ້ໃຫ້ການຊີ້ນໍາຢ່າງໃກ້ຊິດຕິດແທດ, ໃຫ້ການຊ່ວຍເຫຼືອ, ຊອກວິທີທາງຕ່າງໆໃນການພັດທະນາ ແລະ ຍົກລະດັບຊີວິດການເປັນຢູ່ຂອງປະຊາຊົນ, ຍ້ອນຄອບຄົວມີຄວາມອົດທົນສູງ, ມີຄວາມດຸໝັ່ນຂະຫຍັນພຽນ, ຕື່ນເດິກລຸກເຊົ້າ, ຮູ້ຈັກແບ່ງເວລາ, ຍ້ອນພາຍໃນຄອບຄົວມີການວາງແຜນ, ມີຄວາມເປັນເອກະພາບ ແລະ ຄວາມຕັດສິນໃຈລົງມືຈັດຕັ້ງປະຕິບັດ; ທີ່ສໍາຄັນຕ້ອງມີຄວາມມັກ, ສຸຂະພາບຕ້ອງແຂງແຮງ ຈຶ່ງຈະສາມາດເຮັດອາຊີບນີ້ໃຫ້ປະສົບຜົນສໍາເລັດໄດ້...ຯ

60 ປີ ແຫ່ງການເຄື່ອນໄຫວ ແລະ ເຕີບໃຫຍ່ຂະຫຍາຍຕົວ ຂອງວຽກງານປ້ອງກັນການເມືອງພາຍໃນພັກກອມມູນິດຫວຽດນາມ

(12.9.1962-12.9.2022)

ແປ ແລະ ຮຽບຮຽງໂດຍ: ຄຳພອນ ລໍສະຫວັດ

ນັບຕັ້ງແຕ່ວັນສ້າງຕັ້ງ ພັກກອມມູນິດຫວຽດນາມ ເປັນຕົ້ນມາ ພັກກອມມູນິດຫວຽດນາມ ໄດ້ຖືເອົາວຽກງານປ້ອງກັນການເມືອງພາຍໃນພັກເປັນວຽກງານທີ່ສຳຄັນ, ພົວພັນເຖິງການຄົງຕົວ, ຂະຫຍາຍຕົວຂອງພັກ; ໃນແຕ່ລະໄລຍະທີ່ການປະຕິວັດຂອງພັກກອມມູນິດຫວຽດນາມໄດ້ກ້າວເຂົ້າສູ່ໄລຍະໃໝ່ ພັກກອມມູນິດຫວຽດນາມຍາມໃດກໍ່ໄດ້ວາງບັນດາແຜນນະໂຍບາຍ, ມາດຕະການກ່ຽວກັບວຽກງານປ້ອງກັນພັກ ເພື່ອປ້ອງກັນການເຄື່ອນໄຫວທາງການເມືອງ, ກົດລະບຽບພັກ, ປ້ອງກັນການຈັດຕັ້ງພັກ, ພະນັກງານ-ສະມາຊິກພັກ; ຕ້ານ ແລະ ສະກັດກັ້ນບັນດາກົນອຸບາຍ, ເລ່ຫຼ່ຽມຂອງພວກອິດທິກຳລັງປໍລະປັກ ທີ່ຫວັງທຳລາຍພັກໃຫ້ສອດຄ່ອງ ແລະ ແທດເໝາະກັບສະພາບການຕົວຈິງ ເຮັດໃຫ້ພັກກອມມູນິດສາມາດນຳພາການປະຕິວັດຂອງຫວຽດນາມໄປສູ່ໄຊຊະນະ.

ໃນໄລຍະຕໍ່ສູ້ກູ້ຊາດ ພາຍໃຕ້ການນຳພາ-ຊີ້ນຳຂອງພັກກອມມູນິດຫວຽດນາມ ພັກໄດ້ເອົາໃຈໃສ່ຊີ້ນຳໂດຍກົງວຽກງານປ້ອງກັນຄວາມສະຫງົບພາຍໃນ ເປັນຕົ້ນແມ່ນປ້ອງກັນການຈັດຕັ້ງ, ປ້ອງກັນຖັນແຖວພະນັກງານ-ສະມາຊິກພັກ ຕ້ານ ແລະ ສະກັດກັ້ນການເຄື່ອນໄຫວ ໃສ່ຮ້າຍປ້າຍສີຂອງກຸ່ມຄົນບໍ່ດີ; ປະຕິການຂາຍຊາດ ແລະ ພວກລ່າເມືອງຂຶ້ນຢ່າງຕໍ່ເນື່ອງ ເພື່ອເຮັດໃຫ້ພັກຮັກສາໄດ້ບົດບາດການນຳພາຂອງຕົນຕະຫຼອດມາ ເພື່ອເຮັດໃຫ້ຈຸດປະສົງ, ເຈດຈຳນົງ ແລະ ທາດແທ້ຂອງພັກບັນລຸຕາມຄາດໝາຍ, ມີຄວາມສາມາດພຽງພໍໃນການນຳພາການປະຕິວັດຫວຽດນາມໃຫ້ໄປສູ່ໄຊຊະນະໃໝ່.

ປີ 1930-1931 ຄະນະບໍລິຫານງານສູນກາງພັກ ໄດ້ປະກາດໃຊ້ບັນດາແຈ້ງການກ່ຽວກັບການປັບປຸງກົງຈັກການຈັດຕັ້ງ ແລະ ການເຄື່ອນໄຫວຂອງພັກຄືນໃໝ່, ວຽກງານກົດລັບ, ປ້ອງກັນກຸ່ມຄົນບໍ່ດີ; ຕົ້ນຕໍແມ່ນວຽກງານປ້ອງກັນພັກ, ປ້ອງກັນກຳລັງປະຕິວັດ, ເປີດເຜີຍພວກລູກແຫຼ້ງຕີນມືຂອງລັດທິຈັກກະພັດ ແລະ ພວກສັກດີນາທີ່ຫວັງແຊກຊຶມເຂົ້າພັກ, ເຂົ້າຖັນແຖວການປະຕິວັດ; ໃນແຈ້ງການດັ່ງກ່າວມີເນື້ອໃນຈິດໃຈຮຽກຮ້ອງໃຫ້ ປຶກສາຫາລືກັນຄືນໃໝ່ກ່ຽວກັບບັນຫາ "ກົດລັບ", ການຈັດຕັ້ງຢູ່ທ້ອງຖິ່ນແຕ່ລະຂັ້ນຕ້ອງມີສະຕິຕື່ນຕົວ, ເປັນເຈົ້າການແກ້ໄຂບັນຫາພາຍໃນການຈັດຕັ້ງ ເພື່ອຮັກສາຮາກຖານຂອງຕົນ .

ຕໍ່ມາ ປີ 1937 ຄະນະບໍລິຫານງານສູນກາງພັກໄດ້ອອກແຈ້ງການຕື່ມອີກກ່ຽວກັບວຽກງານກວດກາພັກ ໂດຍມີເນື້ອໃນຈິດໃຈຮຽກຮ້ອງໃຫ້ກວດກາຄືນປະຫວັດ ແລະ ການເຄື່ອນໄຫວຂອງພະນັກງານ-ສະມາຊິກພັກທຸກສະຫາຍຢ່າງລະອຽດ, ຮອບຄອບ, ເດັດຂາດ ເພື່ອຮັກສາຄວາມປອດໃສຂອງການຈັດຕັ້ງພັກ ແລະ ແກ້ໄຂບັນຫາປະຫວັດການເມືອງ ແລະ ສາຍພົວພັນໃນຄອບຄົວຂອງສະມາຊິກພັກ ແລະ ນາຍທະຫານຈຳນວນໜຶ່ງທີ່ພົວພັນເຖິງລັດທິຈັກກະພັດ, ສັກດີນາໃນໄລຍະການຫັນປ່ຽນຍຸດທະສາດຂອງສົງຄາມ, ກົມການເມືອງສູນກາງພັກ, ຄະນະບໍລິຫານງານສູນກາງພັກຈຶ່ງໄດ້ປະກາດໃຊ້ຄຳສັ່ງ ສະບັບເລກທີ 25-CT/TW ວັນທີ 25 ກັນຍາ 1948 ກ່ຽວກັບວຽກງານປ້ອງກັນບໍ່ໃຫ້ນັກສືບລັກລອບເຂົ້າໃນຖັນແຖວຂອງພັກ ແລະ

ສຳນັກງານ-ອົງການຂອງລັດຖະບານ ຄຳສັ່ງສະບັບດັ່ງກ່າວ ຖືວ່າເປັນເອກະສານສະເພາະ ແລະ ມີຄວາມຄົບຖ້ວນທີ່ສຸດສະບັບທຳອິດຂອງພັກກ່ຽວກັບວຽກງານປ້ອງກັນການເມືອງພາຍໃນພັກ; ພາຍຫຼັງທີ່ພາກເໜືອຂອງຫວຽດນາມໄດ້ຮັບສັນຕິພາບກັບຄືນ ແລະ ພວກຈັກກະພັດອາເມລິກາຢູ່ພາກໃຕ້ຂອງຫວຽດນາມ ກໍ່ຍິ່ງເພີ່ມທະວີການເຄື່ອນໄຫວສືບຂ່າວ, ສອດແນມ, ແຊກຊຶມເຂົ້າຮາກຖານພັກ ເພື່ອຫວັງທຳລາຍພັກ. ເຫດການດັ່ງກ່າວໄດ້ສະແດງໃຫ້ເຫັນວ່າ ຕ້ອງໄດ້ເພີ່ມທະວີວຽກງານປ້ອງກັນພັກ ແລະ ປ້ອງກັນລະບົບການປົກຄອງ. ມາຮອດວັນທີ 20 ມັງກອນ 1962 ກົມການເມືອງ (ໂດຍເລີ່ມຈາກການດຳເນີນການກວດກາຢູ່ບັນດາອົງການນຳພາສູງສຸດ ແລະ ຫ້ອງການ-ສຳນັກງານ, ບັນດາໂຮງຈັກ-ໂຮງງານ, ກົມກອງໃນກຳລັງປະກອບອາວຸດເປັນອັນດັບທຳອິດ). ໂດຍປະຕິບັດຕາມມະຕິ ສະບັບເລກທີ 39-NQ/TW ແລະ ຄຳສັ່ງ ສະບັບເລກທີ 48-CT/TW, ຄະນະເລຂາທິການສູນກາງພັກ ຈຶ່ງໄດ້ປະກາດໃຊ້ມະຕິຕົກລົງ ວ່າດ້ວຍການແຕ່ງຕັ້ງຄະນະກວດກາການເມືອງພາຍໃນຖັນແຖວພະນັກງານ-ສະມາຊິກພັກຂັ້ນສູນກາງ ສະບັບເລກທີ 57-Q/TW ເພື່ອຊ່ວຍຄະນະບໍລິຫານງານສູນກາງພັກໃນການສ້າງແຜນດຳເນີນການກວດກາປະຫວັດການເມືອງຂອງຖັນ

ສະຫາຍເຈືອງທິມາຍ (Trương Thị Mai) ກຳມະການກົມການເມືອງສູນກາງພັກ, ຄະນະເລຂາທິການສູນກາງພັກ, ຫົວໜ້າຄະນະຈັດຕັ້ງສູນກາງພັກ, ຫົວໜ້າຄະນະກຳມະການປ້ອງກັນການເມືອງພາຍໃນສູນກາງພັກ ເປັນປະທານກອງປະຊຸມຄະນະກຳມະການ ເທື່ອທຳອິດ ສະໄໝທີ XIII.

ໄດ້ປະກາດໃຊ້ມະຕິ ສະບັບເລກທີ 39-NQ/TW ແລະ ວັນທີ 4 ມິຖຸນາ 1962 ຄະນະເລຂາທິການສູນກາງພັກ ໄດ້ປະກາດໃຊ້ ຄຳສັ່ງສະບັບເລກທີ 48-CT/TW ໂດຍມີເນື້ອໃນຈິດໃຈຮຽກຮ້ອງໃຫ້ປະຕິບັດດັ່ງນີ້:

ເພື່ອປ້ອງກັນພາຍໃນພັກໃຫ້ໄດ້ດີ ຕ້ອງດຳເນີນການກວດກາພາຍໃນພັກ, ຕ້ອງສ້າງແຜນດຳເນີນການກວດກາພາຍໃນພັກຢ່າງລະອຽດເປັນເທື່ອລະບາດກ້າວ ແລະ ເພື່ອໃຫ້ຮັບຮູ້ປະຫວັດຂອງພະນັກງານ-ລັດຖະກອນແຕ່ລະບຸກຄົນໄດ້ຢ່າງລະອຽດຈະແຈ້ງ; ກວດກາວຽກງານຂະຫຍາຍສະມາຊິກພັກໃໝ່ໃຫ້ລະອຽດ ແຖວພະນັກງານ-ສະມາຊິກພັກຢູ່ບັນດາຫ້ອງການ-ສຳນັກງານແຕ່ລະຂັ້ນ ແລະ ວັນທີ 12 ກັນຍາ 1962 ໄດ້ກາຍເປັນວິລະກຳປະຫວັດສາດ, ເປັນຂີດໝາຍແຫ່ງການກຳເນີດລະບົບການຈັດຕັ້ງຂອງຫ້ອງການ-ສຳນັກງານປ້ອງກັນການເມືອງພາຍໃນພັກ; ທັງໄດ້ສ້າງໜ້າທີ່ ແລະ ຄວາມຮຽກຮ້ອງຕ້ອງການໃໝ່ຫຼາຍຢ່າງໃຫ້ແກ່ວຽກງານປ້ອງກັນພັກ.

ໃນໄລຍະແຕ່ປີ 1975 ເຖິງປະຈຸບັນ, ກ່ອນການຜັນແປຢ່າງສັບສົນຂອງສະພາບການສາກົນ, ໂດຍສະເພາະແມ່ນການ "ຜັນແປທາງດ້ານສັນຕິພາບ" ຂອງ

ພວກອິດທິກຳລັງປໍລະປັກພາຍຫຼັງການແຕກສະຫຼາຍຂອງລະບອບສັງຄົມນິຍົມໃນສະຫະພາບໂຊຫວຽດ ແລະ ເອີຣົບຕາເວັນອອກ; ທ່າອ່ຽງດ້ານການຮ່ວມມື ແລະ ເຊື່ອມໂຍງກັບສາກົນນັບມື້ນັບກວ້າງຂວາງ... ໄດ້ສ້າງບັນຫາໃໝ່ຫຼາຍຢ່າງໃຫ້ແກ່ວຽກງານປ້ອງກັນການເມືອງພາຍໃນພັກ. ໄລຍະນັ້ນ, ນອກຈາກສືບຕໍ່ປະກາດໃຊ້ບັນດາຄຳສັ່ງ, ກົມການເມືອງ ຍັງໄດ້ປະກາດໃຊ້ຂໍ້ກຳນົດກ່ຽວກັບວຽກງານປ້ອງກັນການເມືອງພາຍໃນພັກຕື່ມອີກຈຳນວນ 4 ສະບັບ. ການປະກາດໃຊ້ຂໍ້ກຳນົດດັ່ງກ່າວ ໄດ້ຢັ້ງຢືນໃຫ້ເຫັນເຖິງການພັດທະນາທາງດ້ານຄວາມຮັບຮູ້ຂອງພັກກອມມູນິດຫວຽດນາມກ່ຽວກັບວຽກງານປ້ອງກັນການເມືອງພາຍໃນພັກ. ແຕ່ລະຂໍ້ກຳນົດ ໄດ້ກຳນົດພາລະບົດບາດ, ສິດ ແລະ ໜ້າທີ່, ພາລະກິດປະຫວັດສາດ, ແບບແຜນວິທີການສ້າງຮາກຖານການເມືອງ ເພື່ອຈັດຕັ້ງປະຕິບັດວຽກງານປ້ອງກັນການເມືອງພາຍໃນທົ່ວພັກ ເພື່ອປະກອບສ່ວນກໍ່ສ້າງ, ປັບປຸງ, ບູລະນະການຈັດຕັ້ງ, ຮັກສາສະຖຽນລະພາບພາຍໃນພັກ ແລະ ຍົກສູງກຳລັງແຮງໃນທົ່ວລະບົບການເມືອງ.

ທີ່ຜ່ານມາສາມາດເວົ້າໄດ້ວ່າ: ວຽກງານປ້ອງກັນການເມືອງພາຍໃນພັກໄດ້ຮັບການເອົາໃຈໃສ່ນຳພາ-ຊີ້ນຳຈັດຕັ້ງປະຕິບັດຢ່າງໃກ້ສິດຈາກກົມການເມືອງ, ຄະນະເລຂາທິການສູນກາງພັກ, ບັນດາຄະນະພັກ, ການຈັດຕັ້ງພັກ ໄດ້ຮັບຜົນສຳເລັດອັນໃຫຍ່ຫຼວງຫຼາຍຢ່າງ, ເຮັດໃຫ້ຄວາມຮັບຮູ້ເຂົ້າໃຈກ່ຽວກັບຄວາມໝາຍສຳຄັນວຽກງານປ້ອງກັນການເມືອງພາຍໃນພັກຂອງທົ່ວລະບົບການເມືອງໄດ້ຮັບການຍົກສູງຂຶ້ນເປັນກ້າວໆ ທັງເປັນການສ້າງການຫັນປ່ຽນທີ່ກ້າວໜ້າໃນການຈັດຕັ້ງປະຕິບັດວຽກງານ ສະແດງອອກຢູ່ບ່ອນວ່າ ນິຕິກຳກ່ຽວກັບວຽກງານປ້ອງກັນການເມືອງພາຍໃນພັກໄດ້ຮັບການກວດກາ, ປັບປຸງ, ເພີ່ມເຕີມຄືນໃໝ່ໃຫ້ເໝາະສົມກັບຄວາມຮຽກຮ້ອງຕ້ອງການຂອງສະພາບການໃໝ່.

ເມື່ອບໍ່ດົນມານີ້, ເພື່ອກະກຽມຮັບໃຊ້ວຽກງານບຸກຄະລາກອນໃຫ້ແກ່ກອງປະຊຸມໃຫຍ່ຜູ້ແທນທົ່ວປະເທດ ຄັ້ງທີ XIII ຂອງພັກ ແລະ ກອງປະຊຸມໃຫຍ່ອົງຄະນະພັກແຕ່ລະຂັ້ນ, ບຸກຄະລາກອນຂອງຜູ້ແທນສະພາແຫ່ງຊາດ ສະໄໝທີ XV, ຜູ້ແທນສະພາປະຊາຊົນແຕ່ລະຂັ້ນ ສະໄໝ 2021-2026 ແຕ່ລະຂະແໜງການຕ່າງກໍ່ໄດ້ຮັບການກວດກາມາດຕະຖານການເມືອງ ແລະ ຜ່ານຂະບວນການກວດກາດັ່ງກ່າວ ໄດ້ກວດພົບກໍລະນີທີ່ຍັງບໍ່ຜ່ານມາດຕະຖານການເມືອງ ຈຳນວນຫຼາຍພັນກໍລະນີພວມສະເໜີບໍ່ໃຫ້ພິຈາລະນາແຕ່ງຕັ້ງ ຫຼື ແນະນຳໃຫ້ອອກຮັບສະໝັກເລືອກຕັ້ງ; ພ້ອມດຽວກັນນັ້ນ, ກໍ່ໄດ້ມີການແຕ່ງຕັ້ງຄະນະກວດກາ, ພິສູດ-ຢັ້ງຢືນບັນດາກໍລະນີທີ່ມີບັນຫາການເມືອງດັ່ງກ່າວ ເພື່ອສະເໜີຂັ້ນທີ່ມີສິດ, ອຳນາດພິຈາລະນາຕົກລົງ, ສະຫຼູບບັນຫາການເມືອງຕາມຂໍ້ກຳນົດ ເພື່ອຮັບໃຊ້ແກ່ວຽກງານພະນັກງານ ແລະ ວຽກງານຂະຫຍາຍສະມາຊິກພັກ.

ພັກກອມມູນິດຫວຽດນາມ ໄດ້ຕີລາຄາກ່ຽວກັບສະພາບການຂອງໂລກ ແລະ ພາກພື້ນຍັງຈະສືບຕໍ່ມີການຜັນແປຢ່າງສັບສົນ, ສັນຕິພາບ, ການຮ່ວມມື ແລະ ການພັດທະນາຍັງຄົງເປັນທ່າອ່ຽງຕົ້ນຕໍ, ມີທັງຂໍ້ສະດວກ, ຂໍ້ຫຍຸ້ງຍາກ ແລະ ສິ່ງທ້າທາຍຫຼາຍຢ່າງ; ທັງພວກກຳລັງອິດທິປໍລະປັກບໍ່ຍອມລົດລະຕໍ່ການວາງກົນອຸບາຍ, ເລ່ລ່ຽມ ເພື່ອຫວັງໂຄ່ນລົ້ມລະບອບ, ລົບລ້າງບົດບາດການນຳພາຂອງພັກ, ສ້າງການຜັນແປດ້ານສັນຕິພາບ, ສ້າງກຳລັງເພື່ອກໍ່ການຮ້າຍ, ເພີ່ມທະວີການແຊກຊຶມ, ສອດແນມ ແລະ ສືບຂ່າວສະພາບການພາຍໃນຂອງພັກກອມມູນິດຫວຽດນາມ.

ພາຍໃນປະເທດສືບຕໍ່ຍູ້ແຮງຂະບວນການປະຕິວັດຢ່າງຮອບດ້ານ, ເພີ່ມທະວີວຽກງານກໍ່ສ້າງພັກ ແລະ ລະບົບການເມືອງໃຫ້ປອດໃສ, ເຂັ້ມແຂງ; ຄຽງຄູ່ກັບຂໍ້ສະດວກ, ກໍ່ຍັງມີຂໍ້ຫຍຸ້ງຍາກຫຼາຍຢ່າງ, ສະພາບການເສື່ອມຖອຍທາງດ້ານແນວຄິດ-ການເມືອງ, ຄຸນສົມບັດສິນທຳປະຕິວັດ, ແບບແຜນດຳລົງຊີວິດ, ຜັນແປ

ດ້ວຍຕົນເອງ, ຫັນປ່ຽນດ້ວຍຕົນເອງ ສືບຕໍ່ຜັນແປຢ່າງສັບສົນພາຍໃນຖັນແຖວພະນັກງານ-ສະມາຊິກພັກ, ຫຼາຍຄະດີສໍ້ລາດບັງຫຼວງ, ປະກົດການທຍໍ້ທໍ້ໄດ້ຮັບການຕັດສິນ, ພິພາກສາ. ເຖິງວ່າຈະໄດ້ຮັບຜົນສຳເລັດຫຼາຍຢ່າງໃນວຽກງານປ້ອງກັນການເມືອງພາຍໃນພັກ ແຕ່ກໍ່ຍັງມີຫຼາຍດ້ານທີ່ມີຄວາມຫຍຸ້ງຍາກ, ສັບສົນ ແລະ ຍັງປະຕິບັດບໍ່ທັນໄດ້ດີເທົ່າທີ່ຄວນ; ວຽກງານກຳສະພາບ ແລະ ແກ້ໄຂບັນຫາການເມືອງປະຈຸບັນຢູ່ຫຼາຍຂົງເຂດຍັງມີຂໍ້ຈຳກັດຫຼາຍຢ່າງ.

ສະນັ້ນ, ເພື່ອເຮັດໃຫ້ບັນລຸຕາມຄາດໝາຍທີ່ກຳນົດໄວ້ໃນວຽກງານປ້ອງກັນການເມືອງພາຍໃນພັກ ໃຫ້ໄປສູ່ຄຸນນະພາບໃໝ່ ເຮັດໃຫ້ວຽກງານດັ່ງກ່າວຮັບປະກັນທາງດ້ານຄຸນນະພາບ ແລະ ປະສິດທິພາບ ຄະນະພັກ, ອົງການຈັດຕັ້ງພັກ ແລະ ພະນັກງານ-ສະມາຊິກພັກແຕ່ລະຂັ້ນ ຕ້ອງຍົກສູງຄວາມຮັບຜິດຊອບ ພ້ອມທັງເອົາໃຈໃສ່ເຊື່ອມຊຶມ, ກຳແໜ້ນ ແລະ ປະຕິບັດບັນດາເນື້ອໃນສຳຄັນດັ່ງນີ້:

ໜຶ່ງ: ສືບຕໍ່ເຊື່ອມຊຶມ ແລະ ຍົກສູງຄວາມຮັບຮູ້ກ່ຽວກັບຄວາມໝາຍ, ຄວາມສຳຄັນ ກໍ່ຄືທັດສະນະນຳພາ-ຊີ້ນຳ, ເນື້ອໃນ, ທິດທາງ, ໜ້າທີ່ຂອງວຽກງານປ້ອງກັນການເມືອງພາຍໃນພັກໃນສະພາບການປະຈຸບັນໃຫ້ພະນັກງານ-ສະມາຊິກພັກ ໂດຍສະເພາະແມ່ນ ຄະນະພັກ ແລະ ຜູ້ເປັນຫົວໜ້າ;

ສອງ: ຍົກສູງສະຕິລະວັງຕົວ, ເປັນເຈົ້າການຕ້ານ ແລະ ສະກັດກັ້ນ, ເປີດເຜີຍ, ທຳລາຍກົນອຸບາຍ, ເລ່ຫຼ່ຽມຂອງພວກອິດທິກຳລັງປໍລະປັກ ແລະ ກຸ່ມຄົນບໍ່ດີທີ່ຫວັງທຳລາຍພັກ; ຖືເອົາວຽກງານຕ້ານ ແລະ ສະກັດກັ້ນ, ລົບລ້າງບັນດາຄວາມສ່ຽງພາຍໃນຮາກຖານພັກເປັນໜ້າທີ່ພື້ນຖານຕົ້ນຕໍ ແລະ ປະຕິບັດຢ່າງເປັນປົກກະຕິ; ເພີ່ມທະວີວຽກງານປ້ອງກັນຮາກຖານແນວຄິດຂອງພັກ, ຄຸ້ມຄອງສື່ສິ່ງພິມ, ສື່ມວນຊົນ ແລະ ສື່ສັງຄົມອອນລາຍໃຫ້ໄດ້ດີ ເພື່ອຮັບປະກັນຄວາມສະຫງົບ, ຄວາມປອດໄພທາງອິນເຕີເນັດ; ປະຕິບັດວິໄນຕໍ່ກັບພະນັກງານຜູ້ທີ່ມີແນວຄິດທີ່ບໍ່ຖືກຕ້ອງ, ແບ່ງພັກ, ແຍກພວກ ເພື່ອຫາຜົນປະໂຫຍດເປັນກຸ່ມ, ສວຍໃຊ້ສື່ສັງຄົມອອນລາຍຂຽນຂ່າວບິດເບືອນຄວາມຈິງ, ຍຸຍົງສົ່ງເສີມໃຫ້ເກີດຄວາມແຕກແຍກພາຍໃນພັກ.

ສາມ: ເພີ່ມທະວີສ້າງກົນໄກປະສານສົມທົບໃຫ້ມີປະສິດທິພາບ, ແທດເໝາະກັບສະພາບການຕົວຈິງ ລະຫວ່າງຫ້ອງການ, ສຳນັກງານປ້ອງກັນການເມືອງພາຍໃນພັກ ແລະ ບັນດາຫ້ອງການ, ສຳນັກງານ-ອົງການ, ອົງການປົກຄອງແຕ່ລະຂັ້ນ, ເສີມຂະຫຍາຍບົດບາດ, ຄວາມຮັບຜິດຊອບຂອງແນວໂຮມແຫ່ງຊາດ, ບັນດາການຈັດຕັ້ງການເມືອງ-ສັງຄົມໃນການເຕົ້າໂຮມ, ຂົນຂວາຍປະຊາຊົນເຂົ້າຮ່ວມກໍ່ສ້າງພັກ, ປ້ອງກັນພັກ ແລະ ພະນັກງານ-ສະມາຊິກພັກ;

ສີ່: ສືບຕໍ່ກວດກາ, ປັບປຸງ, ເພີ່ມເຕີມບັນດາຂໍ້ກຳນົດກ່ຽວກັບວຽກງານປ້ອງກັນການເມືອງພາຍໃນພັກ, ວຽກງານຄຸ້ມຄອງພະນັກງານ-ສະມາຊິກພັກໃຫ້ລະອຽດຈະແຈ້ງ ເພື່ອສ້າງເງື່ອນໄຂສະດວກໃຫ້ຄະນະພັກແຕ່ລະຂັ້ນສາມາດກຳໄດ້ສະພາບການຂອງບັນຫາການເມືອງທີ່ກວດກາພົບ ແລະ ເປັນເສນາທິການໃຫ້ຂັ້ນທີ່ມີສິດ, ອຳນາດ ພິຈາລະນາຕົກລົງຊີ້ນຳໄດ້ຢ່າງທັນການ ແລະ ແທດກັບຕົວຈິງ;

ຫ້າ: ເພີ່ມທະວີວຽກງານປ້ອງກັນການເມືອງພາຍໃນພັກ, ກຳແໜ້ນປະຫວັດການເມືອງ, ຖືເອົາປະຫວັດການເມືອງປະຈຸບັນເປັນຫຼັກ; ປະຕິບັດວຽກງານກວດກາ, ພິສູດ-ຢັ້ງຢືນ, ສະຫຼຸບກ່ຽວກັບມາດຕະຖານການເມືອງຂອງພະນັກງານ-ສະມາຊິກພັກໃຫ້ໄດ້ດີ ແລະ ເປັນປົກກະຕິ; ເດັດຂາດຫ້າມບໍ່ໃຫ້ບຸກຄົນທີ່ບໍ່ຜ່ານມາດຕະຖານການເມືອງ, ເສື່ອມຖອຍທາງດ້ານແນວຄິດ-ການເມືອງ, ຄຸນສົມບັດສິນທຳປະຕິວັດ, ແບບແຜນດຳລົງຊີວິດ, ຜັນແປດ້ວຍຕົນເອງ, ຫັນປ່ຽນດ້ວຍຕົນເອງ ເລັດລອດເຂົ້າໃນຖັນແຖວຄະນະພັກ, ພະນັກງານນຳພາ-ຄຸ້ມຄອງແຕ່ລະຂັ້ນ...ຯ

4 ໜ່ວຍພັກທີ່ຂຶ້ນກັບຄະນະພັກຮາກຖານ ບໍລິສັດ ລາວໂທລະຄົມ ມະນາຄົມ ມະຫາຊົນ ໄດ້ດຳເນີນກອງປະຊຸມໃຫຍ່ ສະມາຊິກພັກຂອງຕົນ

ຄະນະໜ່ວຍພັກການຕະຫຼາດ

ຄະນະໜ່ວຍພັກສາຍສົ່ງ

ຄະນະໜ່ວຍພັກຈັດຕັ້ງ-ກວດກາ

ຄະນະໜ່ວຍພັກໂທລະສັບມືຖື

ໃນລະຫວ່າງເດືອນພຶດສະພາ ຫາ ເດືອນມິຖຸນາ 2024 ບັນດາໜ່ວຍພັກທີ່ຂຶ້ນກັບຄະນະພັກຮາກຖານ ບໍລິສັດ ລາວໂທລະຄົມມະນາຄົມ ມະຫາຊົນ ໄດ້ດຳເນີນກອງປະຊຸມໃຫຍ່ ສະມາຊິກພັກຂອງຕົນ, ສຳເລັດ 4 ໜ່ວຍພັກ ໃນຈຳນວນ 9 ໜ່ວຍພັກຄື: ໜ່ວຍພັກການຕະຫຼາດ, ໜ່ວຍພັກສາຍສົ່ງ, ໜ່ວຍພັກຈັດຕັ້ງ-ກວດກາ ແລະ ໜ່ວຍພັກໂທລະສັບມືຖື ໂດຍການເຂົ້າຮ່ວມເປັນປະທານຂອງສະຫາຍ ສຸພົນ ຈັນທະວີໄຊ ກຳມະການພັກກະຊວງເຕັກໂນໂລຊີ ແລະ ການສື່ສານ, ເລຂາຄະນະພັກຮາກຖານ ລລທ, ຕາງໜ້າອົງຄະນະພັກກະຊວງ ເຕັກໂນໂລຊີ ແລະ ການສື່ສານ, ມີສະຫາຍຄະນະພັກຮາກຖານ ລລທ, ຕາງໜ້າບັນດາໜ່ວຍພັກ, 3 ອົງການຈັດຕັ້ງມະຫາຊົນ, ຫ້ອງການພັກ ແລະ ສະມາຊິກພັກສົມບູນຂອງ 4 ໜ່ວຍພັກເຂົ້າຮ່ວມທັງໝົດ.

ຜ່ານການດຳເນີນກອງປະຊຸມ ເລືອກໄດ້ຄະນະ**ໜ່ວຍພັກການຕະຫຼາດ** ຊຸດໃໝ່ 3 ສະຫາຍຄື: 1. ສະຫາຍ ນ. ມະໂນລົມ ເຂັມສຸລິຍະຈັກ ເປັນເລຂາໜ່ວຍພັກ; 2. ສະຫາຍ ນ. ຂັນຕີສຸກ ທຳມະທິໂນ ເປັນຮອງເລຂາ, ທັງເປັນປະທານກວດກາ; 3. ສະຫາຍ ນ. ຈັນທະສອນ ແພງຍະລາດ ເປັນກຳມະການໜ່ວຍພັກ; ເລືອກໄດ້ຄະນະ**ໜ່ວຍພັກສາຍສົ່ງ** ຊຸດໃໝ່ 3 ສະຫາຍຄື: 1. ສະຫາຍ ພູສະຫວັນ ພູມມາວົງ ເປັນເລຂາໜ່ວຍພັກ; 2. ສະຫາຍ ພອນສະຫວັດ ເພັງວິໄລຈິດ ເປັນຮອງເລຂາ, ທັງເປັນປະທານກວດກາ; 3. ສະຫາຍ ຈັນທະສອນ ບູລົມ ເປັນກຳມະການໜ່ວຍພັກ; ເລືອກໄດ້ຄະນະ**ໜ່ວຍພັກຈັດຕັ້ງ-ກວດກາ** ຊຸດໃໝ່ 3 ສະຫາຍຄື: 1. ສະຫາຍ ພອນສະຫວັນ ແພງສົມບັດ ເປັນເລຂາໜ່ວຍພັກ; 2. ສະຫາຍ ນ. ທອງບາງ ອິນທະພົນ ເປັນຮອງເລຂາ, ທັງເປັນປະທານກວດກາ; 3. ສະຫາຍ ນ. ພູວາ ຫຼວງເສນາ ເປັນກຳມະການໜ່ວຍພັກ ແລະ ເລືອກໄດ້ຄະນະ**ໜ່ວຍພັກໂທລະສັບມືຖື** ຊຸດໃໝ່ 3 ສະຫາຍຄື: 1. ສະຫາຍ ພຸດທະວົງ ຄຳມະວົງແກ້ວ ເປັນເລຂາໜ່ວຍພັກ; 2. ສະຫາຍ ດາວວົງ ສົມສະຫວັນ ເປັນຮອງເລຂາ, ທັງເປັນປະທານກວດກາ; 3. ສະຫາຍ ສີປະເສີດ ພິລາວົງ ເປັນກຳມະການໜ່ວຍພັກ.

ວາລະສານກໍ່ສ້າງພັກ, ສະບັບ 265 ປະຈຳປີ 2024/3

❀ ຜູ້ຊີ້ນຳ ❀

ທ່ານ ປອ ວິສຸກ ພົມພິທັກ
ຮອງຫົວໜ້າຄະນະຈັດຕັ້ງສູນກາງພັກ

❀ ຄະນະບັນນາທິການ ❀

ທ່ານ ພອນສະຫວັນ ໄຊຊະນະ ຫົວໜ້າ
ທ່ານ ນ. ແກ້ວຕາ ພັນດານຸວົງ ຮອງ
ທ່ານ ນ. ແກ້ວໃຈ ແສງມີໄຊ ຮອງ
ທ່ານ ຄອນຄຳ ໂສລັດຕະນະວົງ ຮອງ

❀ ບັນນາທິການ, ອອກແບບ ແລະ ຈັດໜ້າ ❀

ທ່ານ ແສງອາລຸນ ຈັນທາທອນ
ທ່ານ ບານ ມູນປະເສີດ
ທ່ານ ນ. ພິດສະໄໝ ວິໄລຮັກ
ທ່ານ ນ. ແສງຄຳ ຈິດຕະວົງ

ຮັບຜິດຊອບບໍລິຫານ-ຈຳໜ່າຍ

ທ່ານ ນ. ແສງອອນ ແກ້ວມີມັນລັດ
ທ່ານ ນ. ແສງແກ້ວ ພົມມະວົງ
ທ່ານ ພອນສະຫວັນ ລາຊະບັນເທົາ (ຈຳໜ່າຍ)
ທ່ານ ນ. ຈັນອາລີຈິດ ສົມພາບມີໄຊ
ທ່ານ ນ. ອານຸລັກ ຈິດຕິລາດ

- ຂໍ້ຕົກລົງ 02/ ຄຈສພ, ທະບຽນພິມ 255/ສມຊ.
- ບກ ໂທ: (021) 840420, 840421.
- E-Mail: Korsangphakmagazine@gmail.com
- ແຈ້ງບົດສົ່ງທາງ E-Mail: 020 59846399

ສາລະບານ

✍ ນາມປາກກາ ✍	✍ ຫົວຂໍ້ບົດ	✍ ໜ້າ
	ທິດສະດີ ແລະ ພຶດຕິກຳ	
ສູນທອນ ທອງຊະນະ	-ບາງເນື້ອໃນມະຕິກອງປະຊຸມຄົບຄະນະກາງສະໄໝຂອງຄະນະບໍລິຫານງານ	1
ປທ ບົວວັນ ວິລະສັກ	-ຍຶດໝັ້ນທິດສະດີມາກ-ເລນິນ ແນວຄິດໄກສອນ ພົມວິຫານ ເປັນພື້ນຖານ	8
ພິດສະໄໝ	-ບົນເສັ້ນທາງປະຕິວັດຂອງປະທານຄຳໄຕສີພັນດອນ ຈາກການເຄື່ອນໄຫວຮັກຊາດ	13
ຄຳເຊັນ ໃບຍອດທັນ	-ປັບປຸງວຽກງານຈັດຕັ້ງພັກ-ພະນັກງານຢູ່ແຂວງຄຳມ່ວນ	17
ສົມໄຊ ຫຼ້າດວງມະນີ	- ການພັດທະນາບຸກຄະລາກອນຢູ່ຄະນະຈັດຕັ້ງແຂວງຊຽງຂວາງ	22
ຄຳຮຸ່ງ ຈັນທະວົງ	- ການຍົກສູງຄຸນນະພາບຖັນແຖວສະມາຊິກພັກຢູ່ຄະນະພົວພັນຕ່າງປະເທດສູນກາງພັກ	25
	ຄົ້ນຄວ້າ-ແລກປ່ຽນ	
ນິວະລັດ ສົມວົງ	- ບາງເນື້ອໃນການຈັດຕັ້ງປະຕິບັດການແກ້ໄຂຄວາມຫຍຸ້ງຍາກທາງດ້ານເສດຖະກິດ	30
ສົມບັດ ຈະເລີນສຸກ	-ບາງທັດສະນະກ່ຽວກັບການກໍ່ສ້າງໜ່ວຍພັກປອດໃສ,ເຂັ້ມແຂງ,ໜັກແໜ້ນ	37
ອິນທາ ບຸນຖາວອນ	-ບາງບົດຮຽນກ່ຽວກັບການປັບປຸງວຽກງານການຄຸ້ມຄອງພະນັກງານ	42
	ວຽກດີຄົນເດັ່ນ	
ແສງຄຳ	-ການດຳລົງຊີວິດຢ່າງມີແບບແຜນເພື່ອຕັ້ງໜ້າສ້າງເສດຖະກິດຄອບຄົວ	46
	ບົດຮຽນຕ່າງປະເທດ	
ຄຳພອນ ລໍສະຫວັດ	- 60 ປີແຫ່ງການເຄື່ອນໄຫວ ແລະ ເຕີບໃຫຍ່ຂະຫຍາຍຕົວຂອງວຽກງານປ້ອງກັນ	49
✍✍✍✍	-ສາລະບານ	54